# ແຜນຈັດປະສົບການ

# ໜ່ວຍຕົວຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 2



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2015

ແຜນຈັດປະສົບການ ໜ່ວຍຕົວຂອງຂ້ອຍ ຊັ້ນອະນຸບານສຶກສາປີທີ 2 2015

ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2015
ສະຫງວນລິຂະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 1011 /ສສກ.ສວສ
ນະຄອນຫຼວງວຽງຈັນ, ວັນທີ 20 MAR 2013

# ຂໍ້ຕົກລົງຂອງລັດຖະມົນຕີ

ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ປຶ້ມປະກອບການຮຽນ-ການສອນ
ສຳລັບຊັ້ນອະນຸບານສຶກສາ ປີທີ 2

ເຫັນຕາມ: ລຳດັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011.

ເຫັນຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ລັດຖະມົນຕີວ່າກະຊວງສຶກສາທິການ ແລະ ກິລາ ຈຶ່ງຕົກລົງ

ມາດຕາ 1: ຮັບຮອງ ແລະ ປະກາດນຳໃຊ້ປຶ້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 2 ສະບັບປະຕິຮູບໃນໂຮງຮຽນອະນຸບານທົ່ວປະເທດ ນັບແຕ່ສົກຮຽນ 2014-2015 ເປັນຕົ້ນໄປ.

ມາດຕາ 2: ໃຫ້ກົມອະນຸບານ ແລະ ປະຖົມສຶກສາ, ກົມສ້າງຄູ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ລັດຖະມົນຕີ

ລີຕູ ບົວປາວ

## ແຜນຈັດປະສົບການ

# ໜ່ວຍຕົວຂອງຂ້ອຍ

## ຊັ້ນອະນຸບານສຶກສາ ປີທີ 2


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ຈຸນລາ ເຂັມທອງ
ພູມະລີ ແສງຈັນນະວົງ
ສະຫວຽນ ສີຍະວັນນຸວົງ
ລັດສະໝີ ບານເມືອງ
ມະນີວອນ ອາດຜາສຸກ
ພູມີ ພົມມະວົງສາ
ອາງຄຳ ບຸດສະດີ
ບົວວອນ ພົງລັດສະໝີ
ອຸດຕະມະ ປັດສຳພັນ
ຈັນທີ ສີສຸພັນ

ກວດແກ້ໂດຍ: ດຣ. ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ສົມບູນ ມາສຸວັນ
ເກດ ພັນລັກ
ສີພາພອນ ມະນີວັນ
ວຽງແກ້ວ ພົມມະຈັກ

ເຂົ້າໜ້າໂດຍ: ຈັນທະໄລ ເກີດຫຼ້າ
ສີວິໄລ ແກ້ວມະນີວັນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2015

# ຄຳນຳ

ແຜນການຈັດປະສົບການໜ່ວຍຕົວຂອງຂ້ອຍຮຽບຮຽງຂຶ້ນເພື່ອໃຫ້ຜູ້ບໍລິຫານການສຶກສານຳໃຊ້ໃນການສ້າງເປັນແຜນການສອນ ແລະ ເປັນບ່ອນອີງໃນການແຕ່ງບົດສອນ.

ເນື້ອໃນຄວາມຮູ້ທີ່ກຳນົດໃນກິດຈະກຳການຫຼິ້ນ ແລະ ຮຽນໃນແຕ່ລະວັນມີລັກສະນະບູລະນາການຄວາມຮູ້ທາງດ້ານພາສາລາວ, ຄະນິດສາດ ແລະ ວິທະຍາສາດທົ່ວໄປ.

ກິດຈະກຳການຫຼິ້ນ ແລະ ຮຽນທີ່ນຳມາກຳນົດໃນແຜນການສອນສະບັບນີ້ປະກອບມີ 6 ກິດຈະກຳເຊັ່ນ: ກິດຈະກຳວົງມົນ, ການເຄື່ອນໄຫວ ແລະ ຈັງຫວະ, ສິລະປະສ້າງສັນ, ເກມການສຶກສາ, ຫຼິ້ນກາງແຈ້ງ ແລະ ຫຼິ້ນຕາມມູມ. ກິດຈະກຳເລົ່ານີ້ສ້າງຂຶ້ນເພື່ອໃຫ້ເດັກໄດ້ຮັບການພັດທະນາຕາມສະມັດຖະພາບການກຽມຄວາມພ້ອມທາງດ້ານຮ່າງກາຍ, ດ້ານອາລົມ ແລະ ຈິດໃຈ, ດ້ານສັງຄົມ, ດ້ານພາສາ ແລະ ດ້ານສະຕິປັນຍາ ກ່ອນເຂົ້າຮຽນໃນຊັ້ນປະຖົມຢ່າງມີຄຸນນະພາບ.

ແຜນການຈັດປະສົບການສະບັບນີ້ເນັ້ນການສອນແບບເອົາເດັກເປັນໃຈກາງ ໂດຍໃຫ້ເດັກໄດ້ປະຕິບັດຕົວຈິງຜ່ານການຫຼິ້ນ ແລະ ຮຽນໂດຍມີຫຼັກການສຳຄັນດັ່ງນີ້:

1. ເດັກໄດ້ຮັບການກຽມຄວາມພ້ອມໃນທຸກດ້ານຕາມຄວາມສາມາດ ແລະ ທຳມະຊາດຂອງເດັກໂດຍຜ່ານການຫຼິ້ນ ແລະ ຮຽນຢ່າງເບີກບານມ່ວນຊື່ນ.
2. ເດັກໄດ້ຮຽນຮູ້ຕາມຄວາມສົນໃຈ, ຄວາມຕ້ອງການຈາກສິ່ງໃກ້ຕົວ, ຈາກທັກສະທີ່ງ່າຍໄປສູ່ທັກສະທີ່ຍາກຕາມລຳດັບ ໂດຍໄດ້ຮຽນຮູ້ເປັນລາຍບຸກຄົນ ແລະ ກຸ່ມ.
3. ການຈັດກິດຈະກຳການຫຼິ້ນ ແລະ ຮຽນແມ່ນໃຫ້ເດັກປະຕິບັດຕົວຈິງ ໂດຍເປີດໂອກາດໃຫ້ເດັກໄດ້ທົດລອງ, ປະດິດສ້າງຢ່າງສ້າງສັນ, ຄິດແກ້ໄຂບັນຫາ ແລະ ຄົ້ນພົບສິ່ງໃໝ່ໆດ້ວຍຕົນເອງ.
4. ການສົ່ງເສີມປະສົບການຊີວິດໄດ້ເນັ້ນເນື້ອໃນທີ່ເດັກຄວນຮຽນຮູ້ຈາກສັງຄົມ, ວັດທະນາທຳ ແລະ ສະພາບແວດລ້ອມທີ່ເດັກອາໄສຢູ່ໃນແຕ່ລະທ້ອງຖິ່ນ ແລະ ໃນນັ້ນໃຫ້ແຕ່ລະໂຮງຮຽນຄຳນຶງເຖິງຄວາມແຕກຕ່າງໃນການຮຽນຮູ້ຂອງເດັກແຕ່ລະຄົນ.

ນອກນັ້ນການນຳໃຊ້ຕົວຈິງໃນການສ້າງແຜນການສອນປະຈຳປີ, ເດືອນ, ອາທິດ ແລະ ປະຈຳວັນ ແລະ ການແຕ່ງບົດສອນຂອງແຕ່ລະໂຮງຮຽນ. ຈຳເປັນທີ່ຄູສອນຕ້ອງສຶກສາເນື້ອໃນທີ່ມີໃນປື້ມຄູ່ມືຄູ 6 ກິດຈະກຳເຊັ່ນ: ການເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ເກມການສຶກສາ, ຫຼິ້ນກາງແຈ້ງ ແລະ ຫຼິ້ນຕາມມູມ. ສຶກສາວິທີການຈັດການຮຽນ-ການສອນ, ວິທີສ້າງຄຳຖາມ ແລະ ການບັນທຶກຂໍ້ມູນການຕິດຕາມພັດທະນາການຈາກປື້ມຄູ່ມືການຈັດກິດຈະກຳການຮຽນ-ການສອນ ແລະ ການຕິດຕາມປະເມີນຜົນ.

ຄະນະຮຽບຮຽງປື້ມແຜນການຈັດປະສົບການສະບັບນີ້ມີຄວາມຍິນດີຮັບຕ້ອນທຸກຄຳຄິດເຫັນທີ່ສ້າງສັນຈາກທ່ານຜູ້ຊົມໃຊ້ເພື່ອນຳໄປປັບປຸງປື້ມດັ່ງກ່າວໃຫ້ນັບມື້ດີຂຶ້ນໃນອະນາຄົດ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


ໜ້າ

**ຈຸດປະສົງລວມ** ........ 1-7

**ຈຸດປະສົງສຳລັບອາທິດທີ 1** ........ 8-10

**1. ໜ່ວຍຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 1**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບຄຳຄ່ອງ ບໍ່ດື່ມນ້ຳດິບ .. 11

ກິດຈະກຳວົງມົນ: ແນະນຳຕົນເອງ ........ 12

ກິດຈະກຳສິລະປະສ້າງສັນ: ທາສີຮູບພາບເຄື່ອງນຸ່ງ ເດັກນ້ອຍຍິງ ແລະ ເດັກຊາຍ ........ 13

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນແນະນຳຊື່ຕົນເອງ ........ 14

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ ເດັກນ້ອຍຍິງ ແລະ ຊາຍ ........ 15

ກິດຈະກຳການຫຼິ້ນຕາມມຸມ: ມຸມຮຽນຮູ້ໃນຫ້ອງຮຽນ ........ 16

**2. ໜ່ວຍຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ ເຄື່ອນໄຫວຕາມຈິນຕະນາການປະກອບຄຳຄ່ອງ ແນະນຳຊື່ ........ 17

ກິດຈະກຳວົງມົນ: ຮ່າງກາຍຂອງຂ້ອຍ ........ 18

ກິດຈະກຳສິລະປະສ້າງສັນ: ປັ້ນເປັນໜ່ວຍມົນ ........ 19

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນແລ່ນໄລ່ຊ້ອນ ........ 20

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບວົງມົນນ້ອຍ ແລະ ໃຫຍ່ ........ 21

ກິດຈະກຳການຫຼິ້ນຕາມມຸມ: ມຸມຮຽນຮູ້ໃນຫ້ອງຮຽນ ........ 22

**3. ໜ່ວຍຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບເພງ ຮ່າງກາຍຂອງຂ້ອຍ 23

ກິດຈະກຳວົງມົນ: ຫົວຂອງຂ້ອຍ ........ 24

ກິດຈະກຳສິລະປະສ້າງສັນ: ປັ້ນເປັນໜ່ວຍມົນນ້ອຍ ແລະ ໃຫຍ່ ........ 25

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນ ແກ້ຳຄຳທວາຍ ........ 26

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນໜ້າທີ່ຂອງ ຫູ, ຕາ, ປາກ ........ 27

ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ........ 28

**4. ໜ່ວຍຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ສັ່ນກະແຊັກ ........ 29

ກິດຈະກຳວົງມົນ: ເລົ່າຄີງຂອງຂ້ອຍ ........ 30

ກິດຈະກຳສິລະປະສ້າງສັນ: ຂີດເສັ້ນຊື່ ຂຶ້ນເທິງລົງລຸ່ມ, ຊ້າຍ ແລະ ຂວາ. ........ 31

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນການປະຕິບັດຕາມໄຟອຳນາດ ........ 32

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບໜ່ວຍມົນສີເຫຼືອງ ແລະ ສີແດງ ........ 33

ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ ........ 34

**5. ໜ່ວຍຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຄຳສັ່ງຕາມຈິນຕະນາການ ........ 35

ກິດຈະກຳວົງມົນ: ແຂນ ແລະ ຂາ ຂອງຂ້ອຍ ........ 36

ກິດຈະກຳສິລະປະສ້າງສັນ: ທາສີຮູບພາບຝ່າມື ........ 37

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນແຂ່ງຂັນ ສົ່ງບານຂ້າມຫົວ ........ 38

ກິດຈະກຳເກມການສຶກສາ: ເກມເກມຕໍ່ຮູບພາບເດັກນ້ອຍໄປຕະຫຼາດກັບແມ່ ........ 39
ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ ........ 40
**6. ໜ່ວຍຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 1**
**ຈຸດປະສົງປະຈຳອາທິດທີ 2 ........ 41-42**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງການອະນາໄມຮ່າງກາຍ ........ 43
ກິດຈະກຳວົງມົນ: ຜົມ ແລະ ໃບໜ້າສະອາດ ........ 44
ກິດຈະກຳສິລະປະສ້າງສັນ: ປັ້ນທໍ່ກົມສັ້ນ ແລະ ຍາວ ........ 45
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ ........ 46
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັບຮູບພາບການສະຜົມ, ຫວີຜົມ, ລ້າງໜ້າ ........ 47
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ເກມການສຶກສາ ........ 48
**7. ໜ່ວຍຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 2**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບຄຳຄ່ອງແຂນຂາຂອງຂ້ອຍ ........ 49
ກິດຈະກຳວົງມົນ: ຕາ ແລະ ຫູສະອາດ ........ 50
ກິດຈະກຳສິລະປະສ້າງສັນ: ທາສີຮູບພາບຜ້າແພມົນ ........ 51
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ມັດຕາທວາຍສຽງ ........ 52
ກິດຈະກຳເກມການສຶກສາ: ເກມຈັດໝວດໝູ່ຮູບວົງມົນ ແລະ ໜ່ວຍມົນ ........ 53
ກິດຈະກຳການຫຼິ້ນຕາມມຸມ: ເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ ........ 54
**8. ໜ່ວຍຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 3**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານຕີບກອງ ........ 55
ກິດຈະກຳວົງມົນ: ດັງສະອາດ ........ 56
ກິດຈະກຳສິລະປະສ້າງສັນ: ຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມ ........ 57
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນລູລີ່ເຂົ້າສານ ........ 58
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັບຮູບພາບໂສ້ງ, ເສື້ອຊຸດສີແດງ, ຊຸດສີຟ້າ ........ 59
ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມສິລະປະສ້າງສັນ ........ 60
**9. ໜ່ວຍຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 4**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວເປັນຜູ້ນຳ ແລະ ຜູ້ປະຕິບັດຕາມຈິນຕະນາການ ........ 61
ກິດຈະກຳວົງມົນ: ປາກ ແລະ ແຂ້ວສະອາດ ........ 62
ກິດຈະກຳສິລະປະສ້າງສັນ: ປັ້ນເປັນຕົວເລກ 2 ........ 63
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນກິນກ້ວຍ ........ 64
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ ເດັກນ້ອຍຖູແຂ້ວ ........ 65
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມອ່ານ ........ 66
**10. ໜ່ວຍຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 5**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບເພງຖູແຂ້ວ ........ 67
ກິດຈະກຳວົງມົນ: ມື ແລະ ຕີນສະອາດ ........ 68
ກິດຈະກຳສິລະປະສ້າງສັນ: ປັ້ນທໍ່ກົມ ແຜ່ນແປປະກອບຮູບເປັນຝ່າມື ........ 69
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ຂີ່ຕະລູດ ........ 70
ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບຂັ້ນຕອນການລ້າງມື ........ 71
ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ ........ 72

**11. ໜ່ວຍຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 1**

**ຈຸດປະສົງປະຈຳອາທິດທີ 3 ........ 73-74**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບຄຳຄ່ອງ ຮັກຄວາມສະອາດ .... 75

ກິດຈະກຳວົງມົນ: ອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດ ........ 76

ກິດຈະກຳສິລະປະສ້າງສັນ: ທາສີຮູບພາບໝາກກ້ຽງ ........ 77

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແບ້ກິນໝາກເຂືອ ........ 78

ກິດຈະກຳເກມການສຶກສາ: ເກມສຶກສາລາຍລະອຽດຮູບພາບ ອາຫານ ແລະ ເຄື່ອງດື່ມ ........ 79

ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ ........ 80

**12. ໜ່ວຍຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມຄຳແນະນຳ ........ 81

ກິດຈະກຳວົງມົນ: ພັກຜ່ອນ ........ 82

ກິດຈະກຳສິລະປະສ້າງສັນ: ປັ້ນເປັນຕົວເລກ 1 ແລະ 2 ........ 83

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນເຊືອງຜ້າ ........ 84

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບເຂົ້າ, ຜັກ, ນ້ຳດື່ມ, ໝາກກ້ວຍ, ປາ, ນົມ ........ 85

ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເກມການສຶກສາ ........ 86

**13. ໜ່ວຍຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານເຄາະ ........ 87

ກິດຈະກຳວົງມົນ: ຂັບຖ່າຍ ........ 88

ກິດຈະກຳສິລະປະສ້າງສັນ: ຂີດເສັ້ນກົ່ງ ........ 89

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ ........ 90

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບໜ່ວຍມົນ 1-3 ........ 91

ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ ........ 92

**14. ໜ່ວຍຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບຄຳຄ່ອງ ກ ໄກ່ ເຖິງ ຕ ຕາ ...... 93

ກິດຈະກຳວົງມົນ: ປ້ອງກັນໄຂ້ຍຸງ ແລະ ຖອກທ້ອງ ........ 94

ກິດຈະກຳສິລະປະສ້າງສັນ: ປັ້ນໜ່ວຍມົນນ້ອຍ ແລະ ໃຫຍ່ວາງສະຫຼັບກັນ ........ 95

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ຣ່າຍນ້ຳໃສ່ແກ້ວ ........ 96

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບການປ້ອງກັນພະຍາດໃນຍາມໜາວ ........ 97

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ ........ 98

**15. ໜ່ວຍຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບເພງປ້ອງກັນພະຍາດ ..... 99

ກິດຈະກຳວົງມົນ: ປ້ອງກັນປອດອັກເສບ ແລະ ໝາກແດງ ........ 100

ກິດຈະກຳສິລະປະສ້າງສັນ: ທາສີຮູບພາບຜ້າພັນຄໍ ........ 101

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ຫຼິ້ນນ້ຳ, ຫຼິ້ນຊາຍ ........ 102

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບເດັກນ້ອຍນອນໃນມຸ້ງ ........ 103

ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມອ່ານ ........ 104

**16. ໜ່ວຍຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 1**
**ຈຸດປະສົງປະຈຳອາທິດທີ 4 .......... 105-106**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບຄຳຄ່ອງ ອາຫານຂອງຫຼານ .......... 107
ກິດຈະກຳວົງມົນ: ອະນາໄມຕົນເອງ .......... 108
ກິດຈະກຳສິລະປະສ້າງສັນ: ປັ້ນເປັນຮູບໜ່ວຍມົນ ແລະ ຮູບທີ່ກົມວາງສະຫຼັບກັນ .......... 109
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ .......... 110
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ ເດັກນ້ອຍອາບນ້ຳ .......... 111
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ .......... 112
**17. ໜ່ວຍຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 2**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ສັ່ນກະແຊັກ .......... 113
ກິດຈະກຳວົງມົນ: ແຕ່ງຕົວ .......... 114
ກິດຈະກຳສິລະປະສ້າງສັນ: ຮ້ອຍທໍ່ດູດສີແດງ ແລະ ສີຟ້າ ສະຫຼັບກັນ .......... 115
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນກັນນຸ່ງເຄື່ອງ .......... 116
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍທາແປ້ງ, ເປຍຜົມ, ນຸ່ງສົ້ນ .......... 117
ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ .......... 118
**18. ໜ່ວຍຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 3**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບເພງ ຂ້ອຍຮັກຄວາມສະອາດ ... 119
ກິດຈະກຳວົງມົນ: ການປະຕິບັດຕົນໃນການກິນ ແລະ ດື່ມ .......... 120
ກິດຈະກຳສິລະປະສ້າງສັນ: ປັ້ນເປັນຮູບຈອກ .......... 121
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແບ້ກິນໝາກເຂືອ .......... 122
ກິດຈະກຳເກມການສຶກສາ: ເກມຈັດໝວດໝູ່ຮູບພາບການປະຕິບັດຕົນໃນການກິນອາຫານ ແລະ ດື່ມນ້ຳ ..... 123
ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມອ່ານ .......... 124
**19. ໜ່ວຍຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 4**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວເປັນຜູ້ນຳ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ ...... 125
ກິດຈະກຳວົງມົນ: ການເກັບມ້ຽນເຄື່ອງ .......... 126
ກິດຈະກຳສິລະປະສ້າງສັນ: ຂີດເສັ້ນວົງມົນຕາມຮອຍຈ້ຳ .......... 127
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ .......... 128
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄູ່ກັນຮູບພາບເກີບ, ໂສ້ງຂາຍາວ, ໂສ້ງຂາສັ້ນ, ໝວກ, ຖົງພາຍ, ເສື້ອ .. 129
ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ .......... 130
**20. ໜ່ວຍຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 5**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບຄຳຄ່ອງ ພັກຜ່ອນ .......... 131
ກິດຈະກຳວົງມົນ: ການປະຕິບັດຕົນ ໃນເວລາຂັບຖ່າຍ .......... 132
ກິດຈະກຳສິລະປະສ້າງສັນ: ຂີດເສັ້ນທົວພະຍັນຊະນະຕົວ ບ ແລະ ຕົວ ຍ .......... 133
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນເຄື່ອງຫຼິ້ນໃນເດີ່ນ .......... 134
ກິດຈະກຳເກມການສຶກສາ: ເກມຈັບຄູ່ຕົວເລກກັບຕົວເລກ 1-3 .......... 135
ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເກມການສຶກສາ .......... 136

ເອກະສານອ້າງອີງ .......... 137

# ຈຸດປະສົງລວມ

## ໜ່ວຍຕົວຂອງຂ້ອຍ

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

1. ເພື່ອພັດທະນາໃຫ້ເດັກມີປະສົບການ ຂັ້ນພື້ນຖານໃນການເຄື່ອນໄຫວແບບຕ່າງ.
2. ເພື່ອພັດທະນາອະໄວຍະວະທຸກພາກສ່ວນຂອງຮ່າງກາຍ ໃຫ້ມີຄວາມສຳພັນກັນຢ່າງຄ່ອງແຄ້ວໃນເວລາເຄື່ອນໄຫວ.
3. ເພື່ອສະໜອງຄວາມຕ້ອງການຕາມທຳມະຊາດ, ຄວາມພໍໃຈ, ຄວາມສົນໃຈ ແລະ ຄວາມພໍໃຈຂອງເດັກ.
4. ເພື່ອສົ່ງເສີມຈິນຕະນາການ ແລະ ຄວາມຄິດສ້າງສັນຂອງເດັກໃນການເຄື່ອນໄຫວຮຽນແບບສັດ.
5. ເພື່ອເຝິກຄວາມມີລະບຽບວິໄນ, ຮຽນຮູ້ຈັງຫວະ ແລະ ພາສາທ່າຕ່າງໆ.
6. ເພື່ອຜ່ອນຄາຍຄວາມເຄັ່ງຕຶງ.
7. ເພື່ອພັດທະນາຄວາມກ້າຫານ ແລະ ກ້າສະແດງອອກ.
8. ເພື່ອພັດທະນາຄວາມມ່ວນຊື່ນໃນເວລາປະຕິບັດກິດຈະກຳຮ່ວມກັບໝູ່ເພື່ອນ.
9. ເພື່ອໃຫ້ເດັກສະແດງທ່າທາງປະກອບຈັງຫວະເພງ, ຄຳຄ່ອງ ແລະ ເລື່ອງທີ່ຄູເລົ່າຢ່າງມ່ວນຊື່ນ ແລະ ຖືກຕ້ອງ.
10. ເພື່ອໃຫ້ເດັກປະຕິບັດຕາມຄຳສັ່ງ, ສຽງສັນຍານ, ຂໍ້ຕົກລົງ, ເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມຢ່າງຖືກຕ້ອງ.



# ກິດຈະກຳວົງມົນ

1. ເພື່ອສົ່ງເສີມໃຫ້ເດັກໄດ້ຮັບການພັດທະນາທາງດ້ານພາສາ.
2. ເພື່ອສົ່ງເສີມໃຫ້ເດັກມີມາລະຍາດໃນການຟັງ, ການເວົ້າ ແລະ ການອ່ານ.
3. ເພື່ອໃຫ້ເດັກສາມາດສັງເກດ ແລະ ຮ່ວມສະແດງຄວາມຄິດເຫັນຢ່າງມີເຫດຜົນ.
4. ເພື່ອສ້າງໃຫ້ເດັກມີສະມາທິແກ່ຍາວຄວາມສົນໃຈເຂົ້າໃນການເຂົ້າຮ່ວມກິດຈະກຳ.
5. ເພື່ອສົ່ງເສີມຄວາມຢາກຮູ້ຢາກເຫັນໃນສິ່ງທີ່ຢູ່ອ້ອມຕົວເດັກ.
6. ເພື່ອໃຫ້ເດັກມີສ່ວນຮ່ວມໃນການທົດລອງ ແລະ ເກີດການຮຽນຮູ້ດ້ວຍຕົນເອງ.
7. ເພື່ອສົ່ງເສີມໃຫ້ເດັກມີຄຸນນະທຳ, ຈະລິຍະທຳ ແລະ ລັກສະນະນິດໄສທີ່ດີ.
8. ເພື່ອໃຫ້ເດັກສາມາດ ເລົ່າຄຳຄ່ອງ ແນະນຳຊື່, ແຂນ ຂາຂອງຂ້ອຍ, ອາຫານຂອງຫຼານ, ພັກຜ່ອນ, ຮັກສາຄວາມສະອາດ ກ ໄກ່ ເຖິງ ຕ ຕາ, ຖ ຖົງ ເຖິງ ພ ພູ.
9. ເພື່ອໃຫ້ເດັກສາມາດ ເວົ້າຄຳທີ່ສຸພາບຕໍ່ໝູ່ເພື່ອນ, ບອກຊື່, ນາມສະກຸນ ແລະ ເພດຂອງຕົນເອງ.
10. ເພື່ອໃຫ້ເດັກສາມາດ ຮ້ອງເພງ: ຮ່າງກາຍຂອງຂ້ອຍ, ຖູແຂ້ວ, ປ້ອງກັນພະຍາດ, ລ້າງມື, ຂ້ອຍຮັກຄວາມສະອາດ ຕາມຈັງຫວະ.
11. ເພື່ອໃຫ້ເດັກສາມາດ ບອກສ່ວນປະກອບຂອງຮ່າງກາຍ, ບອກໜ້າທີ່ຂອງຫູ, ຕາ, ດັງ, ປາກ, ແຂ້ວ ແລະ ລີ້ນ; ບອກຮູບ ວົງມົນ, ຈະຕຸລັດ ແລະ ວາງຮູບເລຂາຄະນິດ ຕາມແບບ.
12. ເພື່ອໃຫ້ເດັກສາມາດ ເວົ້າຄຳສັບຕາມຮູບພາບ: ຜົມ, ຫູ, ໜ້າຜາກ, ຄິ້ວ, ຕາ, ດັງ, ແກ້ມ, ຄາງ, ປາກ, ແຂ້ວ, ຄໍ, ໂສ້ງ, ເສື້ອ, ຖົງປື້ມ, ເກີບ, ຈອກ, ແປງຖູແຂ້ວ, ຢາຖູແຂ້ວ, ປື້ມ ແລະ ສໍດຳ, ຜ້າ, ມຸ້ງ, ໜ້າເອິກ, ບ່າໄຫຼ່, ນົມ ແລະ ກະໂພກ.
13. ເພື່ອໃຫ້ເດັກສາມາດ ບອກສ່ວນປະກອບຂອງ ຫົວ, ເລົາຄີງ, ແຂນ, ຂາ, ບອກໜ້າທີ່ຂອງ ບ່າໄຫຼ່, ມື ແລະ ຕີນ.
14. ເພື່ອໃຫ້ເດັກສາມາດ ປຽບທຽບຈຳນວນເທົ່າກັນ: 1 ຕໍ່ 1, ບອກຕົວເລກ 1-2. ແລະ ບອກຄ່າຈຳນວນ 1-2.
15. ເພື່ອໃຫ້ເດັກສາມາດ ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ: ຝ, ກ, ນ, ຄ ແລະ ຫ, ຜ, ບ, ດ, ປ, ຜ, ມ, ນ, ຂ, ຕ, ຈ ແລະ ອ.
16. ເພື່ອໃຫ້ເດັກສາມາດ ບອກການບົວລະບັດຮັກສາຜົມ, ໃບໜ້າ, ຕາ, ຫູ, ດັງ. ປາກ, ແຂ້ວ, ມື ແລະ ຕີນ; ບອກທິດທາງ ເບື້ອງຊ້າຍ ແລະ ເບື້ອງຂວາ.
17. ເພື່ອໃຫ້ເດັກສາມາດ ຟັງນິທານເລື່ອງ ລ້າງມືໃຫ້ສະອາດ, ນາງນ້ອຍນຸ່ງເຄື່ອງ.
18. ເພື່ອໃຫ້ເດັກສາມາດ ບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.
19. ເພື່ອໃຫ້ເດັກສາມາດ ບອກການປ້ອງກັນຕົນເອງຈາກພະຍາດໄຂ້ຍຸງ, ຖອກທ້ອງ, ອັກເສບ ປອດ ແລະ ໝາກແດງ ບອກການພັກຜ່ອນ ແລະ ຂັບຖ່າຍທີ່ຖືກຕ້ອງ..
20. ເພື່ອໃຫ້ເດັກສາມາດບອກຕໍ່າກວ່າ, ສູງກວ່າ, ເທົ່າກັນ, ສີແດງ, ສີຟ້າ ແລະ ວາງສີຕາມ ແບບ.

21. ເພື່ອໃຫ້ເດັກສາມາດ ເວົ້າເປັນປະໂຫຍກສັ້ນ: ຂ້ອຍນອນໃນມຸ້ງ, ຂ້ອຍອາບນ້ຳ, ຂ້ອຍຖູແຂ້ວ, ຂ້ອຍເຊັດຕົນຕົວ, ລ້າງມືໃສ່ສະບູ, ຖູຫຼັງມື, ຖູຫວ່າງນິ້ວມື, ຖູຝາມື, ຖູຂໍ້ມື, ລ້າງຕີນໃສ່ເກີບ. ກິນອາຫານ, ນ້ຳດື່ມສະອາດ, ນອນພັກຜ່ອນ, ເຂົ້ານອນແຕ່ຫົວຄ່ຳ, ຂ້ອຍຫວີຜົມ, ຂ້ອຍມັດຜົມ, ຂ້ອຍສະຜົມ ແລະ ຂ້ອຍລ້າງໜ້າ.
22. ເພື່ອໃຫ້ເດັກສາມາດ ບອກການອະນາໄມຮ່າງກາຍ ແລະ ການແຕ່ງຕົວດ້ວຍ ຕົນເອງ.
23. ເພື່ອໃຫ້ເດັກສາມາດ ອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນຕົວອັກສອນ: ກ-ຮ; ບອກການປະຕິບັດໃນການກິນອາຫານ ແລະ ດື່ມເຄື່ອງດື່ມ.



## ກິດຈະກຳສິລະປະສ້າງສັນ

1. ເພື່ອພັດທະນາການໃຊ້ກ້າມຊີ້ນມື ແລະ ການໃຊ້ປະສາດສຳພັນລະຫວ່າງກ້າມຊີ້ນມືກັບຕາ.
2. ເຝິກຄວາມແຂງແຮງຂອງກ້າມຊີ້ນ ມື ແລະ ອີ້ງ.
3. ເພື່ອພັດທະນາຄວາມຄິດສ້າງສັນ ແລະ ຈິນຕະນາການ.
4. ສົ່ງເສີມຄຸນນະທຳໃນດ້ານຄວາມອົດທົນ, ຄວາມເອື້ອເຟື້ອເພື່ອແຜ່ ແລະ ຄວາມຮັບຜິດຊອບ.
5. ສົ່ງເສີມໃຫ້ເດັກມີອາລົມດີ ຜ່ອນຄາຍຄວາມເຄັ່ງຕຶງ.
6. ສົ່ງເສີມການປັບຕົວໃນການເຮັດວຽກຮ່ວມກັບຜູ້ອື່ນຢ່າງມີຄວາມສຸກ.
7. ສົ່ງເສີມໃຫ້ເດັກກ້າສະແດງອອກ ແລະ ມີຄວາມໝັ້ນໃຈ.
8. ເຝິກທັກສະການສັງເກດ, ທັກສະການໃຊ້ກ້າມມື, ການຄິດ, ການແກ້ໄຂບັນຫາ, ພັດທະນາພາສາ ແລະ ອະທິບາຍຜົນງານຂອງຕົນໄດ້.
9. ມີຄວາມມ່ວນຊື່ນ ແລະ ຊື່ນຊົມໃນສິ່ງທີ່ຈົບງາມ.



# ກິດຈະກຳການຫຼິ້ນ ກາງແຈ້ງ

1. ບອກຊື່ຕົນເອງ ແລະຈື່ຈຳຊື່ຂອງໝູ່ເພື່ອນ.
2. ຫຼິ້ນແບບຫຼິ້ນຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະປອດໄພ.
3. ເຝິກການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ເຝິກການສັງເກດ ແລະ ການຄົ້ນຄິດ.
4. ເຝິກການມີສະຕິລະວັງຕົວ ແລະ ມີຄວາມວ່ອງໄວ ໃນເວລາຫຼິ້ນແບບຫຼິ້ນ.
5. ແຂ່ງຂັນແກ້ຄຳທວາຍຮ່ວມກັບໝູ່ເພື່ອນ ຢ່າງມ່ວນຊື່ນ.
6. ປະຕິບັດຕົນ ຕາມໄຟອຳນາດໃນເວລາຫຼິ້ນແບບຫຼິ້ນຢ່າງຄ່ອງແຄ້ວ.
7. ເຝິກປະສາດສຳພັນ ລະຫວ່າງມື ແລະ ສາຍຕາ ໃນເວລາຫຼິ້ນແບບຫຼິ້ນ.
8. ເຝິກການຟັງ ແລະ ການຈຳແນກສຽງຕ່າງໆ, ເຝິກຄາງກະໄຕໃນເວລາຫຍ້ຳ.
9. ເຝິກກ້າມຊີ້ນແຂນ, ຂາ ແລະ ລຳຕົວໃຫ້ມີຄວາມແຂງແຮງ ແລະ ຄ່ອງແຄ້ວ.
10. ເຝິກການມີສະຕິລະວັງຕົວ, ການຊົງຕົວ ແລະ ຄ່ອງແຄ້ວໃນເວລາຫຼິ້ນແບບຫຼິ້ນ.



## ກິດຈະກຳເກມການສຶກສາ

1. ພັດທະນາແນວຄິດສ້າງສັນຂອງເດັກຢ່າງມີເຫດຜົນ.
2. ພັດທະນາປະສາດສຳພັນລະຫວ່າງມື ແລະ ສາຍຕາປະສານງານຢ່າງຄອງແຄ້ວ.
3. ພັດທະນາໃຫ້ເດັກມີຄວາມອົດທົນກ້າຫານ, ກ້າສະແດງອອກ ແລະ ມີຄວາມຮັບຜິດຊອບ.
4. ເພື່ອໃຫ້ເດັກຈຳແນກສີຮູບຮ່າງ, ລັກສະນະ, ຂະໜາດ, ຈຳນວນ ແລະ ຕົວເລກ.
5. ເພື່ອໃຫ້ເດັກມີຄວາມສາມັກຄີ, ອົດທົນ ແລະ ແບ່ງປັນເຄື່ອງຫຼິ້ນ ແລະ ເຝິກການເກັບມ້ຽນ.
6. ເພື່ອໃຫ້ເດັກສາມາດຈັບຄູ່ທີ່ຄືກັນຮູບພາບ, ຕໍ່ຮູບພາບ, ຈັດໝວດໝູ່ຮູບພາບ, ເກມສຶກສາ ລາຍລະອຽດຮູບພາບຢ່າງຖືກຕ້ອງ.



# ກິດຈະກຳການຫຼິ້ນຕາມມຸມ

1. ບອກຊື່ ແລະ ສັນຍະລັກໃນມຸມຮຽນຮູ້ ຢ່າງຖືກຕ້ອງ.
2. ບອກຊື່ເຄື່ອງຫຼິ້ນໃນມຸມອ່ານ, ມຸມບົດບາດສົມມຸດ, ມຸມເກມການສຶກສາ, ມຸມສິລະປະສ້າງສັນ, ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມວິທະຍາສາດ ແລະ ທຳມະຊາດ ຢ່າງຖືກຕ້ອງ.
3. ຫຼິ້ນຕາມມຸມອ່ານ, ມຸມສິລະປະສ້າງສັນ, ມຸມເກມການສຶກສາ ຢ່າງຖືກຕ້ອງ.
4. ຫຼິ້ນຕາມມຸມບົດບາດສົມມຸດ, ມຸມເກມການສຶກສາ, ມຸມເຄື່ອນຫຼິ້ນສຳຜັດ, ມຸມສິລະປະສ້າງສັນ, ມຸມອ່ານຢ່າງມ່ວນຊື່ນ.
5. ມີຄວາມອົດທົນ, ມີຄວາມສາມັກຄີໃນເວລາຫຼິ້ນຮ່ວມກັບໝູ່ເພື່ອນ.



# ຈຸດປະສົງສຳລັບອາທິດທີ 1
# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ບໍ່ດື່ມນ້ຳດິບ, ແນະນຳຊື່ ຢ່າງມ່ວນຊື່ນ.
2. ບອກການດື່ມນ້ຳທີ່ສະອາດ ຢ່າງຖືກຕ້ອງ.
3. ສະແດງທ່າທາງຕາມຈິນຕະນາການປະກອບບົດເພງ ຮ່າງກາຍຂອງຂ້ອຍ ຢ່າງມ່ວນຊື່ນ.
4. ບອກຊື່ ນາມສະກຸນ, ເພດຂອງຕົນເອງ ແລະ ໝູ່ເພື່ອນຢ່າງຖືກຕ້ອງ.
5. ສະແດງທ່າທາງຕາມສຽງສັນຍານຢ່າງຖືກຕ້ອງ.
6. ບອກສ່ວນປະກອບຂອງຮ່າງກາຍ ຢ່າງຖືກຕ້ອງ.
7. ປະຕິບັດຄຳສັ່ງ ຕາມຈິນຕະນາການ ຢ່າງມ່ວນຊື່ນ.
8. ບອກສ່ວນປະກອບຂອງສ່ວນຫົວ ເລົາຄີງ ແລະ ໜ້າທີ່ຂອງບ່າໄຫຼ່ ຢ່າງຖືກຕ້ອງ
9. ເຂົ້າຮ່ວມກິດຈະກຳຢ່າງປອດໄພ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ເລົ່າຄຳຄ່ອງ ແນະນຳຊື່; ບອກຊື່, ນາມສະກຸນ, ເພດຂອງຕົນເອງ, ຂອງໝູ່ເພື່ອນ ແລະ ເວົ້າຄຳທີ່ສຸພາບ ຕໍ່ໝູ່ເພື່ອນ.
2. ຮ້ອງເພງ ຮ່າງກາຍຂອງຂ້ອຍ ຕາມຈັງຫວະ.
3. ບອກສ່ວນປະກອບຂອງຮ່າງກາຍ; ບອກໜ້າທີ່ຂອງຫູ, ຕາ, ດັງ, ປາກ, ແຂ້ວ ແລະ ລີ້ນ.
4. ບອກຕົວເລກ 1-2, ບອກຮູບ ວົງມົນ, ຈະຕຸລັດ ແລະ ວາງຮູບເລຂາຄະນິດຕາມ ແບບ.
5. ເວົ້າຄຳສັບຕາມຮູບພາບ: ຜົມ, ຫູ, ໜ້າຜາກ, ຄີ້ວ, ຕາ, ດັງ, ແກ້ມ, ຄາງ, ປາກ, ແຂ້ວ, ໜ້າເອິກ, ຄໍ, ບ່າໄຫຼ່, ນົມ, ທ້ອງ, ແອວ ແລະ ກະໂພກ.
6. ບອກສ່ວນປະກອບຂອງ ຫົວ, ເລົາຄີງ, ແຂນ, ຂາ, ບອກໜ້າທີ່ຂອງບ່າໄຫຼ່, ມື ແລະ ຕີນ.
7. ເລົ່າຄຳຄ່ອງ ແຂນຂາຂອງຂ້ອຍ ແລະ ເວົ້າຄຳສັບໃນບົດຄຳຄ່ອງຕາມຮູບພາບ: ນິ້ວຕີນ,
8. ກົກຂາ, ນິ້ວມື, ແຄ່ງ, ຫົວເຂົ່າ, ຝ່າມື, ກົກແຂນ ແລະ ແຂນສອກ.
9. ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ: ຝ(ຝ່າມື), ກ(ກົກແຂນ), ນ(ນິ້ວມື), ຄ(ແຄ່ງ) ແລະ ຫ(ຫົວເຂົ່າ).

# ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຄວາມແຕກຕ່າງຂອງເດັກນ້ອຍຍິງ ແລະ ຊາຍ.
2. ບອກສ່ວນປະກອບຂອງໃບໜ້າຄົນ ແລະ ຝ່າມື.
3. ບອກທິດຂອງການຂີດເສັ້ນຊື່ຂຶ້ນເທິງ, ລົງລຸ່ມ, ຊ້າຍ ແລະ ຂວາຕາມຮອຍຈ້ຳ.
4. ບອກສ່ວນຕ່າງໆຂອງຮ່າງກາຍ ທີ່ມີຮູບຮ່າງຄ້າຍຄືໜ່ວຍມົນ.
5. ເຝິກປະສາດສຳພັນລະຫວ່າງມືກັບຕາ ໂດຍການທາສີຮູບເຄື່ອງນຸ່ງຂອງເດັກນ້ອຍຍິງ ແລະ ຊາຍ ແລະ ຮູບຝ່າມື ໃຫ້ຈົບງາມ.
6. ເຝິກຄວາມອົດທົນໃນການທາສີ, ການປັ້ນ, ການຂີດຂຽນໃຫ້ສຳເລັດ, ສະອາດຈົບງາມ; ເຝິກຄວາມແຂງແຮງຂອງກ້າມຊີ້ນມື ແລະ ອີ້ງມືໃນການປັ້ນ.
7. ເຝິກຄວາມສາມັກຄີໃນການເກັບມ້ຽນອຸປະກອນ ແລະ ຜົນງານ.
8. ເຝິກຄວາມອົດທົນໃນການຂີດເສັ້ນຊື່ຂຶ້ນເທິງ, ລົງລຸ່ມ, ຊ້າຍ ແລະ ຂວາຕາມຮອຍຈ້ຳ.
9. ເຝິກການຄົ້ນຄິດສ້າງສັນ ແລະ ຈິນຕະນາການ ໃນການປັ້ນ ແລະ ທາສີຮູບ.

# ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ຕົນເອງ ແລະ ຈື່ຈຳຊື່ຂອງໝູ່ເພື່ອນ.
2. ເຝິກການຫຼິ້ນຮ່ວມກັບດ້ວຍຄວາມສາມັກຄີ, ເຝິກການສັງເກດ ແລະ ຄົ້ນຄິດ.
3. ເຄື່ອນຮ່າງກາຍຕາມຈັງຫວະ ແລະ ສຽງເພງຢ່າງຄ່ອງແຄ້ວ.
4. ເຝິກໃຫ້ເດັກມີສະຕິລະວັງຕົວ ແລະ ມີຄວາມວ່ອງໄວ.
5. ເຝິກປະສາດສຳພັນລະຫ່ວາງມື ແລະ ແສງຕາໃນການຫຼິ້ນແບບຫຼິ້ນ.
6. ຫຼິ້ນແບບຫຼິ້ນ ແນະນຳຊື່ຕົນເອງ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
7. ຫຼິ້ນແບບຫຼິ້ນ ໄລ່ຊ້ອນ ຮ່ວມກັບໝູ່ ຢ່າງມ່ວນຊື່ນ ແລະ ປອດໄພ.
8. ຫຼິ້ນແບບຫຼິ້ນ ແຂ່ງຂັນກັນແກ້ຄຳທວາຍຮ່ວມກັບໝູ່ເພື່ອນ ຢ່າງມ່ວນຊື່ນ.
9. ປະຕິບັດຕົນຕາມໄຟອຳນາດ ໄດ້ຢ່າງຄ່ອງແຄ້ວ ແລະ ປອດໄພ ໃນເວລາຫຼິ້ນແບບຫຼິ້ນ.
10. ຫຼິ້ນແບບຫຼິ້ນ ສິ່ງບານຂ້າມຫົວຮ່ວມກັບໝູ່ເພື່ອນ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ຕໍ່ຮູບພາບເກມຕາມຂັ້ນຕອນໃຫ້ເປັນຮູບເດັກນ້ອຍຍິງ ແລະ ຊາຍ ຢ່າງຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບວົງມົນນ້ອຍ ແລະ ໃຫຍ່ຢ່າງຖືກຕ້ອງ.
3. ຈັບຄູ່ທີ່ຄືກັບຮູບພາບໜ້າທີ່ຂອງ ຫູ, ຕາ, ປາກ ຢ່າງຖືກຕ້ອງ.
4. ຈັບຄູ່ທີ່ຄືກັບຮູບໝ່ວຍມົນສີເຫຼືອງ ແລະ ສີແດງຢ່າງຖືກຕ້ອງ.
5. ຕໍ່ຮູບພາບເດັກນ້ອຍໄປຕະຫຼາດກັບແມ່ຢ່າງຖືກຕ້ອງ.
6. ບອກຊື່ຮູບພາບ, ສີ, ຮູບເລຂາຄະນິດ ທີ່ມີຢູ່ໃນເກມ ຢ່າງຖືກຕ້ອງ.
7. ເຝິກຄວາມອົດທົນ, ຄວາມສາມັກຄີໃນການຫຼິ້ນເກມ ແລະ ການເກັບມ້ຽນເກມ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ ແລະ  ສັນຍະລັກຂອງມຸມຮຽນຮູ້ໃນຫ້ອງຮຽນ.
2. ບອກຊື່ເຄື່ອງຫຼິ້ນໃນມຸມອ່ານ, ບົດບາດສົມມຸດ, ມຸມເກມການສຶກສາ, ມຸມສິລະປະສ້າງສັນ
3. ຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນຢ່າງຖືກຕ້ອງ ເປັນລະບຽບ ແລະ ມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບຄຳຄ່ອງ ບໍ່ດື່ມນ້ຳດິບ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການດື່ມນ້ຳທີ່ສະອາດຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

## II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ບໍ່ດື່ມນ້ຳດິບ.

## III. ສື່ການຮຽນ-ການສອນ

1. ກອງ.
2. ບົດຄຳຄ່ອງ ບໍ່ດື່ມນ້ຳດິບ ເບິ່ງປຶ້ມຄູ່ມືຄູ.
3. ການບໍລິຫານລຳຄໍ ແລະ ແຂນ ເບິ່ງປຶ້ມຄູ່ມືຄູ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການດື່ມນ້ຳທີ່ສະອາດ.
2. ໃຫ້ເດັກບໍລິຫານລຳຄໍ ແລະ ແຂນ: ທ່າໝູນລຳຄໍ ແລະ ທ່າແກວ່ງແຂນ.
3. ໃຫ້ເດັກຍ່າງແກວ່ງແຂນຊ້າໆ.
4. ຄູສາທິດການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ບໍ່ດື່ມນ້ຳດິບ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນອນພັບແຂນຂຶ້ນ ແລະ ລົງ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
8. ສຶກສາອົບຮົມເດັກກ່ຽວກັບມາລະຍາດໃນເວລາສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການດື່ມນ້ຳທີ່ສະອາດ.
2. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
3. ຄວາມປອດໄພ ໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກໍາວົງມົນ

## ຫົວຂໍ້: ແນະນໍາຕົນເອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄໍາຄ່ອງ ແນະນໍາຊື່ ປະກອບທ່າທາງຕາມຈິນຕະນາການ.
2. ບອກຊື່, ນາມສະກຸນ ແລະ ເພດຂອງຕົນເອງ, ຂອງໝູ່ເພື່ອນ ຢ່າງຖືກຕ້ອງ.
3. ເວົ້າຄໍາທີ່ສຸພາບຕໍ່ຜູ້ໃຫຍ່ ແລະ ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການເລົ່າຄໍາຄ່ອງ ແນະນໍາຊື່.
2. ຊື່, ນາມສະກຸນ, ເພດຂອງຕົນເອງ ແລະ ໝູ່ເພື່ອນ.
3. ການເວົ້າຄໍາທີ່ສຸພາບຕໍ່ຜູ້ໃຫຍ່ ແລະ ໝູ່ເພື່ອນ: ທ້າວ, ນາງ, ເຈົ້າ, ໂດຍ, ຂ້ອຍ ແລະ ຫຼານ.

### III. ສື່ການຮຽນ-ການສອນ

1. ບົດຄໍາຄ່ອງ ແນະນໍາຊື່ (ເບິ່ງປຶ້ມຄູ່ມືຄູ).
2. ຮູບພາບ ເດັກນ້ອຍຍິງ,  ຊາຍ ຫຼື ຕົວເດັກນ້ອຍຍິງ ແລະ ຊາຍ ໃນຫ້ອງຮຽນ.

### IV. ກິດຈະກໍາການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບ ແລະ ສ້າງຄວາມລຶ້ງເຄີຍກັບເດັກທຸກຄົນໃນຫ້ອງ.
2. ຄູສະເໜີຊື່ຄໍາຄ່ອງ, ໃຫ້ເດັກເລົ່າຄໍາຄ່ອງ, ຄູສົນທະນາຖາມ-ຕອບກ່ຽວກັບຊື່, ນາມສະກຸນ ເພດຂອງຕົນເອງ ແລະ ໝູ່ເພື່ອນ.
3. ໃຫ້ເດັກບອກຊື່ ນາມສະກຸນ ເພດຂອງຕົນເອງ ແລະ ໝູ່ເພື່ອນ.
4. ໃຫ້ເດັກເລົ່າຄໍາຄ່ອງຄືນ, ບອກຊື່, ນາມສະກຸນ, ເພດຂອງຕົນເອງ ແລະ ໝູ່ເພື່ອນ.
5. ໃຫ້ເດັກເຝິກປະຕິບັດການໃຊ້ເວົ້າຄໍາທີ່ສຸພາບຕໍ່ໝູ່ເພື່ອນ: ທ້າວ, ນາງ, ເຈົ້າ ແລະ ຂ້ອຍ.
6. ສຶກສາອົບຮົມເດັກກ່ຽວກັບການຊ່ວຍເຫຼືອກັນລະຫວ່າງເດັກນ້ອຍຍິງ, ຊາຍ,  ເວົ້າຄໍາສຸພາບ: ທ້າວ, ນາງ, ເຈົ້າ, ໂດຍ, ຂ້ອຍ ແລະ ຫຼານ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການເລົ່າຄໍາຄ່ອງແນະນໍາຊື່ ແລະ ຕອບຄໍາຖາມກ່ຽວກັບເນື້ອໃນຂອງຄໍາຄ່ອງ.
2. ຄວາມຖືກຕ້ອງໃນການບອກຊື່, ນາມສະກຸນ, ເພດຂອງຕົນເອງ ແລະ ຂອງໝູ່ເພື່ອນ.
3. ການສະແດງເວົ້າຄໍາທີ່ສຸພາບຕໍ່ຜູ້ໃຫຍ່ ແລະ ໝູ່ເພື່ອນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ທາສີຮູບພາບເຄື່ອງນຸ່ງເດັກນ້ອຍຍິງ ແລະ ຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຄວາມແຕກຕ່າງ ເຄື່ອງນຸ່ງຂອງເດັກນ້ອຍຍິງ ແລະ ເດັກຊາຍ.
2. ຝຶກປະສາດສຳພັນລະຫວ່າງມືກັບຕາ ໂດຍການທາສີຮູບພາບເຄື່ອງນຸ່ງຂອງເດັກນ້ອຍຍິງ ແລະຊາຍໃຫ້ຈົບງາມ.
3. ຝຶກຄວາມອົດທົນໃນການທາສີໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການທາສີຮູບພາບເຄື່ອງນຸ່ງຂອງເດັກນ້ອຍຍິງ ແລະ ຊາຍ.

### III. ສື່ການຮຽນ-ການສອນ

1. ສີໄມ້ ຫຼື ສີທຽນ.
2. ເຈ້ຍແບບຮູບເຄື່ອງນຸ່ງຂອງເດັກນ້ອຍຍິງ, ຊາຍທີ່ທາສີແລ້ວ, ເຈ້ຍຮູບພາບເຄື່ອງນຸ່ງຂອງເດັກນ້ອຍຍິງ ແລະ ຊາຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງທາສີຮູບເທິງກາງຫາວ.
2. ຄູສົນທະນາກ່ຽວກັບເຄື່ອງນຸ່ງເດັກນ້ອຍຍິງ ແລະ ຊາຍ.
3. ຄູແນະນຳການທາສີຮູບໃສ່ຮູບພາບເຄື່ອງນຸ່ງເດັກນ້ອຍຍິງ ແລະ ຊາຍ.
4. ໃຫ້ເດັກປະຕິບັດຕົວຈິງ, ຄູຕິດຕາມ ແລະ ຊ່ວຍເຫຼືອ.
5. ໃຫ້ເດັກນຳສະເໜີຜົນງານການທາສີຮູບໃສ່ຮູບເຄື່ອງນຸ່ງເດັກນ້ອຍຍິງ ແລະ ຊາຍ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນປະຕິບັດກິດຈະກຳ ແລະ ເກັບມ້ຽນອຸປະກອນໃຫ້ຖືກບ່ອນທີ່ຄູກຳນົດໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກກ່ຽວກັບຄວາມແຕກຕ່າງ ເຄື່ອງນຸ່ງເດັກນ້ອຍຍິງ ແລະ ເດັກຊາຍ.
2. ຄວາມສະອາດຈົບງາມ ຂອງການທາສີຮູບເຄື່ອງນຸ່ງເດັກນ້ອຍຍິງ ແລະ ຊາຍ.
3. ຄວາມອົດທົນໃນການທາສີຮູບພາບເຄື່ອງນຸ່ງ ຂອງເດັກນ້ອຍຍິງ ແລະ ຊາຍໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແນະນຳຊື່ຕົນເອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ

1. ຫຼິ້ນແບບຫຼິ້ນຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ມີຄວາມປອດໄພ.
2. ບອກຊື່ຕົນເອງ ແລະຈື່ຈຳຊື່ຂອງໝູ່ເພື່ອນ.
3. ເຄື່ອນໄຫວຮ່າງກາຍຕາມຈັງຫວະ ແລະ ສຽງເພງຢ່າງຄ່ອງແຄ້ວ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແນະນຳຊື່ຕົນເອງ.

### III. ສື່ການຮຽນ-ການສອນ

1. ບົດເພງ ເຈົ້າຊື່ຫຍັງ, ເຄື່ອງເຄາະຈັງຫວະ.
2. ວິທີຫຼິ້ນ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຄື່ອນໄຫວຊ້າ ແລະ ໄວຕາມສຽງສັນຍານ.
2. ຄູສະເໜີ ແບບຫຼິ້ນ ແນະນຳຊື່ຕົນເອງ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນແນະນຳຊື່ຕົນເອງ, ຄູຕິດຕາມ ແລະ ຊ່ວຍແນະນຳເດັກ.
4. ໃຫ້ເດັກຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນ ແນະນຳຊື່ຕົນເອງ
5. ສຶກສາອົບຮົມເດັກໃຫ້ມີຄວາມລະມັດລະວັງໃນເວລາຫຼິ້ນແບບຫຼິ້ນ, ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ.
6. ໃຫ້ເດັກເຄື່ອນໄຫວຊ້າໆຕາມສຽງສັນຍານ, ຫຼັງຈາກນັ້ນປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ກົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ຄວາມປອດໄພໃນການຫຼິ້ນແນະນຳຊື່ຕົນເອງ.
2. ການບອກຊື່ຕົນເອງ ແລະ ການຈື່ຊື່ຂອງໝູ່ເພື່ອນ.
3. ຄວາມຄ່ອງແຄ້ວໃນການເຄື່ອນໄຫວຮ່າງກາຍປະກອບຈັງຫວະ ຫຼື ສຽງເພງ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຮູບພາບໃນແຜ່ນເກມ ຢ່າງຖືກຕ້ອງ.
2. ຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຕາມແບບຢ່າງຖືກຕ້ອງ.
3. ເຝິກຄວາມສາມັກຄີໃນການຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບ ເດັກນ້ອຍຍິງ ແລະ ຊາຍ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍ (ເກມສຳລັບຄູ ແລະ ເດັກ).
2. ບົດຄຳຄ່ອງ ແນະນຳຊື່.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ແນະນຳຊື່.
2. ຄູສົນທະນາກ່ຽວກັບຊື່ຮູບພາບທີ່ຢູ່ໃນເກມຕໍ່ຮູບພາບ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍ.
6. ສຶກສາອົບຮົມເດັກໃຫ້ມີຄວາມສາມັກຄີໃນການຫຼິ້ນເກມ ແລະ ການແບ່ງປັນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຕາມແບບ.
3. ຄວາມສາມັກຄີໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມຮຽນຮູ້ໃນຫ້ອງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ ແລະ  ສັນຍະລັກຂອງມຸມຮຽນຮູ້ໃນຫ້ອງຮຽນ ຢ່າງຖືກຕ້ອງ.
2. ເຂົ້າຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມໃນຫ້ອງຮຽນ: ມຸມເຄື່ອງຫຼິ້ນສຳຜັດ, ມຸມອ່ານ ແລະ ມຸມບົດບາດສົມມຸດ. ສັນຍະລັກຂອງມຸມເຄື່ອງຫຼິ້ນສຳຜັດ: ຮູບພາບເດັກນ້ອຍຫຼິ້ນໄມ້ບູ້ອກ, ມຸມອ່ານ: ຮູບພາບເດັກນ້ອຍອ່ານປຶ້ມ ແລະ ມຸມບົດບາດສົມມຸດ; ຮູບພາບເດັກນ້ອຍຫຼິ້ນຂອງເຮືອນ ນ້ອຍ (ຄູສາມາດເລືອກຮູບອື່ນໆ ທີ່ເໝາະສົມກັບຫົວຂໍ້ກໍໄດ້).
2. ລະບຽບໃນການເຂົ້າຫຼິ້ນຕາມມຸມ: ຕິດບັດສັນຍະລັກຂອງມຸມທີ່ຈະເຂົ້າໄປຫຼິ້ນ, ເກັບມ້ຽນເຄື່ອງຫຼິ້ນໃຫ້ເປັນລະບຽບ ແລະ ຖືກຕາມມຸມຫຼັງຈາກທີ່ຫຼິ້ນແລ້ວ.

### III. ສື່ການຮຽນ-ການສອນ

1. ມຸມຮຽນຮູ້ໃນຫ້ອງຮຽນ: ມຸມເຄື່ອງຫຼິ້ນສຳຜັດ, ມຸມອ່ານ ແລະ ມຸມບົດບາດສົມມຸດ.
2. ຮູບພາບ: ເດັກນ້ອຍຫຼິ້ນໄມ້ບູ້ອກ, ເດັກນ້ອຍອ່ານປຶ້ມ ແລະ ເດັກນ້ອຍຫຼິ້ນຂອງເຮືອນນ້ອຍ.
3. ບົດຄຳຄ່ອງ ແນະນຳຊື່.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ແນະນຳຊື່ປະກອບທ່າທາງຕາມຈິນຕະນາການ.
2. ຄູສົນທະນາຖາມ, ຕອບກ່ຽວກັບລະບຽບໃນການເຂົ້າຫຼິ້ນຕາມມຸມຮຽນຮູ້ໃນຫ້ອງຮຽນ.
3. ໃຫ້ເດັກສັງເກດ ແລະ ເລືອກຫຼິ້ນຕາມໃຈໃນມຸມທີ່ມີສັນຍະລັກທີ່ເດັກມັກ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນຊື່, ສັນຍະລັກຂອງມຸມ ແລະ ລະບຽບໃນການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກກ່ຽວກັບການແບ່ງປັນເຄື່ອງຫຼິ້ນ, ມາລະຍາດໃນການຫຼິ້ນຮ່ວມໝູ່ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ເປັນລະບຽບພາຍຫຼັງຫຼິ້ນແລ້ວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບຊື່, ສັນຍະລັກຂອງມຸມຮຽນຮູ້ໃນຫ້ອງຮຽນ.
2. ຄວາມມ່ວນຊື່ນໃນການເຂົ້າຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບຄຳຄ່ອງ ແນະນຳຊື່

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ ນາມສະກຸນ, ເພດຂອງຕົນເອງ ແລະ ໝູ່ເພື່ອນຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງແນະນຳຊື່.

### III. ສື່ການຮຽນ-ການສອນ

1. ກະແຊັກ.
2. ບົດຄຳຄ່ອງ ແນະນຳຊື່ ເບິ່ງປຶ້ມຄູ່ມືຄູ.
3. ການບໍລິຫານມື ແລະ ລຳຕົວ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບຊື່ ນາມສະກຸນ, ເພດຂອງຕົນເອງ ແລະ ໝູ່ເພື່ອນ.
2. ໃຫ້ເດັກບໍລິຫານມື ແລະ ລຳຕົວ: ທ່າພັບນິ້ວມືຂຶ້ນ ແລະ ລົງເທື່ອລະນິ້ວ, ທ່າຫງ່ຽງຕົວເບື້ອງຊ້າຍ ແລະ ເບື້ອງຂວາ.
3. ໃຫ້ເດັກຈັບບ່າກັນຢ່າງເປັນແຖວຊື່ໂດຍບໍ່ໃຫ້ແຕກແຖວ.
4. ຄູສາທິດການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ແນະນຳຊື່.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນັ່ງລົງຄູ້ເຂົ່າກົ້ມຫົວລົງ ແລະ ເງີຍຫົວຂຶ້ນ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
8. ສຶກສາອົບຮົມເດັກກ່ຽວກັບມາລະຍາດໃນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ ນາມສະກຸນ, ເພດຂອງຕົນເອງ ແລະ ໝູ່ເພື່ອນ.
2. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
3. ຄວາມປອດໄພ ໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ຮ່າງກາຍຂອງຂ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ຮ່າງກາຍຂອງຂ້ອຍ ຕາມຈັງຫວະ.
2. ບອກສ່ວນປະກອບຂອງຮ່າງກາຍຢ່າງຖືກຕ້ອງ.
3. ບອກຮູບເລຂາຄະນິດ ແລະ ວາງຮູບເລຂາຄະນິດຕາມແບບຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ຮ່າງກາຍຂອງຂ້ອຍ ຕາມຈັງຫວະ.
2. ສ່ວນປະກອບຂອງຮ່າງກາຍ: ສ່ວນຫົວ, ເລົາຄີງ ແລະ ສ່ວນແຂນ, ຂາ.
3. ຮູບເລຂາຄະນິດ: ວົງມົນ, ຈະຕຸລັດ ແລະ ວາງຮູບເລຂາຄະນິດຕາມແບບ: ວາງຮູບວົງມົນ, ຈະຕຸລັດ ສະຫຼັບກັນ 3 ຄູ່.

### III. ສື່ການຮຽນ-ການສອນ

1. ບົດເພງ ຮ່າງກາຍຂອງຂ້ອຍ (ເບິ່ງປຶ້ມຄູ່ມືຄູ), ເຄື່ອງເຄາະຈັງຫວະ, ຕົວເດັກ ຫຼື ຮູບພາບຄົນ.
2. ຮູບເລຂາຄະນິດ: ວົງມົນ 3 ແຜ່ນ, ຈະຕຸລັດ 3 ແຜ່ນ ແລະ ແຜ່ນແບບການວາງຮູບ: ວົງມົນ, ຈະຕຸລັດວາງສະຫຼັບກັນ 3 ຄູ່.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບຊື່, ນາມສະກຸນ ແລະ ເພດຂອງເດັກ.
2. ຄູສະເໜີຊື່ເພງ, ໃຫ້ເດັກຮ້ອງເພງ ຮ່າງກາຍຂອງຂ້ອຍ ແລະ ຄູສົນທະນາຖາມ-ຕອບກ່ຽວກັບເນື້ອໃນຂອງບົດເພງ.
3. ໃຫ້ເດັກສັງເກດຮູບພາບ ຫຼື ເດັກຕົວ ແລະ ບອກສ່ວນປະກອບຂອງຮ່າງກາຍ.
4. ໃຫ້ເດັກສັງເກດ ແລະ ບອກຮູບເລຂາຄະນິດ.
5. ໃຫ້ເດັກສັງເກດແຜ່ນແບບການວາງຮູບ ແລະ ວາງຕາມແບບ: ວາງຮູບວົງມົນ ແລະ ຈະຕຸລັດສະຫຼັບກັນ 3 ຄູ່.
6. ໃຫ້ເດັກຮ້ອງເພງຄືນ, ບອກສ່ວນປະກອບຂອງຮ່າງກາຍ, ຮູບເລຂາຄະນິດ ແລະ ວາງຮູບເລຂາຄະນິດຕາມແບບ.
7. ສຶກສາອົບຮົມເດັກກ່ຽວກັບການຮັກສາອະນາໄມຮ່າງກາຍໃຫ້ສະອາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການຮ້ອງເພງ ຮ່າງກາຍຂອງຂ້ອຍ ຕາມຈັງຫວະ.
2. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບສ່ວນປະກອບຂອງຮ່າງກາຍ.
3. ຄວາມຖືກຕ້ອງໃນການບອກຮູບເລຂາຄະນິດ ແລະ ການວາງຮູບເລຂາຄະນິດຕາມແບບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນເປັນໜ່ວຍມືນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກພາກສ່ວນຕ່າງໆຂອງຮ່າງກາຍ ທີ່ມີຮູບຮ່າງຄ້າຍຄືໜ່ວຍມືນ.
2. ເຝິກຄວາມແຂງແຮງຂອງກ້າມຊີ້ນມື ແລະ ຄວາມຄ້າຍຄືໃນການປັ້ນເປັນໜ່ວຍມືນ.
3. ຄວາມອົດທົນໃນການປັ້ນເປັນໜ່ວຍມືນໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການປັ້ນເປັນໜ່ວຍມືນ.

### III. ສື່ການຮຽນ -ການສອນ

1. ດິນ ຫຼື ແປ້ງສຳລັບປັ້ນ, ແບບປັ້ນໜ່ວຍມືນທີ່ປັ້ນແລ້ວ.
2. ຜ້າຢາງ ຫຼື ເຈ້ຍຮອງປັ້ນ.
3. ຊາມນ້ຳ, ສະບູ ແລະ ຜ້າເຊັດມື.
4. ຜ້າ ຫຼື ເສື້ອກັນເປື້ອນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງກຳມື, ແບມື.
2. ຄູສົນທະນາກ່ຽວກັບພາກສ່ວນຕ່າງໆຂອງຮ່າງກາຍ ທີຄ້າຍຄືກັບໜ່ວຍມືນ.
3. ຄູແນະນຳ ແລະ ສາທິດການປັ້ນເປັນຮູບໜ່ວຍມືນ.
4. ໃຫ້ເດັກປະຕິບັດຕົວຈິງ, ຄູຕິດຕາມ ແລະ ຊ່ວຍເຫຼືອເດັກ.
5. ໃຫ້ເດັກນຳສະເໜີຜົນງານການປັ້ນເປັນໜ່ວຍມືນ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນປະຕິບັດກິດຈະກຳ, ການແບ່ງປັນດິນປັ້ນໃຫ້ກັນ, ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ ແລະ ອະນາໄມມືໃຫ້ສະອາດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກພາກສ່ວນຕ່າງໆຂອງຮ່າງກາຍ ທີ່ມີຮູບຮ່າງຄ້າຍຄືໜ່ວຍມືນ.
2. ຄວາມຄ້າຍຄືຂອງຮູບທີ່ປັ້ນກັບຮູບຕົວຈິງ ແລະ ຄວາມແຂງແຮງຂອງມື.
3. ຄວາມອົດທົນໃນການປັ້ນເປັນໜ່ວຍມືນໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ  ແລ່ນໄລ່ຊ້ອນ

### I. ຈຸດປະສົງ

ໃຫ້ເດັກສາມາດ

1. ຫຼິ້ນແບບຫຼິ້ນ ໄລ່ຊ້ອນຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ມີຄວາມປອດໄພ.
2. ເຄື່ອນໄຫວຮ່າງກາຍຕາມຈັງຫວະເພງ.
3. ເຝິກໃຫ້ເດັກມີສະຕິລະວັງຕົວ ແລະ ມີຄວາມວ່ອງໄວ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ແລ່ນໄລ່ຊ້ອນ.

### III. ສື່ການຮຽນ-ການສອນ.

1. ບົດເພງ ຮ່າງກາຍຂອງຂ້ອຍ.
2. ເຄື່ອງເຄາະຈັງຫວະ.
3. ວິທີຫຼິ້ນ ເບິ່ງປື້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຄື່ອນໄຫວຮ່າງກາຍຊ້າ,ໄວຕາມຈັງຫວະເພງ ຮ່າງກາຍຂອງຂ້ອຍ.
2. ຄູສະເໜີແບບຫຼິ້ນ  ແລ່ນໄລ່ຊ້ອນ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນໄລ່ຊ້ອນ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນ  ແລ່ນໄລ່ຊ້ອນ.
5. ສຶກສາອົບຮົມເດັກໃຫ້ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ ,ບໍ່ຍູ້ກັນ, ບໍ່ແລ່ນຕຳກັນ.
6. ໃຫ້ເດັກເຄື່ອນໄຫວຊ້າໆຕາມສຽງສັນຍານ ແລ້ວປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນການຫຼິ້ນແບບຫຼິ້ນໄລ່ຊ້ອນ.
2. ການເຄື່ອນໄຫວຮ່າງກາຍ ຕາມຈັງຫວະຂອງບົດເພງ ຮ່າງກາຍຂອງຂ້ອຍ.
3. ຄວາມມີສະຕິລະວັງຕົວ ແລະ ມີຄວາມວ່ອງໄວໃນການຫຼິ້ນແບບຫຼິ້ນ ແລ່ນໄລ່ຊ້ອນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບວົງມົນນ້ອຍ ແລະ ໃຫຍ່

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຂະໜາດ, ຮູບພາບໃນແຜ່ນເກມຢ່າງຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບວົງມົນນ້ອຍ, ໃຫຍ່ຢ່າງຖືກຕ້ອງ.
3. ຄວາມອົດທົນໃນການຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບວົງມົນນ້ອຍ, ໃຫຍ່.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບວົງມົນນ້ອຍ, ໃຫຍ່ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າເກມຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍ.
3. ບົດເພງ ຮ່າງກາຍຂອງອ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຮ່າງກາຍຂອງອ້ອຍ.
2. ຄູສົນທະນາກ່ຽວກັບຊື່ເກມ, ຂະໜາດ ແລະ ຮູບພາບໃນແຜ່ນເກມ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຂະໜາດ ແລະ ຮູບພາບຈັບຄູ່ທີ່ຄືກັນ.
6. ສຶກສາອົບຮົມເດັກກ່ຽວກັບການເກັບມ້ຽນເກມໃຫ້ຖືກບ່ອນ ແລະ ເປັນລະບຽບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຂະໜາດ, ຮູບພາບໃນແຜ່ນເກມ
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບວົງມົນນ້ອຍ ແລະ ໃຫຍ່.
3. ຄວາມອົດທົນໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມຮຽນຮູ້ໃນຫ້ອງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ ແລະ ສັນຍະລັກຂອງມຸມຮຽນຮູ້ໃນຫ້ອງຮຽນ ຢ່າງຖືກຕ້ອງ.
2. ເຂົ້າຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນໃຫ້ເປັນລະບຽບ.

### II. ເນື້ອໃນຕົ້ນຕໍ

1. ຊື່ ແລະ ສັນຍະລັກຂອງມຸມຮຽນຮູ້ໃນຫ້ອງຮຽນ:
- ຊື່ມຸມໃນຫ້ອງຮຽນ ມຸມສິລະປະສ້າງສັນ, ມຸມເກມການສຶກສາ, ມຸມວິທະຍາສາດ ແລະ ທຳມະຊາດ.
- ສັນຍະລັກຂອງມຸມສິລະປະສ້າງສັນ: ຮູບພາບເດັກນ້ອຍແຕ້ມຮູບ, ມຸມເກມການສຶກສາ: ຮູບພາບເດັກນ້ອຍຫຼິ້ນເກມ, ມຸມວິທະຍາສາດ ແລະ ທຳມະຊາດ: ຮູບພາບເດັກນ້ອຍຫົດນ້ຳດອກໄມ້ (ຄູສາມາດເລືອກຮູບອື່ນໆທີ່ເໝາະສົມກັບຫົວຂໍ້ກໍໄດ້).

3. ລະບຽບໃນການເຂົ້າຫຼິ້ນຕາມມຸມ: ຕິດບັດສັນຍະລັກຂອງມຸມທີ່ຈະເຂົ້າໄປຫຼິ້ນ, ເມື່ອສຳເລັດການຫຼິ້ນຕ້ອງເກັບມ້ຽນເຄື່ອງຫຼິ້ນໃຫ້ເປັນລະບຽບ ແລະ ຖືກຕາມມຸມ.

### III. ສື່ການຮຽນ-ການສອນ

1. ມຸມຮຽນຮູ້ໃນຫ້ອງຮຽນ: ມຸມສິລະປະສ້າງສັນ, ມຸມເກມການສຶກສາ, ມຸມວິທະຍາສາດ ແລະ ທຳມະຊາດ.
2. ມຸມສິລະປະສ້າງສັນ: ຮູບພາບເດັກນ້ອຍທາສີ, ມຸມເກມການສຶກສາ: ຮູບພາບເດັກນ້ອຍຫຼິ້ນເກມ, ມຸມວິທະຍາສາດ ແລະ ທຳມະຊາດ: ຮູບພາບເດັກນ້ອຍຫົດນ້ຳດອກໄມ້.
3. ບົດເພງ ຮ່າງກາຍຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຮ່າງກາຍຂອງຂ້ອຍ ປະກອບທ່າທາງຕາມຈິນຕະນາການ.
2. ຄູສົນທະນາຖາມ, ຕອບກ່ຽວກັບຊື່, ສັນຍະລັກຂອງມຸມສິລະປະສ້າງສັນ, ມຸມເກມການສຶກສາ, ມຸມວິທະຍາສາດ ແລະ ທຳມະຊາດ.
3. ໃຫ້ເດັກສັງເກດ ແລະ ເລືອກຫຼິ້ນຕາມໃຈໃນມຸມທີ່ມີສັນຍະລັກທີ່ເດັກມັກ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນຊື່, ສັນຍະລັກຂອງມຸມ ແລະ ລະບຽບໃນການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກກ່ຽວກັບ ການແບ່ງປັນເຄື່ອງຫຼິ້ນ, ມາລະຍາດໃນການຫຼິ້ນຮ່ວມໝູ່ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ເປັນລະບຽບພາຍຫຼັງຫຼິ້ນແລ້ວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບຊື່ ແລະ ສັນຍະລັກຂອງມຸມຮຽນຮູ້ໃນຫ້ອງຮຽນ.
2. ການຕອບຄຳຖາມກ່ຽວກັບລະບຽບໃນການເຂົ້າຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນນາການປະກອບເພງ ຮ່າງກາຍຂອງຂ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກສ່ວນປະກອບຂອງຮ່າງກາຍ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບຈັງຫວະເພງ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບຈັງຫວະເພງ ຮ່າງກາຍຂອງຂ້ອຍ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ຮ່າງກາຍຂອງຂ້ອຍ ເບິ່ງປື້ມຄູ່ມືຄູ.
3. ການບໍລິຫານແຂນ, ທ້ອງ ແລະ ຫຼັງ ເບິ່ງປື້ມຄູ່ມືຄູ.
4. ເຊືອກ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບສ່ວນປະກອບຂອງຮ່າງກາຍ.
2. ໃຫ້ເດັກບໍລິຫານແຂນ, ທ້ອງ ແລະ ຫຼັງ: ທ່າຢືນແກວ່ງແຂນ, ທ່າທ້ອງ ແລະ ຫຼັງ.
3. ໃຫ້ເດັກເຕັ້ນຂ້າມເຊືອກ.
4. ຄູສາທິດການສະແດງທ່າທາງຕາມຈິນຕະນາການປະກອບຈັງຫວະເພງ ຮ່າງກາຍຂອງຂ້ອຍ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກຢືນ ພັບແຂນເຂົ້າ ແລະ ວາແຂນອອກ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບຈັງຫວະເພງ.
8. ສຶກສາອົບຮົມເດັກກ່ຽວກັບ ມາລະຍາດໃນການສະແດງທ່າທາງຕາມຈິນຕະນາການປະກອບຈັງຫວະເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະກອບຂອງຮ່າງກາຍ.
2. ຄວາມມ່ວນຊື່ນການສະແດງທ່າທາງຕາມຈິນຕະນາການປະກອບຈັງຫວະເພງ.
3. ຄວາມປອດໄພໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ຫົວຂອງຂ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກສ່ວນປະກອບຂອງສ່ວນຫົວ ຢ່າງຖືກຕ້ອງ.
2. ບອກໜ້າທີ່ຂອງຫູ, ຕາ, ດັງ, ປາກ, ແຂ້ວ ແລະ ລີ້ນຢ່າງຖືກຕ້ອງ.
3. ເວົ້າຄຳສັບຕາມຮູບພາບຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ສ່ວນປະກອບຂອງສ່ວນຫົວ: ຜົມ, ຫູ, ໜ້າຜາກ, ຄິ້ວ, ຕາ, ດັງ, ແກ້ມ, ຄາງ, ປາກ, ແຂ້ວ, ລີ້ນ, ຄໍ.
2. ໜ້າທີ່ຂອງຫູໃຊ້ໄວ້ຟັງ; ຕາໃຊ້ໄວ້ເບິ່ງ; ດັງໃຊ້ໄວ້ຫາຍໃຈ, ດົມກິ່ນ; ປາກໃຊ້ໄວ້ກິນອາຫານ, ເວົ້າ, ແຂ້ວໃຊ້ໄວ້ຫຍ້ຳອາຫານ; ລີ້ນໃຊ້ໄວ້ຊີມລົດຊາດຂອງອາຫານ.
3. ການເວົ້າຄຳສັບຕາມຮູບພາບ: ຜົມ, ຫູ, ໜ້າຜາກ, ຄິ້ວ, ຕາ, ດັງ, ແກ້ມ, ຄາງ, ປາກ, ແຂ້ວ, ຄໍ.

### III. ສື່ການຮຽນ-ການສອນ

1. ໂປສະເຕີຮ່າງກາຍຂອງຄົນ (ສ່ວນຫົວ).
2. ຮູບພາບ: ເດັກນ້ອຍ ຫຼື ຕົວເດັກ; ບັດຮູບພາບ: ຜົມ, ຫູ, ໜ້າຜາກ, ຄິ້ວ, ຕາ, ດັງ, ແກ້ມ, ຄາງ, ປາກ, ແຂ້ວ ແລະ ຄໍ.
3. ບົດເພງ ຮ່າງກາຍຂອງຂ້ອຍ (ເບິ່ງປຶ້ມຄູ່ມືຄູ) ແລະ ເຄື່ອງເຄາະຈັງຫວະ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຮ່າງກາຍຂອງຂ້ອຍ ປະກອບທ່າທາງ.
2. ໃຫ້ເດັກສັງເກດໂປສະເຕີ, ຄູສົນທະນາຖາມ-ຕອບກ່ຽວກັບສ່ວນປະກອບຂອງພາກ ສ່ວນຫົວ ແລະ ໃຫ້ເດັກບອກສ່ວນປະກອບຂອງຫົວ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາຖາມ-ຕອບກ່ຽວກັບໜ້າທີ່ຂອງຫູ, ຕາ, ດັງ, ປາກ, ແຂ້ວ, ລີ້ນ ແລະ ໃຫ້ເດັກບອກໜ້າທີ່ຂອງຫູ, ຕາ, ດັງ, ປາກ.
4. ໃຫ້ເດັກສັງເກດຮູບພາບ ແລະ ເວົ້າຄຳສັບຕາມຮູບພາບ.
5. ໃຫ້ເດັກຫຼິ້ນຄືນຊື່ສ່ວນປະກອບຂອງພາກສ່ວນຫົວ, ໜ້າທີ່ຂອງຫູ, ຕາ, ດັງ, ປາກ, ແຂ້ວ, ລີ້ນ ແລະ ເວົ້າຄຳສັບຕາມຮູບພາບ.
6. ສຶກສາອົບຮົມເດັກກ່ຽວກັບການຮັກສາອະນາໄມຜົມ ແລະ ໃບໜ້າໃຫ້ສະອາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະກອບຂອງພາກສ່ວນຫົວ.
2. ຄວາມຖືກຕ້ອງໃນການບອກໜ້າທີ່ຂອງຫູ, ຕາ, ດັງ, ປາກ, ແຂ້ວ ແລະ ລີ້ນ.
3. ຄວາມຖືກຕ້ອງໃນການເວົ້າຄຳສັບຕາມຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນເປັນໜ່ວນມົນນ້ອຍ ແລະ ໃຫຍ່

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກສ່ວນປະກອບຂອງໃບໜ້າຄົນ.
2. ເຝິກຄວາມແຂງແຮງຂອງມືໂດຍການປັ້ນໜ່ວຍມົນນ້ອຍ ແລະ ໜ່ວຍມົນໃຫຍ່ປະກອບເປັນໜ້າຄົນ.
3. ເຝິກຄວາມສາມັກຄີໃນການເກັບມ້ຽນຜົນງານ.

### II. ເນື້ອໃນຕົ້ນຕໍ

ການປັ້ນໜ່ວຍມົນນ້ອຍ, ໃຫ່ຍປະກອບເປັນໜ້າຄົນ (ປັ້ນເປັນໜ້າຄົນ).

### III. ສື່ການຮຽນ-ການສອນ

1. ດິນ ຫຼື ແປ້ງສຳລັບປັ້ນ, ແບບຮູບໜ່ວຍມົນນ້ອຍ ແລະ ໜ່ວຍມົນໃຫຍ່ທີ່ປັ້ນປະກອບເປັນໜ້າຄົນ.
2. ຜ້າຢາງ ຫຼື ເຈ້ຍຮອງປັ້ນ.
3. ຊາມນ້ຳ, ສະບູ ແລະ ຜ້າເຊັດມື.
4. ຜ້າ ຫຼື ເສື້ອກັນເປື້ອນ.
5. ບົດເພງ ຮ່າງກາຍຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຮ່າງກາຍຂອງຂ້ອຍປະກອບທ່າທາງ.
2. ຄູສົນທະນາກ່ຽວກັບພາກສ່ວນຕ່າງໆ ຂອງໃບໜ້າຄົນ.
3. ຄູແນະນຳ ແລະ ສາທິດການປັ້ນໜ່ວຍມົນນ້ອຍ ແລະ ໃຫ່ຍປະກອບເປັນໜ້າຄົນ.
4. ໃຫ້ເດັກປະຕິບັດຕົວຈິງ, ຄູຕິດຕາມ ແລະ ຊ່ວຍເຫຼືອແນະນຳເດັກ.
5. ໃຫ້ເດັກນຳສະເໜີຜົນງານ ການປັ້ນໜ່ວຍມົນນ້ອຍ, ໃຫ່ຍປະກອບເປັນໜ້າຄົນ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນ, ແບ່ງປັນ ແລະ ຊ່ວຍກັນເກັບມ້ຽນຜົນງານໄວ້ບ່ອນທີ່ກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກສ່ວນປະກອບຂອງໃບໜ້າຄົນ.
2. ຄວາມແຂງແຮງຂອງມື ໃນການປັ້ນໜ່ວຍມົນນ້ອຍ, ໃຫ່ຍປະກອບເປັນໜ້າຄົນ.
3. ຄວາມສາມັກຄີໃນການເກັບມ້ຽນຜົນງານ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນ ແກ້ຄຳທວາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ແຂ່ງຂັນກັບແກ້ຄຳທວາຍຮ່ວມກັບໝູ່ເພື່ອນ ຢ່າງມ່ວນຊື່ນ.
2. ເຝິກການສັງເກດ ແລະ ຄົ້ນຄິດ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນກັບແກ້ຄຳທວາຍ: ຕາ, ມື, ປາກ ແລະ ແຂ້ວ.

### III. ສື່ການຮຽນ-ການສອນ.

1. ບັດຄຳທວາຍ: ຕາ, ມື, ປາກ ແລະ ແຂ້ວ.
2. ບັດເລກ 1 ແລະ 2.
3. ວິທີຫຼິ້ນເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກຍົກມືຂຶ້ນສູງກາຍຫົວ ແລ້ວແກ່ວງໄປ ແກ່ວງມາ.
2. ຄູສະເໜີແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ ແລະ ສາທິດແບບຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນ ແຂ່ງຂັນກັບແກ້ຄຳທວາຍ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນ ກ່ຽວກັບການຫຼິ້ນແບບຫຼິ້ນ ແຂ່ງຂັນກັບແກ້ຄຳທວາຍ.
5. ສຶກສາອົບຮົມເດັກໃນເວລາຫຼິ້ນໃຫ້ຕັ້ງໃຈຟັງ, ຄົ້ນຄິດ ແລະ ຕອບຄຳຖາມໃຫ້ຖືກຕ້ອງ.
6. ໃຫ້ເດັກຍ່າງຕາມຫຼັງກັນ ຊ້າໆ ເປັນຮູບວົງມົນແລ້ວປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການຫຼິ້ນແບບຫຼິ້ນ ແຂ່ງຂັນກັບແກ້ຄຳທວາຍ.
2. ຄວາມວ່ອງໄວໃນການຄົ້ນຄິດແກ້ຄຳທວາຍ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັບໜ້າທີ່ຂອງ ຫູ, ຕາ ແລະ ປາກ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຮູບພາບ ໃນແຜ່ນເກມຢ່າງຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບໜ້າທີ່ຂອງ ຫູ, ຕາ ແລະ ປາກ ຢ່າງຖືກຕ້ອງ.
3. ເກັບມ້ຽນແຜ່ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບໜ້າທີ່ຂອງ ຫູ, ຕາ ແລະ ປາກ: ເດັກນ້ອຍຟັງວິທະຍຸ, ເບິ່ງໂທລະພາບ ແລະ ກິນອາຫານ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບພາບທີ່ຄືກັບໜ້າທີ່ຂອງ ຫູ, ຕາ ແລະ ປາກ: ເດັກນ້ອຍຟັງວິທະຍຸ, ເບິ່ງໂທລະທັດ ແລະ ກິນອາຫານ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບວົງມົນນ້ອຍ, ໃຫຍ່.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບໜ້າທີ່ຂອງຫູ, ຕາ, ປາກ.
2. ຄູສົນທະນາກ່ຽວກັບຊື່ເກມ, ຮູບພາບໃນແຜ່ນເກມຈັບຄູ່ທີ່ຄືກັບຮູບພາບ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບ ຮູບພາບໜ້າທີ່ຂອງຫູ, ຕາ, ປາກ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນໃນການຫຼິ້ນເກມ ແລະ ການລໍຖ້າຕາມລຳດັບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບໜ້າທີ່ຂອງຫູ, ຕາ ແລະ ປາກ.
3. ການເກັບມ້ຽນແຜ່ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເຄື່ອງຫຼິ້ນໃນມຸມອ່ານ ຢ່າງຖືກຕ້ອງ.
2. ຫຼິ້ນໃນມຸມຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ເຄື່ອງຫຼິ້ນມຸມອ່ານ: ຮູບພາບ, ບັດພະຍັນຊະນະ, ບັດຄຳສັບ, ບັດຕົວເລກ, ປື້ມນິທານ, ປື້ມບົດເຝິກຫັດ ແລະ ໂປສະເຕີຮ່າງກາຍຂອງຄົນ.

## III. ສື່ການຮຽນ-ການສອນ.

1. ເຄື່ອງຫຼິ້ນໃນມຸມອ່ານ: ຮູບພາບ ຫຼື ໂປສະເຕີຮ່າງກາຍຂອງຄົນ, ຮູບພາບ: ອາຫານ, ໝາກໄມ້, ແຜ່ນໂປສະເຕີຕົວອັກສອນລາວ ຫຼື ບັດຕົວພະຍັນຊະນະປະກອບຮູບພາບ ກ-ຮ; ບັດຕົວເລກ 1-2, ບັດຄຳສັບ: ຝ່າມື, ກົກແຂນ, ນິ້ວມື, ແຄ່ງ, ຫົວເຂົ່າ, ຜົມ, ໃບໜ້າ, ດັງ, ທາແປ້ງ, ຜ້າ, ມຸ້ງ, ອາຫານ, ປື້ມນິທານເລື່ອງ ລ້າງມືໃຫ້ສະອາດ, ນາງນ້ອຍນຸ່ງເຄື່ອງ; ກະດານສຽບ ຫຼື ຕິດ.
2. ບົດເພງ ຮ່າງກາຍຂອງຂ້ອຍ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງຮ່າງກາຍຂອງຂ້ອຍປະກອບທ່າທາງຕາມຈິນຕະນາການ.
2. ໃຫ້ເດັກສັງເກດ, ເລືອກຫຼິ້ນເຄື່ອງ ແລະ ເຂົ້າຫຼິ້ນໃນມຸມອ່ານ.
3. ຄູສົນທະນາຖາມ,ຕອບກ່ຽວກັບຊື່ເຄື່ອງຫຼິ້ນ ແລະ ການຫຼິ້ນມຸມອ່ານ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນຊື່ເຄື່ອງຫຼິ້ນ ແລະ ການຫຼິ້ນໃນມຸມອ່ານ.
6. ສຶກສາອົບຮົມເດັກກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນເຂົ້າມຸມຫຼັງຈາກທີ່ຫຼິ້ນແລ້ວ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບຊື່ເຄື່ອງຫຼິ້ນ ແລະ ການຫຼິ້ນຕາມມຸມອ່ານ.
2. ຄວາມມ່ວນຊື່ນໃນການຫຼິ້ນໃນມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວ ຕາມສຽງສັນຍານສັ່ນກະແຊັກ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກສ່ວນປະກອບຂອງສ່ວນຫົວ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມສຽງສັນຍານ ຢ່າງຖືກຕ້ອງ.
3. ເຂົ້າຮ່ວມກິດຈະກຳ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມສຽງສັນຍານ: ສັ່ນກະແຊັກ 1 ບາດ ຣ່ອນແອວ, ສັ່ນກະແຊັກ 2 ບາດ ໝູນບ່າໄຫຼ່ ແລະ ສັ່ນກະແຊັກ 3 ບາດ ນັ່ງລົງ.

### III. ສື່ການຮຽນ-ການສອນ

1. ກະແຊັກ.
2. ການບໍລິຫານແຂນ ແລະ ຂາ ເບິ່ງປື້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບສ່ວນປະກອບຂອງສ່ວນຫົວ.
2. ໃຫ້ເດັກບໍລິຫານແຂນ ແລະ ຂາ: ທ່າແກວ່ງແຂນໄປຂ້າງເບື້ອງຊ້າຍ ແລະ ເບື້ອງຂວາ, ທ່າໂຢະຂາຂຶ້ນ ແລະ ລົງ.
3. ໃຫ້ເດັກຍ່າງເປັນ 2 ແຖວຊື່.
4. ຄູສາທິດການສະແດງທ່າທາງຕາມສຽງສັນຍານ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກບອກຂວ້ຳວາແຂນອອກຂາໄຂວ່ກັນ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານ.
8. ສຶກສາອົບຮົມເດັກກ່ຽວກັບຄວາມປອດໄພໃນການສະແດງທ່າທາງຕາມສຽງສັນຍານ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະກອບຂອງຫົວ.
2. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານ.
3. ຄວາມມ່ວນຊື່ນ ແລະ ຄວາມປອດໄພໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ເລົ່າຄີງຂອງຂ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກສ່ວນປະກອບຂອງເລົ່າຄີງ ແລະ ບອກໜ້າທີ່ຂອງບ່າໄຫຼ່ຢ່າງຖືກຕ້ອງ.
2. ເວົ້າຄຳສັບຕາມຮູບພາບຢ່າງຖືກຕ້ອງ.
3. ບອກຕົວເລກ 1-2 ຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ສ່ວນປະກອບຂອງເລົ່າຄີງ: ບ່າໄຫຼ່, ໜ້າເອິກ, ນົມ, ທ້ອງ, ແອວ, ກະໂພກ ແລະ ໜ້າທີ່ຂອງບ່າໄຫຼ: ໃຊ້ໄວ້ຫາບ ຫຼື ແບກເຄື່ອງ ແລະ ພາຍຖົງປື້ມ.
2. ການເວົ້າຄຳສັບຕາມຮູບພາບ: ໜ້າເອິກ, ບ່າໄຫຼ່, ນົມ, ທ້ອງ, ແອວ ແລະ  ກະໂພກ.
3. ຕົວເລກ 1-2.

### III. ສື່ການຮຽນ-ການສອນ

1. ຮູບພາບ ຫຼື ໂປສະເຕີຮ່າງກາຍຂອງຄົນ, ຮູບພາບ: ຄົນຫາບເຄື່ອງ ແລະ ເດັກພາຍຖົງປື້ມ.
2. ບັດຕົວເລກ 1-2 ແລະ ບົດເພງ ຮ່າງກາຍຂອງຂ້ອຍ  (ເບິ່ງປື້ມຄູ່ມືຄູ ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຮ່າງກາຍຂອງຂ້ອຍ ປະກອບທ່າທາງ.
2. ໃຫ້ເດັກສັງເກດໂປສະເຕີ, ຄູສົນທະນາ ແລະ ໃຫ້ເດັກບອກສ່ວນປະກອບຂອງເລົ່າຄີງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາ ແລະ ໃຫ້ເດັກບອກໜ້າທີ່ຂອງບ່າໄຫຼ່.
4. ໃຫ້ເດັກສັງເກດຮູບພາບ ແລະ ເວົ້າຄຳສັບຕາມຮູບພາບ.
5. ໃຫ້ເດັກສັງເກດບັດຕົວເລກ ແລະ ບອກຕົວເລກ 1-2.
6. ໃຫ້ເດັກເວົ້າຄືນສ່ວນປະກອບຂອງສ່ວນເລົ່າຄີງ, ໜ້າທີ່ຂອງບ່າໄຫຼ່, ເວົ້າຄຳສັບຕາມຮູບພາບ ແລະ ຕົວເລກ.
7. ສຶກສາອົບຮົມເດັກກ່ຽວກັບການຮັກສາອະນາໄມຮ່າງກາຍໃຫ້ສະອາດ ແລະ ປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະກອບຂອງເລົ່າຄີງ ແລະ  ການບອກໜ້າທີ່ຂອງບ່າໄຫຼ.
2. ຄວາມຖືກຕ້ອງໃນການເວົ້າຄຳສັບຕາມຮູບພາບ.
3. ຄວາມຖືກຕ້ອງໃນການບອກຕົວເລກ 1-2.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນຊີ້ຂຶ້ນເທິງ, ລົງລຸ່ມ, ຊ້າຍ ແລະ ຂວາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກທິດຂອງການຂີດເສັ້ນຊີ້ຂຶ້ນເທິງ, ລົງລຸ່ມ, ຊ້າຍ ແລະ ຂວາຕາມຮອຍຈ້ຳ.
2. ເຝິກຄວາມອົດທົນໃນການຂີດເສັ້ນຊີ້ຂຶ້ນເທິງ, ລົງລຸ່ມ, ຊ້າຍ ແລະ ຂວາຕາມຮອຍຈ້ຳໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຊີ້ຂຶ້ນເທິງ, ລົງລຸ່ມ, ຊ້າຍ ແລະ ຂວາຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ ຫຼື ສໍສີ.
2. ເຈ້ຍແບບຂີດເສັ້ນຊີ້ຂຶ້ນເທິງ, ລົງລຸ່ມ, ຊ້າຍ ແລະ ຂວາ.
3. ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 1 ຫຼື ເຈ້ຍແບບຂີດເສັ້ນຊີ້ຂຶ້ນເທິງ, ລົງລຸ່ມ, ຊ້າຍ ແລະ ຂວາຕາມຮອຍຈ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຂີດຂຽນຢູ່ກາງຫາວ.
2. ຄູສົນທະນາກ່ຽວກັບການຂີດເສັ້ນຕາມທິດທາງລູກສອນ.
3. ຄູແນະນຳ ແລະ ສາທິດການຂີດເສັ້ນຊີ້ຂຶ້ນເທິງ, ລົງລຸ່ມ, ຊ້າຍ ແລະ ຂວາຕາມຮອຍຈ້ຳ.
4. ໃຫ້ເດັກປະຕິບັດຕົວຈິງ, ຄູຕິດຕາມ ແລະ ຊ່ວຍແນະນຳເດັກ.
5. ໃຫ້ເດັກນຳສະເໜີຜົນງານ ການຂີດເສັ້ນຊີ້ຂຶ້ນເທິງ, ລົງລຸ່ມ, ຊ້າຍ ແລະ ຂວາຕາມຮອຍຈ້ຳ
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນປະຕິບັດກິດຈະກຳ, ພະຍາຍາມຂີດເສັ້ນໃຫ້ຖືກ, ຊ່ວຍເຫຼືອກັນເກັບມ້ຽນຜົນງານຂອງຕົນເອງໄວ້ບ່ອນທີ່ຄູກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກການຂີດເສັ້ນຊີ້ຂຶ້ນເທິງ, ລົງລຸ່ມ, ຊ້າຍ ແລະ ຂວາ.
2. ຄວາມອົດທົນໃນການຂີດຂຽນເສັ້ນຊີ້ຂຶ້ນເທິງ, ລົງລຸ່ມ, ຊ້າຍ ແລະ ຂວາຕາມຮອຍຈ້ຳ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນການປະຕິບັດຕາມໄຟອຳນາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ, ຄ່ອງແຄ້ວ ແລະ ປອດໄພ.
2. ບອກການປະຕິບັດຕົນຕາມໄຟອຳນາດ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ການປະຕິບັດຕາມໄຟອຳນາດ.

### III. ສື່ການຮຽນ-ການສອນ

1. ປ້າຍໄຟແດງ, ໄຟເຫຼືອງ ແລະ ໄຟຂຽວ.
2. ວິທີຫຼິ້ນ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເອົາມືຈັບບ່າໄຫຼ່, ຈັບແອວ ແລະ ຈັບກະໂພກ.
2. ຄູສະເໜີແບບຫຼິ້ນ ການປະຕິບັດຕາມໄຟອຳນາດ ແລະ ສາທິດ ວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນປະຕິບັດຕາມໄຟອຳນາດ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນການຫຼິ້ນແບບຫຼິ້ນການປະຕິບັດຕາມໄຟອຳນາດ.
5. ສຶກສາອົບຮົມເດັກໃນເວລາຫຼິ້ນໃຫ້ລະວັງບໍ່ແລ່ນຕຳກັນ, ຫຼິ້ນແລ້ວຊ່ວຍກັນເກັບມ້ຽນອຸປະກອນ.
6. ໃຫ້ເດັກຍົກສອງມືຂຶ້ນ ເຮັດທ່າທາງລົມພັດໄປ, ພັດມາຊ້າໆ ແລ້ວປ່ອຍໃຫ້ເດັກ ຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ.

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ, ຄ່ອງແຄ້ວ ແລະ ຄວາມປອດໄພໃນການຫຼິ້ນແບບຫຼິ້ນ ປະຕິບັດຕາມໄຟອຳນາດ.
2. ການບອກການປະຕິບັດຕົນ ຕາມໄຟອຳນາດ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບໜ່ວຍມົນສີເຫຼືອງ ແລະ ສີແດງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ :

1. ບອກຊື່ເກມ, ສີຂອງຮູບພາບໃນເກມ ຢ່າງຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບໜ່ວຍມົນສີເຫຼືອງ ແລະ ສີແດງ ຢ່າງຖືກຕ້ອງ.
3. ເຝິກຄວາມສາມັກຄີໃນການຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບໜ່ວຍມົນສີເຫຼືອງ ແລະ ສີແດງ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບໜ່ວຍມົນສີເຫຼືອງ ແລະ ສີແດງ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບໜ້າທີ່ຂອງ ຫູ, ຕາ ແລະ ປາກ.
3. ບົດເພງ ຮ່າງກາຍຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຮ່າງກາຍຂອງຂ້ອຍ.
2. ຄູສົນທະນາກ່ຽວກັບຊື່ເກມ, ສີຂອງຮູບພາບໃນແຜ່ນເກມ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ສີຂອງຮູບພາບ ແລະ ການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີຄວາມສາມັກຄີໃນການຫຼິ້ນເກມ ແລະ ການແບ່ງປັນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ສີຂອງຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບໜ່ວຍມົນສີເຫຼືອງ ແລະ ສີແດງ.
3. ຄວາມສາມັກຄີໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເຄື່ອງຫຼິ້ນໃນມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ ຢ່າງຖືກຕ້ອງ.
2. ຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ເຄື່ອງຫຼິ້ນໃນມຸມບົດບາດສົມມຸດ: ເຄື່ອງນຸ່ງເດັກນ້ອຍຍິງ, ເດັກນ້ອຍຊາຍ, ເຄື່ອງຫຼິ້ນເຮືອນນ້ອຍ, ເຄື່ອງມືແພດຂອງຈຳລອງ.
2. ເຄື່ອງຫຼິ້ນມຸມເກມການສຶກສາ: ເກມຕໍ່ຮູບພາບ, ເກມລຽນລຳດັບ, ເກມຈັບຄູ່ຮູບພາບທີ່ຄືກັນ.

### III. ສື່ການຮຽນ-ການສອນ

1. ເຄື່ອງຫຼິ້ນໃນມຸມບົດບາດສົມມຸດ: ເຄື່ອງນຸ່ງເດັກນ້ອຍຍິງ, ເດັກນ້ອຍຊາຍ ຫຼື ເຄື່ອງນຸ່ງຈຳລອງ, ເຄື່ອງຫຼິ້ນເຮືອນນ້ອຍ, ເຄື່ອງມືແພດຈຳລອງ, ຜັກ, ໝາກໄມ້ຈຳລອງ ແລະ ຕຸກກະຕາ.
2. ເຄື່ອງຫຼິ້ນໃນມຸມເກມການສຶກສາ: ເກມຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍ, ເກມຈັບຄູ່ທີ່ຄືກັນຮູບໜ່ວຍມົນສີເຫຼືອງ ແລະ ສີແດງ, ເກມຈັບຄູ່ຮູບພາບທີ່ຄືກັນໜ້າທີ່ຂອງຫູ, ຕາ ແລະ ປາກ, ເກມຈັບຄູ່ທີ່ຄືກັນຮູບພາບຕາມສີ: ໂສ້ງ, ເສື້ອ, ສີແດງ ແລະ ສີຟ້າ, ກະດານສຽບ ຫຼື ຕິດ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ, ຕອບກ່ຽວກັບສ່ວນປະກອບຂອງເລົ່າຄີງ.
2. ໃຫ້ເດັກສັງເກດ, ເລືອກເຄື່ອງຫຼິ້ນ, ເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການ ສຶກສາ.
3. ຄູສົນທະນາກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການ ສຶກສາ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນຊື່ເຄື່ອງຫຼິ້ນ, ການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
6. ສຶກສາອົບຮົມເດັກກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນເຂົ້າມຸມຫຼັງຈາກທີ່ຫຼິ້ນແລ້ວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບຊື່ເຄື່ອງຫຼິ້ນ, ຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການ ສຶກສາ.
2. ຄວາມມ່ວນຊື່ນໃນການຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກສ່ວນປະກອບຂອງເລົາຄີງ ແລະ ໜ້າທີ່ຂອງບ່າໄຫຼ່ຢ່າງຖືກຕ້ອງ.
2. ປະຕິບັດຄຳສັ່ງຕາມຈິນຕະນາການ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມຈິນຕະນາການ: ແກວ່ງແຂນ, ໝູນເອົ່າ ແລະ ຕົບມື.

### III. ສື່ການຮຽນ-ການສອນ

ການບໍລິຫານມື ແລະ ຕີນ ເບິ່ງປຶ້ມຄູ່ມືຄູ

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບສ່ວນປະກອບຂອງເລົາຄີງ ແລະ ໜ້າທີ່ຂອງບ່າໄຫຼ່.
2. ໃຫ້ເດັກບໍລິຫານມື ແລະ ຕີນ: ທ່າບີບນິ້ວມື, ທ່າເຢ່ງເຢ້ອັ້ນ ແລະ ລົງ.
3. ໃຫ້ເດັກເຕັ້ນຂາດຽວເບື້ອງຊ້າຍ ແລະ ເບື້ອງຂວາ.
4. ຄູສາທິດການປະຕິບັດຕາມຄຳສັ່ງຕາມຈິນຕະນາການ: ແກວ່ງແຂນ, ໝູນເອົ່າ ແລະ ຕົບມື.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນັ່ງຊັນຫົວເອົ່າເອົາມືຈັບປາຍຕີນ.
7. ໃຫ້ເດັກປະຕິບັດຄືນການເຄື່ອນໄຫວຄຳສັ່ງຕາມຈິນຕະນາການ.
8. ສຶກສາອົບຮົມເດັກກ່ຽວກັບຄວາມປອດໄພໃນການປະຕິບັດຕາມຄຳສັ່ງຕາມຈິນຕະນາການ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະກອບຂອງເລົາຄີງ.
2. ຄວາມມ່ວນຊື່ນໃນການປະຕິບັດຄຳສັ່ງຕາມຈິນຕະນາການ.
3. ຄວາມປອດໄພ ໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ແຂນ ແລະ ຂາຂອງຂ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເວົ້າຄຳສັບຕາມຮູບພາບ ແລະ ເລົ່າຄຳຄ່ອງ ແຂນຂາຂອງຂ້ອຍ ຢ່າງຖືກຕ້ອງ.
2. ບອກສ່ວນປະກອບຂອງແຂນ, ຂາ, ບອກໜ້າທີ່ຂອງມື ແລະ ຕີນຢ່າງຖືກຕ້ອງ.
3. ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການເວົ້າຄຳສັບໃນບົດຄຳຄ່ອງຕາມຮູບພາບ: ນິ້ວຕີນ, ກົກຂາ, ນິ້ວມື, ແຂ່ງ, ຫົວເຂົ່າ, ຝ່າມື, ກົກແຂນ, ແຂນສອກ; ການເລົ່າຄຳຄ່ອງ ແຂນຂາຂອງຂ້ອຍ.
2. ສ່ວນປະກອບຂອງແຂນ: ມີແຂນ, ກົກແຂນ, ແຂນສອກ, ມື, ຝ່າມື, ນິ້ວມື, ເລັບມື; ຂາ: ມີກົກຂາ, ຫົວເຂົ່າ, ແຂ່ງ, ຕີນ, ນິ້ວຕີນ, ຂໍ້ຕີນ, ເລັບຕີນ; ໜ້າທີ່ຂອງມື: ມືໃຊ້ໄວ້ຈັບບາຍ ແລະ ຕີນໃຊ້ໄວ້ຍ່າງ.
3. ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບມີຕົວ: ຝ (ຝ່າມື), ກ (ກົກແຂນ), ນ (ນິ້ວມື), ຄ (ແຂ່ງ), ຫ (ຫົວເຂົ່າ).

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ແຂນຂາຂອງຂ້ອຍ(ເບິ່ງປຶ້ມຄູ່ມືຄູ); ຮູບພາບ: ນິ້ວຕີນ, ກົກຂາ, ນິ້ວມື, ແຂ່ງ, ຫົວເຂົ່າ, ຝ່າມື, ກົກແຂນ ແລະ ແຂນສອກ; ຕົວເດັກ ຫຼື ໂປສະເຕີຮ່າງກາຍຂອງຄົນ.
2. ບັດຄຳສັບ: ຝ່າມື, ກົກແຂນ, ນິ້ວມື, ແຂ່ງ, ຫົວເຂົ່າ; ບັດພະຍັນຊະນະ ຝ, ກ, ນ, ຄ, ຫ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບສ່ວນຕ່າງໆຂອງຮ່າງກາຍ.
2. ໃຫ້ເດັກເວົ້າຄຳສັບໃນບົດຄຳຄ່ອງຕາມຮູບພາບ,ໃຫ້ເດັກເລົ່າຄຳຄ່ອງ.
3. ໃຫ້ເດັກສັງເກດແຜ່ນໂປສະເຕີ, ບອກກ່ຽວກັບສ່ວນປະກອບຂອງແຂນ, ຂາ; ໜ້າທີ່ຂອງມື ແລະ ຕີນ.
4. ໃຫ້ເດັກສັງເກດບັດຄຳສັບ, ພະຍັນຊະນະ, ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ຝ, ກ, ນ, ຄ, ຫ.
5. ໃຫ້ເດັກເລົ່າຄຳຄ່ອງຄືນ; ບອກສ່ວນປະກອບແຂນ, ຂາ; ໜ້າທີ່ມື, ຕີນ; ເວົ້າຄຳສັບ ແລະ ເວົ້າອອກສຽງຕາມຄຳສັບ.
6. ສຶກສາອົບຮົມເດັກກ່ຽວກັບການຮັກສາອະນາໄມມື ແລະ ຕີນໃຫ້ສະອາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການເວົ້າຄຳສັບໃນບົດຄຳຄ່ອງຕາມຮູບພາບ ແລະ ການເລົ່າຄຳຄ່ອງ.
2. ຄວາມຖືກຕ້ອງໃນການບອກສ່ວນປະກອບຂອງແຂນ, ຂາ ແລະ ການບອກໜ້າທີ່ຂອງມື ແລະ ຕີນ.
3. ຄວາມຖືກຕ້ອງໃນການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ທາສີຮູບພາບຝ່າມື

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກສ່ວນປະກອບຂອງຝ່າມື.
2. ເຝິກປະສາດສຳພັນລະຫວ່າງມືກັບສາຍຕາ ໂດຍການທາສີຮູບຝ່າມື.
3. ທາສີຮູບພາບຝ່າມືໃຫ້ສະອາດຈົບງາມ.

### II. ເນື້ອໃນຕົ້ນຕໍ

ການທາສີຮູບພາບຝ່າມື.

### III. ສື່ການຮຽນ-ການສອນ

1. ສີໄມ້ ຫຼື ສີທຽນ.
2. ເຈ້ຍແບບຮູບພາບຝ່າມືທີ່ທາສີແລ້ວ  ແລະ  ເຈ້ຍຮູບພາບຝ່າມື.
3. ບົດລຳຄ່ອງ ແຂນ, ຂາຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າລຳຄ່ອງແຂນ, ຂາຂອງຂ້ອຍປະກອບທ່າທາງຕາມຈິນຕະນາການ.
2. ຄູສົນທະນາກ່ຽວກັບສ່ວນປະກອບຂອງຝ່າມື.
3. ຄູແນະນຳ ແລະ ສາທິດການທາສີຮູບພາບຝ່າມື.
4. ໃຫ້ເດັກປະຕິບັດຕົວຈິງ, ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນຳສະເໜີຜົນງານ ການທາສີຮູບພາບຝ່າມື.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນປະຕິບັດກິດຈະກຳ ແລະ ຊ່ວຍກັນເກັບມ້ຽນຜົນງານໄວ້ຖືກບ່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກສ່ວນປະກອບຂອງຝ່າມື.
2. ຄວາມຄ່ອງແຄ້ວ, ວ່ອງໄວໃນການທາສີ.
3. ຄວາມສະອາດຈົບງາມຂອງການທາສີຮູບພາບຝ່າມື.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນສິ່ງບານຂ້າມຫົວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ແຂ່ງຂັນສິ່ງບານຂ້າມຫົວ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
2. ເຝິກປະສາດສຳພັນລະຫ່ວາງມື ແລະ ແສງຕາໃນການຫຼິ້ນແບບຫຼິ້ນສິ່ງບານຂ້າມຫົວ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນສິ່ງບານຂ້າມຫົວ.

### III. ສື່ການຮຽນ-ການສອນ

1. ໝາກບານ.
2. ບົດຄຳຄ່ອງ ແຂນຂາຂອງຂ້ອຍ.
3. ວິທີຫຼິ້ນ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກເລົ່າຄຳຄ່ອງ ແຂນຂາຂອງຂ້ອຍ ປະກອບທ່າທາງ ແລະ ສົນທະນາກ່ຽວກັບເນື້ອໃນຄຳຄ່ອງ.
2. ຄູສະເໜີ ແບບຫຼິ້ນແຂ່ງຂັນສິ່ງບານຂ້າມຫົວ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນແຂ່ງຂັນສິ່ງບານຂ້າມຫົວ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນ ກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນສິ່ງບານຂ້າມຫົວ.
5. ສຶກສາອົບຮົມເດັກໃຫ້ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຫຼິ້ນແລ້ວອະນາໄມຕົນ, ມືໃຫ້ສະອາດ ແລະ ເກັບມ້ຽນອຸປະກອນການຫຼິ້ນ.
6. ໃຫ້ເດັກເຮັດທ່າທາງນົກບິນຊ້າໆ ແລ້ວ ປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນການຫຼິ້ນແບບຫຼິ້ນແຂ່ງຂັນສິ່ງບານຂ້າມຫົວ.
2. ຄວາມຄ່ອງແຄ້ວໃນການຫຼິ້ນແບບຫຼິ້ນ ແຂ່ງຂັນສິ່ງບານຂ້າມຫົວ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບເດັກນ້ອຍໄປຕະຫຼາດກັບແມ່

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຮູບພາບໃນແຜ່ນເກມ ຢ່າງຖືກຕ້ອງ.
2. ເກມຕໍ່ຮູບພາບເດັກນ້ອຍໄປຕະຫຼາດກັບແມ່ ຢ່າງຖືກຕ້ອງ.
3. ເຝິກການເກັບມ້ຽນແຜ່ນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບເດັກນ້ອຍຈັບມືແມ່ຫິ້ວກະຕ່າຍ່າງໄປຕະຫຼາດ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບເດັກນ້ອຍໄປຕະຫຼາດກັບແມ່ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບໝ່ວຍມົນສີເຫຼືອງ ແລະ ສີແດງ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບໜ້າທີ່ຂອງແຂນ ແລະ ຂາ.
2. ຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມຕໍ່ຮູບພາບ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບ.
6. ສຶກສາອົບຮົມເດັກກ່ຽວກັບການເກັບມ້ຽນເກມໃຫ້ຖືກບ່ອນ ແລະ ເປັນລະບຽບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບເດັກນ້ອຍໄປຕະຫຼາດກັບແມ່.
3. ການເກັບມ້ຽນແຜ່ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເຄື່ອງຫຼິ້ນໃນມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ ຢ່າງຖືກຕ້ອງ.
2. ຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ເຄື່ອງຫຼິ້ນໃນມຸມສິລະປະສ້າງສັນ: ສໍສີໄມ້, ສໍສີທຽນ, ສໍດຳ, ເຈ້ຍ ຫຼື ປຶ້ມບົດເຝິກຫັດ, ດິນສຳລັບປັ້ນ, ເຊືອກ, ເຈ້ຍຂາວ ແລະ ທໍ່ດູດ.
2. ເຄື່ອງຫຼິ້ນໃນມຸມສຳຜັດ: ຮູບວົງມົນ, ຈະຕຸລັດ, ໄມໂຄໂຟນ, ກອງ, ກະແຊັກ, ໄມ້ບັ້ອກທາດສາມລ່ຽມ, ກ້ອນສາກ, ໝ່ວຍມົນ, ອ່າງດິນຊາຍ.

### III. ສື່ການຮຽນ-ການສອນ

1. ເຄື່ອງຫຼິ້ນໃນມຸມສິລະປະສ້າງສັນ: ສໍສີໄມ້, ສໍສີທຽນ, ສໍດຳ, ເຈ້ຍ ຫຼື ປຶ້ມບົດເຝິກຫັດ: ຮູບພາບເຄື່ອງນຸ່ງເດັກນ້ອຍຍິງ, ເດັກນ້ອຍຊາຍ, ຮູບໝາກ ກ້ຽງ, ຮູບຝ່າມື, ຈ້ຳເມັດເສັ້ນກົງ, ຮູບຜ້າພັນຄໍ, ຮູບຈ້ຳເມັດວົງມົນ, ດິນສຳລັບປັ້ນ, ຜ້າຢາງຮອງ, ເສື້ອກັນເປື້ອນ, ເຊືອກ, ທໍ່ດູດສີແດງ ແລະ ສີຟ້າ.
2. ເຄື່ອງໃນມຸມເຄື່ອງຫຼິ້ນສຳຜັດ: ຮູບວົງມົນ, ຈະຕຸລັດ, ໄມໂຄໂຟນ, ກອງ, ກະແຊັກ, ບັ້ອກທາດສາມລ່ຽມ, ກ້ອນສາກ, ໝ່ວຍມົນ ແລະ ອ່າງດິນຊາຍ.
3. ບົດຄຳຄ່ອງແຂນຂາຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ແຂນ ຂາ ຂອງຂ້ອຍ ປະກອບທ່າທາງຕາມຈິນຕະນາການ.
2. ໃຫ້ເດັກສັງເກດ, ເລືອກເຄື່ອງຫຼິ້ນ, ເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.
3. ຄູສົນທະນາຖາມ, ຕອບກ່ຽວກັບຊື່ເຄື່ອງຫຼິ້ນມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນຊື່ເຄື່ອງຫຼິ້ນ, ການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.
6. ສຶກສາອົບຮົມເດັກກ່ຽວກັບການແບ່ງປັນເຄື່ອງຫຼິ້ນ ແລະ ການເກັບມ້ຽນເຄື່ອງຫຼິ້ນເຂົ້າມຸມຫຼັງຈາກທີ່ຫຼິ້ນແລ້ວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບຊື່ເຄື່ອງຫຼິ້ນໃນມຸມສິລະປະສ້າງສັນ, ມຸມເຄື່ອງຫຼິ້ນສຳຜັດ.
2. ຄວາມມ່ວນຊື່ນໃນການຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ຈຸດປະສົງສຳລັບ ອາທິດທີ: 2

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບຂອງແຂນ, ຂາ ແລະ ບອກໜ້າທີ່ຂອງມື ແລະ ຕີນ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ການອະນາໄມຮ່າງກາຍ ຢ່າງມ່ວນຊື່ນ.
3. ບອກການບົວລະບັດຮັກສາຜົມ ແລະ ໃບໜ້າ ຢ່າງຖືກຕ້ອງ.
4. ສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ແຂນ ຂາຂອງຂ້ອຍ ຢ່າງມ່ວນຊື່ນ.
5. ບອກການບົວລະບັດຮັກສາຕາ ດັງ, ປາກ ແລະ ແຂ້ວ ຢ່າງຖືກຕ້ອງ.
6. ສະແດງທ່າທາງຕາມສຽງສັນຍານ ຢ່າງຖືກຕ້ອງ.
7. ສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມຈິນຕະນາການ ຢ່າງມ່ວນຊື່ນ.
8. ສະແດງທ່າທາງຕາມຈິນຕະນາການປະກອບເພງ ຢ່າງມ່ວນຊື່ນ.
9. ເຂົ້າຮ່ວມກິດຈະກຳຢ່າງປອດໄພ.

# ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ເລົ່າຄຳຄ່ອງ ຮັກຄວາມສະອາດ, ເວົ້າເປັນປະໂຫຍກສັ້ນໃນບົດຄຳຄ່ອງ: ຂ້ອຍຫວີຜົມ, ຂ້ອຍມັດຜົມ, ຂ້ອຍສະຜົມ ແລະ ຂ້ອຍລ້າງໜ້າ.
2. ບອກການບົວລະບັດຮັກສາຜົມ, ໃບໜ້າ, ຕາ, ຫູ, ດັງ, ປາກ, ແຂ້ວ, ມື ແລະ ຕີນ.
3. ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ຜ(ຜົມ), ບ(ໃບໜ້າ), ດ(ດັງ), ປ(ແປ້ງ).
4. ບອກທິດທາງ ເບື້ອງຊ້າຍ ແລະ ເບື້ອງຂວາ, ບອກຕົວເລກ 1-2 ແລະ ບອກຄ່າຈຳນວນ 1-2.
5. ເລົ່າຄຳຄ່ອງ ກ ໄກ່ເຖິງ ຕາ, ອ່ານອອກສຽງພະຍັນຊະນະໃນບົດຄຳຄ່ອງ ປະກອບຮູບພາບຕາມລຳດັບກ-ຕ ແລະ ຮ້ອງເພງ ຖູແຂ້ວ ຕາມຈັງຫວະ.
6. ຟັງນິທານເລື່ອງ ລ້າງມືໃຫ້ສະອາດ ແລະ ເວົ້າເປັນປະໂຫຍກສັ້ນໃນບົດນິທານ: ຂ້ອຍລ້າງມືໃສ່ສະບູ, ຂ້ອຍລ້າງຕີນ ແລະ ຂ້ອຍໃສ່ເກີບ.

# ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ເຝິກຄວາມແຂງແຮງກ້າມຊີ້ນມື ໂດຍການປັ້ນຮູບທ່ອນກົມສັ້ນ ແລະ ທ່ອນກົມຍາວ, ປັ້ນເປັນທ່ອນກົມ ແລະ ແຜ່ນແປປະກອບເປັນເຮືອນໃຫ້ຄ້າຍຄື.
2. ເຝິກຄວາມອົດທົນໃນການປັ້ນຕົວເລກ 2, ຮູບທ່ອນກົມສັ້ນ, ທ່ອນກົມຍາວຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມຕາມຮອຍຈ້ຳໃຫ້ສຳເລັດ.
3. ເຝິກກ້າມຊີ້ນອຸ້ງມື ແລະ ນີ້ວມືໃຫ້ແຂງແຮງ ໂດຍການປັ້ນຕົວເລກ 2 ແລະ ຮູບຝ່າມື.
4. ບອກຮູບຮ່າງລັກສະນະຂອງຜ້າມົນ ແລະ ຕົວເລກ 2.
6. ບອກຮູບຊົງຂອງຮູບທ່ອນກົມສັ້ນ ແລະ ທ່ອນກົມຍາວ.

7. ເຝິກປະສາດສຳພັນລະຫວ່າງມື ແລະ ສາຍຕາ ໂດຍການທາສີຮູບແຜ່ນມິນ.
8. ທາສີຮູບຜ້າແຜ່ນມິນໃຫ້ສະອາດຈົບງາມ ແລະ ບອກສ່ວນປະກອບຂອງຝ່າມື.
9. ເຝິກກ້າມຊີ້ນມື ແລະ ຄໍ່ມືໃຫ້ແຂງແຮງໂດຍການຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມຕາມຮອຍຈ້ຳ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ແຂ່ງຂັນກັນແກ້ຄຳທວາຍຮ່ວມກັບໝູ່ຢ່າງມ່ວນຊື່ນ.
2. ເຝິກການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ.
3. ເຝິກການສັງເກດ ແລະການຄົ້ນຄິດ.
4. ເຝິກການຟັງ ແລະຈຳແນກສຽງຕ່າງໆ.
5. ຫຼິ້ນແບບຫຼິ້ນ ມັດຕາທວາຍສຽງ ຮ່ວມກັນກັບໝູ່ຢ່າງມ່ວນຊື່ນ ແລະ ປອດໄພ.
6. ຫຼິ້ນແບບຫຼິ້ນ ລູລີ່ເຂົ້າສານ ຮ່ວມກັນກັບໝູ່ຢ່າງມ່ວນຊື່ນ ແລະ ປອດໄພ.
7. ເຝິກກ້າມຊີ້ນ ແຂນ, ຂາ ແລະ ລຳຕົວໃຫ້ມີຄວາມຄ່ອງແຄ້ວ.
8. ຫຼິ້ນແບບຫຼິ້ນ ແຂ່ງຂັນກັນກິນກ້ວຍ ຮ່ວມກັນກັບໝູ່ຢ່າງມ່ວນຊື່ນ ແລະ ປອດໄພ.
9. ເຝິກປະສາດສຳພັນລະຫວ່າງມື ແລະ ສາຍຕາໃນການປອກກ້ວຍ.
10. ເຝິກຄາງກະໄຕໃນເວລາຫຍ້ຳກ້ວຍ.
11. ຫຼິ້ນ ເຄື່ອງຫຼິ້ນໃນເດີ່ນ ຂີ່ຕະລູດ ຮ່ວມກັນກັບໝູ່ຢ່າງມ່ວນຊື່ນ ແລະ ປອດໄພ.
12. ເຝິກກ້າມຊີ້ນຂາ, ແຂນໃຫ້ມີຄວາມແຂງແຮງແລະ ຄ່ອງແຄ້ວ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ຈັບຄູ່ທີ່ຄືກັນຮູບພາບການສະຜົມ, ຫວີຜົມ, ລ້າງໜ້າ ຢ່າງຖືກຕ້ອງ.
2. ຈັດໝວດໝູ່ຮູບວົງມົນ, ໜ່ວຍມົນ ຢ່າງຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຮູບພາບໂສ້ງ, ເສື້ອຊຸດສີແດງ, ຊຸດສີຟ້າ.
4. ຕໍ່ຮູບພາບເດັກນ້ອຍຖູແຂ້ວ ຢ່າງຖືກຕ້ອງ.
5. ລຽນລຳດັບຮູບພາບຂັ້ນຕອນການລ້າງມື ຢ່າງຖືກຕ້ອງ.
6. ບອກຊື່ເກມ, ຮູບພາບ, ສີ ທີ່ມີຢູ່ໃນແຜ່ນເກມ ຢ່າງຖືກຕ້ອງ.
7. ເຝິກຄວາມອົດທົນ, ຄວາມສາມັກຄີ ແລະ ການເກັບມ້ຽນເກມ ໃນການຫຼິ້ນເກມ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ ຢ່າງຖືກຕ້ອງ.
2. ມີຄວາມອົດທົນ ແລະ ມີຄວາມສາມັກຄີໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.
3. ຫຼິ້ນຕາມມຸມບົດບາດສົມມຸດ, ມຸມເກມການສຶກສາ, ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມ ສິລະປະສ້າງສັນ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງ ການອະນາໄມຮ່າງກາຍ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກສ່ວນປະກອບຂອງແຂນ, ຂາ; ບອກໜ້າທີ່ຂອງມື ແລະ ຕີນ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

## II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ການອະນາໄມຮ່າງກາຍ: ອາບນໍ້າ, ສະຜົມ, ຫວີຜົມ ແລະ ມັດຜົມ.

## III. ສື່ການຮຽນ-ການສອນ

1. ບົດເລື່ອງ ການອະນາໄມຮ່າງກາຍ.
2. ການບໍລິຫານລຳຄໍ ແລະ ແຂນ ເບິ່ງປຶ້ມຄູ່ມືຄູ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການອະນາໄມຮ່າງກາຍ.
2. ໃຫ້ເດັກບໍລິຫານລຳຄໍ ແລະ ແຂນ: ທ່າຫງ່ຽງລຳຄໍເບື້ອງຊ້າຍ ແລະ ເບື້ອງຂວາ ແລະ ທ່າແກວ່ງແຂນ.
3. ໃຫ້ເດັກຍ່າງໂຢ່ງໂຢະເປັນແຖວຊື່.
4. ຄູສາທິດການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ການອະນາໄມຮ່າງກາຍ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນອນພັບຂາເຂົ້າ ແລະ ຢຽດຂາອອກ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.
8. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການອະນາໄມຮ່າງກາຍ.
2. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.
3. ຄວາມປອດໄພ ໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ຜົມ ແລະ ໃບໜ້າສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ຮັກຄວາມສະອາດ ແລະ ເວົ້າເປັນປະໂຫຍກສັ້ນໃນບົດຄຳຄ່ອງຢ່າງຖືກຕ້ອງ.
2. ບອກການບົວລະບັດຮັກສາຜົມ,ໃບໜ້າ ແລະ ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການເລົ່າຄຳຄ່ອງ ຮັກຄວາມສະອາດ ແລະ ເວົ້າເປັນປະໂຫຍກສັ້ນໃນບົດຄຳຄ່ອງ: ຂ້ອຍຫວີຜົມ, ຂ້ອຍເປຍຜົມ, ຂ້ອຍມັດຜົມ, ຂ້ອຍສະຜົມ ແລະ ຂ້ອຍລ້າງໜ້າ.
2. ການບົວລະບັດຮັກສາຜົມ: ສະຜົມ, ເຊັດຜົມໃຫ້ແຫ້ງດ້ວຍຜ້າທີ່ສະອາດ, ຫວີຜົມ, ເປຍຜົມ, ມັດຜົມ ແລະ ຮັກສາຜົມບໍ່ໃຫ້ມີເຫົາ, ໃບໜ້າ: ລ້າງໜ້າດ້ວຍນ້ຳທີ່ສະອາດ, ເຊັດໜ້າໃຫ້ແຫ້ງດ້ວຍຜ້າທີ່ສະອາດ ແລະ ຮັກສາໃບໜ້າໃຫ້ສະອາດຈົບງາມ.
3. ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ຜ(ຜົມ), ບ(ໃບໜ້າ).

### III. ສື່ການຮຽນ-ການສອນ

ບົດຄຳຄ່ອງ ຮັກຄວາມສະອາດ (ເບິ່ງປຶ້ມຄູ່ມືຄູ); ບັດຄຳສັບ: ຜົມ,ໃບໜ້າ ແລະ ບັດພະຍັນຊະນະ ຜ, ບ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບພາກສ່ວນຕ່າງໆຂອງຮ່າງກາຍ.
2. ຄູສະເໜີຊື່ຄຳຄ່ອງ, ໃຫ້ເດັກເລົ່າຄຳຄ່ອງ ແລະ ເວົ້າເປັນປະໂຫຍກສັ້ນໃນບົດຄຳຄ່ອງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາຖາມ-ຕອບກ່ຽວກັບການບົວລະບັດຮັກສາຜົມ, ໃບໜ້າ, ໃຫ້ເດັກບອກການບົວລະບັດຮັກສາຜົມ ແລະ ໃບໜ້າ.
4. ໃຫ້ເດັກສັງເກດບັດຄຳສັບ, ພະຍັນຊະນະ, ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ຜ,ບ.
5. ໃຫ້ເດັກເລົ່າຄຳຄ່ອງຄືນ, ບອກການບົວລະບັດຮັກສາຜົມ,ໃບໜ້າ, ເວົ້າເປັນປະໂຫຍກສັ້ນ ແລະ ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ຜ,ບ.
6. ສຶກສາອົບຮົມເດັກກ່ຽວກັບການບົວລະບັດຮັກສາຜົມ ແລະ ໃບໜ້າໃຫ້ສະອາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການເລົ່າຄຳຄ່ອງ ຮັກຄວາມສະອາດ ແລະ ຄວາມຖືກຕ້ອງການເວົ້າເປັນປະໂຫຍກສັ້ນ.
2. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບການບົວລະບັດຮັກສາຜົມ, ໃບໜ້າ ແລະ ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນທ່ອນກົມສັ້ນ ແລະ ຍາວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຮູບຊົງຂອງຮູບທ່ອນກົມສັ້ນ ແລະ ທ່ອນກົມຍາວ.
2. ເຝິກຄວາມແຂງແຮງກ້າມຊີ້ນມື ໂດຍການປັ້ນຮູບທ່ອນກົມສັ້ນ ແລະ ທ່ອນກົມຍາວໃຫ້ຄ້າຍຄື.
3. ເຝິກຄວາມອົດທົນໃນການປັ້ນຮູບທ່ອນກົມສັ້ນ ແລະ ທ່ອນກົມຍາວໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການປັ້ນເປັນຮູບທ່ອນກົມສັ້ນ ແລະ ທ່ອນກົມຍາວ.

### III. ສື່ການຮຽນ-ການສອນ

1. ດິນ ຫຼື ແປ້ງສຳລັບປັ້ນ, ແບບທ່ອນກົມສັ້ນ ແລະ ຍາວທີ່ປັ້ນແລ້ວ.
2. ຜ້າຢາງ ຫຼື ເຈ້ຍຮອງປັ້ນ.
3. ຊາມນ້ຳ, ສະບູ ແລະ ຜ້າເຊັດມື.
4. ບົດຄຳຄ່ອງ ຮັກສາຄວາມສະອາດ.
5. ຜ້າ ຫຼື ເສື້ອກັນເປື້ອນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຮັກສາຄວາມສະອາດປະກອບທ່າທາງ.
2. ຄູສົນທະນາກ່ຽວກັບຮູບຊົງຂອງຮູບທ່ອນກົມສັ້ນ ແລະ ຍາວ.
3. ຄູແນະນຳ, ສາທິດການປັ້ນເປັນທ່ອນກົມສັ້ນ ແລະ ຍາວ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອເດັກ.
5. ໃຫ້ເດັກນຳສະເໜີຜົນງານ ການປັ້ນເປັນທ່ອນກົມສັ້ນ ແລະ ທ່ອນກົມຍາວ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນປະຕິບັດກິດຈະກຳ, ແບ່ງປັນດິນປັ້ນໃຫ້ກັນ, ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ ແລະ ການອະນາໄມມືໃຫ້ສະອາດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຮູບຊົງຂອງຮູບທ່ອນກົມສັ້ນ ແລະ ທ່ອນກົມຍາວ.
2. ຄວາມຄ້າຍຄືຂອງຮູບປັ້ນ.
3. ຄວາມອົດທົນໃນການປັ້ນຮູບທ່ອນກົມສັ້ນ ແລະ ທ່ອນກົມຍາວ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ແຂ່ງຂັນກັນແກ້ຄຳທວາຍ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ.
2. ເຝິກການສັງເກດ ແລະ ການຄົ້ນຄິດ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ຮັກຄວາມສະອາດ.
2. ວິທີຫຼິ້ນ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກເລົ່າຄຳຄ່ອງ ຮັກຄວາມສະອາດ ປະກອບທ່າທາງ.
2. ຄູສະເໜີແບບຫຼິ້ນ ແຂ່ງຂັນກັນແກ້ຄຳທວາຍ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນ ແຂ່ງຂັນກັນແກ້ຄຳທວາຍ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນ ແຂ່ງຂັນກັນແກ້ຄຳທວາຍ.
5. ສຶກສາອົບຮົມເດັກ ໃຫ້ຕັ້ງໃຈຟັງຄຳທວາຍ, ມີຄວາມວ່ອງໄວໃນການແກ້ຄຳທວາຍ.
6. ໃຫ້ເດັກຈັບແຂນກັນຍ່າງໄປທາງຂ້າງຊ້າຍ 5 ບາດກ້າວ, ຍ່າງໄປທາງຂ້າງຂວາ 5 ບາດກ້າວ ແລ້ວປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ:

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນເວລາຫຼິ້ນແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ ຮ່ວມກັບໝູ່ເພື່ອນ.
2. ການຄົ້ນຄິດ ແລະ ຄວາມວ່ອງໄວໃນການແກ້ຄຳທວາຍ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບການສະຜົມ, ຫວີຜົມ, ລ້າງໜ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ

1. ບອກຊື່ເກມ, ຮູບພາບໃນແຜ່ນເກມຢ່າງຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບການສະຜົມ, ຫວີຜົມ, ລ້າງໜ້າ ຢ່າງຖືກຕ້ອງ.
3. ເຝິກຄວາມອົດທົນໃນການຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບການສະຜົມ, ຫວີຜົມ, ລ້າງໜ້າ,

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບການສະຜົມ, ຫວີຜົມ, ລ້າງໜ້າ.
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບເດັກນ້ອຍໄປຕະຫຼາດກັບແມ່.
3. ບົດເພງ ຮ່າງກາຍຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຮ່າງກາຍຂອງຂ້ອຍ.
2. ຄູສົນທະນາກ່ຽວກັບຊື່ເກມ, ຮູບພາບໃນແຜ່ນເກມ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ຫຼິ້ນເກມຈັບຄູ່ທີ່ຄືກັນ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນໃນການຫຼິ້ນເກມ ແລະ ການລໍຖ້າຕາມລຳດັບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບການສະຜົມ, ຫວີຜົມ, ລ້າງໜ້າ.
3. ຄວາມອົດທົນໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາຢ່າງມ່ວນຊື່ນ.
2. ມີຄວາມສາມັກຄີໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນພໍ່ ຫຼື ແມ່ ປ້ອນເຂົ້າ, ອາບນໍ້າ ແລະ ນຸ່ງເຄື່ອງໃຫ້ລູກ.
2. ການຫຼິ້ນໃນມຸມຫຼິ້ນເກມການສຶກສາ: ຫຼິ້ນເກມຕໍ່ຮູບພາບ ເດັກນ້ອຍໄປຕະຫຼາດກັບແມ່, ເກມຈັບຄູ່ທີ່ຄືກັນຮູບພາບການສະຜົມ, ຫວີຜົມ, ລ້າງໜ້າ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງຫຼິ້ນເຮືອນນ້ອຍ, ຖ້ວຍ, ບ່ວງ, ຈອກ, ຕຸກກະຕາ, ເຄື່ອງນຸ່ງຕົວຈິງ ຫຼື ຈຳລອງ.
2. ມຸມເກມການສຶກສາ: ເກມຕໍ່ຮູບພາບ ເດັກນ້ອຍໄປຕະຫຼາດກັບແມ່, ເກມຈັບຄູ່ທີ່ຄືກັນຮູບພາບການສະຜົມ, ຫວີຜົມ, ລ້າງໜ້າ; ກະດານສຽບ ຫຼື ຕິດ.
3. ບົດຄຳຄ່ອງ ຮັກຄວາມສະອາດ; ບັດສັນຍະລັກເຂົ້າມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຮັກຄວາມສະອາດປະກອບທ່າທາງຕາມຈິນຕະນາການ.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນ ຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
6. ສຶກສາອົບຮົມເດັກກ່ຽວກັບມາລະຍາດໃນການຫຼິ້ນຮ່ວມໝູ່ຢູ່ໃນຫ້ອງຮຽນ ແລະການເກັບມ້ຽນເຄື່ອງຫຼິ້ນໃຫ້ເປັນລະບຽບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
2. ຄວາມສາມັກຄີໃນການຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບຄຳຄ່ອງ ແຂນຂາຂອງຂ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການບົວລະບັດຮັກສາຜົມ ແລະ ໃບໜ້າ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ແຂນ ແລະ ຂາຂອງຂ້ອຍ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດຄຳຄ່ອງ ແຂນ, ຂາຂອງຂ້ອຍ ເບິ່ງປື້ມຄູ່ມືຄູ.
3. ການບໍລິຫານມື ແລະ ຕີນ ເບິ່ງປື້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການບົວລະບັດຮັກສາຜົມ ແລະ ໃບໜ້າ.
2. ໃຫ້ເດັກບໍລິຫານມື ແລະ ຕີນ: ທ່າຕົບມືກ້ອງຂາເບື້ອງຊ້າຍ, ເບື້ອງຂວາ ແລະ ທ່າໝູນຄໍ່ຕີນ.
3. ໃຫ້ເດັກເຕັ້ນເຂົ້າວົງມົນ.
4. ຄູສາທິດການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ແຂນ, ຂາຂອງຂ້ອຍ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນັ່ງບີບບາໄຫຼ່.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
8. ສຶກສາອົບຮົມເດັກກ່ຽວກັບ ມາລະຍາດໃນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກ ການບົວລະບັດຮັກສາຜົມ ແລະ ໃບໜ້າ.
2. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
3. ຄວາມປອດໄພໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ຕາ ແລະ ຫູສະອາດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການບົວລະບັດຮັກສາຕາ ແລະ ຫູຢ່າງຖືກຕ້ອງ.
2. ບອກທິດທາງ ຢ່າງຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

1. ການບົວລະບັດຮັກສາຕາ: ລ້າງບໍລິເວນຕາດ້ວຍນ້ຳທີ່ສະອາດ, ເຊັດຕາດ້ວຍຜ້າທີ່ສະອາດ, ລະວັງບໍ່ໃຫ້ຂີ້ຝຸ່ນ ຫຼື ແມງໄມ້ເຂົ້າຕາ ແລະ ບໍ່ເອົາມືເປື້ອນຖູຕາ.

- ການບົວລະບັດຮັກສາຫູ: ເຊັດຫູດ້ວຍຜ້າທີ່ສະອາດ, ບໍ່ເປີດສຽງຈາກວິທະຍຸ, ໂທລະພາບ, ເທັບດັງເກີນໄປ, ລະວັງບໍ່ໃຫ້ນ້ຳ ແລະ ສິ່ງຕ່າງໆເຂົ້າຫູ.

2. ທິດທາງ: ເບື້ອງຊ້າຍ ແລະ ເບື້ອງຂວາ.

## III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ຮັກຄວາມສະອາດ (ເບິ່ງປື້ມຄູ່ມືຄູ).
2. ຮູບພາບ: ເດັກນ້ອຍເອົາຜ້າເຊັດຕາ ແລະ ເຊັດຫູ.
3. ຕົວເດັກ ແລະ ຜ້າ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຮັກຄວາມສະອາດ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາຖາມ-ຕອບກ່ຽວກັບການບົວລະບັດຮັກສາຕາ ແລະ ຫູ.
3. ໃຫ້ເດັກເຝິກປະຕິບັດຕົວຈິງການບົວລະບັດຮັກສາຕາ ແລະ ຫູ.
4. ໃຫ້ເດັກຢືນວາແຂນ ແລະ ບອກທິດທາງ.
5. ໃຫ້ເດັກເວົ້າຄືນການບົວລະບັດຮັກສາຕາ, ຫູ; ປະຕິບັດຕົວຈິງ ແລະ ບອກທິດທາງ.
6. ສຶກສາອົບຮົມເດັກກ່ຽວກັບການບົວລະບັດຮັກສາຕາ, ຫູໃຫ້ສະອາດ ແລະ ປອດໄພ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບການບົວລະບັດຮັກສາຕາ ແລະ ຫູ.
2. ຄວາມຖືກຕ້ອງໃນການບອກທິດທາງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບຜ້າແພມົນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຮູບຮ່າງລັກສະນະຂອງຜ້າແພມົນ.
2. ເຝິກປະສາດສຳພັນລະຫວ່າງມື ແລະ ສາຍຕາ ໂດຍການທາສີຮູບຜ້າແພມົນ.
3. ທາສີຮູບພາບຜ້າແພມົນໃຫ້ສະອາດຈົບງາມ.

### II. ເນື້ອໃນຕົ້ນຕໍ

ການທາສີຮູບຜ້າແພມົນ.

### III. ສື່ການຮຽນ-ການສອນ

1. ສີໄມ້ ຫຼື ສີທຽນ.
2. ເຈ້ຍແບບຮູບຜ້າແພມົນທີ່ທາສີແລ້ວ ແລະ ເຈ້ຍຮູບພາບແພມົນ.
3. ຜ້າແພມົນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບີບ, ນວດຝ່າມື, ນິ້ວມື, ຖູຝ່າມື
2. ຄູສົນທະນາກ່ຽວກັບຮູບຮ່າງລັກສະນະຂອງຜ້າແພມົນ.
3. ຄູແນະນຳ ແລະ ສາທິດການທາສີຮູບຜ້າແພມົນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນຳສະເໜີຜົນງານການທາສີຮູບຜ້າແພມົນ.
6. ສຶກສາອົບຮົມເດັກໃຫ້ມີອັດທິບປະຕິບັດກິດຈະກຳ, ຊ່ວຍເຫຼືອໝູ່ເພື່ອນ, ບໍ່ຂີດຂຽນໃສ່ໂຕະ, ຕັ່ງ ແລະ ຊ່ວຍກັນເກັບມ້ຽນຜົນງານໄວ້ບ່ອນທີ່ຄູກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຮູບຮ່າງລັກສະນະຂອງຜ້າແພມົນ.
2. ຄວາມຄ່ອງແຄ້ວໃນການທາສີຮູບພາບ ຜ້າແພມົນ.
3. ຄວາມສະອາດຈົບງາມຂອງການທາສີຮູບພາບຜ້າແພມົນ.

# ກິດຈະກໍາການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ  ມັດຕາທວາຍສຽງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ມັດຕາທວາຍສຽງ ຮ່ວມກັບກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
2. ເຝິກການຟັງ ແລະ ຈໍາແນກສຽງຕ່າງໆ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ  ມັດຕາທວາຍສຽງ

### III. ສື່ການຮຽນ-ການສອນ

1. ໄມ້, ກະປ໋ອງ, ກ້ອນຫີນຢ່າງລະ  2 ອັນ ແລະ ຜ້າມັດຕາ 1 ຜືນ.
2. ບົດຄໍາຄ່ອງ  ຮັກຄວາມສະອາດ.
3. ວິທີຫຼິ້ນ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກເລົ່າຄໍາຄ່ອງ  ຮັກຄວາມສະອາດ ປະກອບທ່າທາງ.
2. ຄູສະເໜີ ແບບຫຼິ້ນ ມັດຕາທວາຍສຽງ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນ ມັດຕາທວາຍສຽງ, ຄູຕິດຕາມ ແລະ ຊ່ວຍແນະນໍາ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ  ມັດຕາທວາຍສຽງ.
5. ສຶກສາອົບຮົມເດັກໃຫ້ຕັ້ງໃຈຟັງຈໍາແນກສຽງ ແລະ ຫຼິ້ນແລ້ວຊ່ວຍກັນເກັບມ້ຽນອຸປະກອນ.
6. ໃຫ້ເດັກເຮັດທ່າທາງເປັນແມງກະເບື້ອບິນໄປຮອບໆບໍລິເວນ ແລ້ວປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນການຫຼິ້ນແບບຫຼິ້ນ ມັດຕາທວາຍສຽງ.
2. ການຟັງ ແລະ ຄວາມຖືກຕ້ອງໃນການຈໍາແນກສຽງຕ່າງໆ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັດໝວດໝູ່ຮູບວົງມົນ ແລະ ໜ່ວຍມົນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ

1. ບອກຊື່ເກມ, ຮູບພາບໃນແຜ່ນເກມ ຢ່າງຖືກຕ້ອງ.
2. ຈັດໝວດໝູ່ຮູບວົງມົນ ແລະ ໜ່ວຍມົນ ຢ່າງຖືກຕ້ອງ.
3. ເຝິກຄວາມສາມັກຄີໃນການຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັດໝວດໝູ່ຮູບວົງມົນ ແລະ ໜ່ວຍມົນ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັດໝວດໝູ່ຮູບວົງມົນ ແລະ ໜ່ວຍມົນ (ເກມ ສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບການສະຜົມ, ຫວີຜົມ, ລ້າງໜ້າ.
3. ບົດເພງ ຮ່າງກາຍຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຮ່າງກາຍຂອງຂ້ອຍ.
2. ຄູສົນທະນາກ່ຽວກັບຊື່ເກມ, ຮູບພາບໃນແຜ່ນເກມ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັດໝວດໝູ່.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນໃນການຫຼິ້ນເກມ ແລະ ການລໍຖ້າຕາມລຳດັບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັດໝວດໝູ່ຮູບວົງມົນ ແລະ ໜ່ວຍມົນ.
3. ຄວາມສາມັກຄີໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ມີຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ວາງຮູບເລຂາຄະນິດຕາມແບບ ຮູບວົງມົນ ແລະ ຈະຕຸລັດ ສະຫຼັບກັນ 3 ຄູ່, ຂີດເສັ້ນ ຊື່ ແຕ່ຊ້າຍຫາຂວາ ແລະ ແຕ່ຂວາຫາຊ້າຍໃນອ່າງດິນຊາຍ.
2. ການຫຼິ້ນໃນມຸມສິລະປະສ້າງສັນ: ຂີດເສັ້ນຊື່ແຕ່ລຸ່ມຂຶ້ນເທິງ, ເທິງລົງລຸ່ມ, ຊ້າຍຫາຂວາ, ຂວາຫາຊ້າຍ, ຂີດເສັ້ນເນີ້ງ ຊ້າຍ, ຂວາ, ເທິງ ແລະ ລຸ່ມ; ປັ້ນດິນເປັນທ່ອນສັ້ນ ແລະ ຍາວ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ຮູບວົງມົນ, ຮູບຈະຕຸລັດ ແລະ ອ່າງດິນຊາຍ.
2. ມຸມສິລະປະສ້າງສັນ: ເຈ້ຍຫຼືປຶ້ມບົດເຝິກຫັດ ຈ້ຳເມັດຂີດເສັ້ນຊື່ແຕ່ລຸ່ມຂຶ້ນເທິງ, ເທິງລົງລຸ່ມ, ຊ້າຍ ຫາຂວາ, ຂວາຫາຊ້າຍ, ຈ້ຳເມັດຂີດເສັ້ນເນີ້ງຊ້າຍ, ຂວາ, ເທິງ ແລະ ລຸ່ມ; ດິນສຳລັບປັ້ນ, ຜ້າຢາງຮອງ ແລະ ເສື້ອກັນເປື້ອນ.
3. ບົດຄຳຄ່ອງ ກ ໄກ່ ເຖິງ ຕ ຕາ; ບັດສັນຍະລັກເຂົ້າມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງກ ໄກ່ ເຖິງ ຕ ຕາປະກອບທ່າທາງຕາມຈິນຕະນາການ.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
6. ສຶກສາອົບຮົມເດັກກ່ຽວກັບການແບ່ງປັນເຄື່ອງຫຼິ້ນ ແລະ ຄວາມອົດທົນໃນການຫຼິ້ນຮ່ວມ ໝູ່ຢູ່ໃນຫ້ອງຮຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
2. ຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານ ຕົບກອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການບົວລະບັດຮັກສາຕາ ແລະ ຫູ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມສຽງສັນຍານ ຢ່າງຖືກຕ້ອງ.
3. ເຂົ້າຮ່ວມກິດຈະກຳ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານ: ຕົບກອງ 1 ບາດ ເຮັດທ່າທາງຈັບຜ້າແພມົນນ້ອຍ, ຕົບກອງ 2 ບາດ ເຮັດທ່າທາງເຊັດດັງ, ຕົບກອງ 3 ບາດ ເຮັດທ່າທາງພັບຜ້າແພມົນ.

### III. ສື່ການຮຽນ-ການສອນ

1. ກອງ.
2. ການບໍລິຫານແຂນ ແລະ ຂາ ເບິ່ງປຶ້ມຄູ່ມືຄູ.
3. ເຊືອກ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການບົວລະບັດຮັກສາຕາ ແລະ ຫູ.
2. ໃຫ້ເດັກບໍລິຫານແຂນ ແລະ ຂາ: ທ່າແກວ່ງແຂນໄປມາເບື້ອງຊ້າຍ ແລະ ເບື້ອງຂວາ, ຢຶນຂາດຽວເບື້ອງຊ້າຍ ແລະ ເບື້ອງຂວາ ວາແຂນອອກ.
3. ໃຫ້ເດັກແລ່ນລອດເຊືອກ.
4. ຄູສາທິດການສະແດງທ່າທາງຕາມສຽງສັນຍານ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກຢືນບີບແຂນ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານ.
8. ສຶກສາອົບຮົມເດັກກ່ຽວກັບຄວາມປອດໄພໃນການສະແດງທ່າທາງຕາມສຽງສັນຍານ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການບົວລະບັດຮັກສາຕາ ແລະ ຫູ.
2. ຄວາມຖືກຕ້ອງການສະແດງທ່າທາງຕາມສຽງສັນຍານ.
3. ຄວາມມ່ວນຊື່ນ ແລະ ຄວາມປອດໄພໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ດັງສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການບົວລະບັດຮັກສາດັງ ຢ່າງຖືກຕ້ອງ.
2. ເລົ່າຄຳຄ່ອງ ກ ໄກ່ ເຖິງ ຕ ຕາ ແລະ ອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບ ກ-ຕ ຢ່າງຖືກຕ້ອງ.
3. ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບຢ່າງຖືກຕ້ອງ ແລະ ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ການບົວລະບັດຮັກສາດັງ: ລ້າງດັງດ້ວຍນ້ຳທີ່ສະອາດ, ເຊັດດັງດ້ວຍຜ້າທີ່ສະອາດ, ໃຊ້ມື ຫຼື ຜ້າທີ່ສະອາດ, ເພື່ອປ້ອງກັນກິ່ນເໝັນ ແລະ ຂີ້ຝຸ່ນ.
2. ການເລົ່າຄຳຄ່ອງ ກ ໄກ່ ເຖິງ ຕ ຕາ ແລະ ອານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບ ກ-ຕ; ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ດ (ດັງ), ຜ (ຜ້າ).

### III. ສື່ການຮຽນ-ການສອນ

ບົດຄຳຄ່ອງ ກ ໄກ່ ເຖິງ ຕ ຕາ (ເບິ່ງປຶ້ມຄູ່ມືຄູ ), ແຜ່ນໂປສະເຕີຕົວອັກສອນລາວ: ກ-ຕ; ຮູບພາບ: ເດັກນ້ອຍ ເອົາຜ້າເຊັດດັງ; ຕົວເດັກ, ຜ້າສະອາດ, ບັດຄຳສັບ: ດັງ, ຜ້າ ແລະ ບັດພະຍັນຊະນະ ດ, ຜ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບການບົວລະບັດຮັກສາຕາ ແລະ ຫູ.
2. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາ ແລະ ໃຫ້ເດັກບອກການບົວລະບັດຮັກສາດັງຂອງເດັກ.
3. ຄູສະເໜີຊື່ຄຳຄ່ອງ, ໃຫ້ເດັກເລົ່າຄຳຄ່ອງ ແລະ ຄູສົນທະນາກ່ຽວກັບເນື້ອໃນຄຳຄ່ອງ.
4. ໃຫ້ເດັກສັງເກດແຜ່ນໂປສະເຕີ, ອ່ານອອກສຽງພະຍັນຊະນະຕາມຮູບພາບ: ກ-ຕ.
5. ໃຫ້ເດັກສັງເກດບັດຄຳສັບ, ບັດພະຍັນຊະນະ ແລະ ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ ທີ່ມີຕົວ ດ,ຜ.
6. ໃຫ້ເດັກເລົ່າຄຳຄ່ອງຄືນ, ອ່ານອອກສຽງພະຍັນຊະນະ, ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ.
7. ສຶກສາອົບຮົມເດັກກ່ຽວກັບການບົວລະບັດຮັກສາດັງໃຫ້ສະອາດ ແລະ ປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບການບົວລະບັດຮັກສາດັງ.
2. ຄວາມຖືກຕ້ອງການເລົ່າຄຳຄ່ອງ; ການອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບ ກ-ຕ.
3. ຄວາມຖືກຕ້ອງ ແລະ ຊັດເຈນໃນການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກທິດທາງຂອງລູກສອນໃນການຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມ.
2. ເຝິກກ້າມຊີ້ນມື ແລະ ຄໍ່ແຂນໃຫ້ແຂງແຮງໂດຍການຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມຕາມຮອຍຈ້ຳ.
3. ຄວາມອົດທົນໃນການຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມຕາມຮອຍຈ້ຳໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມ ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ ຫຼື ສໍສີ.
2. ເຈ້ຍແບບຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມຕາມຮອຍຈ້ຳ.
3. ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 1 ຫຼື ເຈ້ຍຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມ.
4. ບົດເພງ ຮ່າງກາຍຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຮ່າງກາຍຂອງຂ້ອຍປະກອບທ່າທາງ.
2. ຄູສົນທະນາກ່ຽວກັບການຂີດເສັ້ນຕາມທິດທາງຂອງລູກສອນ.
3. ຄູແນະນຳ, ສາທິດການຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມຕາມຮອຍຈ້ຳ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມແນະນຳເດັກ.
5. ໃຫ້ເດັກນຳສະເໜີຜົນງານ ການຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນປະຕິບັດກິດຈະກຳ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນໄວ້ບ່ອນກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກທິດທາງຂອງລູກສອນໃນການຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມ.
2. ຄວາມແຂງແຮງຂອງມືໃນການຂີດເສັ້ນ.
3. ຄວາມອົດທົນໃນການຂີດເສັ້ນເບື້ອງຊ້າຍ, ຂວາ, ເທິງ ແລະ ລຸ່ມຕາມຮອຍຈ້ຳໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ລູ່ລີ່ເຂົ້າສານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ ຮ່ວມກັນກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
2. ເຝິກກ້າມຊີ້ນແຂນ, ຂາ ແລະ ລຳຕົວໃຫ້ມີຄວາມຄ່ອງແຄ້ວ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ລູ່ລີ່ເຂົ້າສານ.
2. ວິທີຫຼິ້ນ ເບິ່ງປຶ້ມຄູ່ມືຄູ.
3. ບົດຄຳຄ່ອງ ກ ໄກ່ ເຖິງ ຕ ຕາ.

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກເລົ່າຄຳຄ່ອງ ກ ໄກ່ ເຖິງ ຕ ຕາ ປະກອບທ່າທາງ
2. ຄູສະເໜີແບບຫຼິ້ນ ລູ່ລີ່ເຂົ້າສານ ແລະ ສາທິດວິທີຫຼິ້ນແບບຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
5. ສຶກສາອົບຮົມເດັກໃຫ້ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ບໍ່ຍູ້ກັນລົ້ມ ແລະ ໃຫ້ມີສະຕິລະວັງຕົວ.
6. ໃຫ້ເດັກຄ້ຳແອວ ແລ້ວ ນັ່ງລົງ ແລະ ລຸກຂຶ້ນຊ້າໆແລ້ວປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນເວລາຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
2. ຄວາມຄ່ອງແຄ້ວໃນການໃຊ້ແຂນ, ຂາ ແລະ ລຳຕົວໃນການຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບໂສ້ງ, ເສື້ອຊຸດສີແດງ, ຊຸດສີຟ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຮູບພາບໃນແຜ່ນເກມ ຢ່າງຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບໂສ້ງ, ເສື້ອຊຸດສີແດງ, ຊຸດສີຟ້າ ຢ່າງຖືກຕ້ອງ.
3. ເຝິກການເກັບມ້ຽນແຜ່ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບໂສ້ງ, ເສື້ອຊຸດສີແດງ, ຊຸດສີຟ້າ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບໂສ້ງ, ເສື້ອຊຸດສີແດງ, ຊຸດສີຟ້າ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັດໝວດໝູ່ຮູບວົງມົນ, ໜ່ວຍມົນ.
3. ບົດຄຳຄ່ອງ ກ ໄກ່ ເຖິງ ຕ ຕາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ກ ໄກ່ ເຖິງ ຕ ຕາ.
2. ຄູສົນທະນາກ່ຽວກັບຊື່ເກມ, ຮູບພາບໃນແຜ່ນເກມ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີຄວາມສາມັກຄີໃນການຫຼິ້ນເກມ ແລະ ການແບ່ງປັນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບໂສ້ງ, ເສື້ອຊຸດສີແດງ, ຊຸດສີຟ້າ.
3. ການເກັບມ້ຽນແຜ່ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້:  ມຸມອ່ານ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນຢ່າງຖືກຕ້ອງ.
2. ມີຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ສັງເກດຮູບພາບ ແລະ ເວົ້າຄຳສັບ: ຜົມ, ຫູ, ແກ້ມ, ໜ້າຜາກ, ຄິ້ວ, ຕາ, ດັງ,ຄາງ, ປາກ, ແຂ້ວ, ຄໍ; ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ຝ-ຝ່າມື, ກ-ກົກແຂນ, ນ-ນີ້ວມື, ຄ-ແຄ່ງ, ຫ-ຫົວເຂົ່າ, ຜ-ຜົມ ແລະ ບ-ໃບໜ້າ.
2. ການຫຼິ້ນໃນມຸມສິລະປະສ້າງສັນ: ທາສີຮູບພາບເຄື່ອງນຸ່ງເດັກນ້ອຍຍິງ, ເດັກນ້ອຍຊາຍ; ປັ້ນດິນເປັນຮູບທໍ່ກົມສັ້ນ ແລະ ຍາວ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ຮູບພາບຜົມ, ຫູ, ແກ້ມ, ໜ້າຜາກ, ຄິ້ວ, ຕາ, ດັງ, ຄາງ, ປາກ, ແຂ້ວ, ຄໍ; ບັດຄຳສັບ ຝ່າມື, ກົກແຂນ, ນີ້ວມື, ແຄ່ງ, ຫົວເຂົ່າ, ຜົມ, ໃບໜ້າ ແລະ ບັດພະຍັນຊະນະ ຕົວ ຝ, ກ, ນ, ຄ, ຫ, ຜ, ບ.
2. ມຸມສິລະປະສ້າງສັນ: ເຈ້ຍຮູບພາບເຄື່ອງນຸ່ງເດັກນ້ອຍຍິງ, ເດັກນ້ອຍຊາຍ, ດິນສຳລັບປັ້ນ, ຜ້າຢາງ, ເສື້ອກັນເປື້ອນ ແລະ ກະດານສຽນ ຫຼື ຕິດ.
3. ບົດຄຳຄອງ ຮັກຄວາມສະອາດ; ບັດສັນຍະລັກເຂົ້າຫຼິ້ນມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງຮັກຄວາມສະອາດ ປະກອບທ່າທາງຕາມຈິນຕະນາການ.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
6. ສຶກສາອົບຮົມເດັກກ່ຽວກັບການຫຼິ້ນຮ່ວມໝູ່ຢູ່ໃນຫ້ອງຮຽນ ແລະ ການເກັບມ້ຽນເຄື່ອງຫຼິ້ນເຂົ້າມຸມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
2. ຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການບົວລະບັດຮັກສາດັງ ຢ່າງຖືກຕ້ອງ.
2. ສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ: ຖູແຂ້ວ, ບ້ວນປາກ ແລະ ກິນອາຫານ.

### III. ສື່ການຮຽນ-ການສອນ

ການບໍລິຫານທ້ອງ, ຫຼັງ ແລະ ຕີນ ເບິ່ງປື້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການບົວລະບັດຮັກສາດັງ.
2. ໃຫ້ເດັກບໍລິຫານທ້ອງ, ຫຼັງ ແລະ ຕີນ: ທ່າທ້ອງ ແລະ ຫຼັງ, ເຢ່ງເຢ້ຂຶ້ນ ແລະ ລົງ.
3. ໃຫ້ເດັກໂດດຢຽບເສັ້ນເຊືອກໄລຍະຫ່າງ 30 ຊມ.
4. ຄູສາທິດການສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນອນຍົກແຂນຂຶ້ນ ແລະ ເອົາແຂນລົງ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມ ຈິນຕະນາການ.
8. ສຶກສາອົບຮົມເດັກກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ .

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການບົວລະບັດຮັກສາດັງ.
2. ຄວາມມ່ວນຊື່ນໃນການສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ.
3. ຄວາມປອດໄພໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳການວົງມົນ

## ຫົວຂໍ້: ປາກ ແລະ ແຂ້ວສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ຖູແຂ້ວ ຕາມຈັງຫວະ.
2. ບອກຄ່າຈຳນວນຂອງຮູບພາບຢ່າງຖືກຕ້ອງ.
3. ບອກການບົວລະບັດຮັກສາປາກ ແລະ ແຂ້ວຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ຖູແຂ້ວ ຕາມຈັງຫວະ.
2. ຄ່າຈຳນວນຂອງຮູບພາບ: ຈອກ 1 ໜ່ວຍເລກ 1, ແປງສີແຂ້ວ 2 ອັນເລກ 2.
3. ການບົວລະບັດຮັກສາປາກ ແລະ ແຂ້ວ: ບ້ວນປາກດ້ວຍນ້ຳທີ່ສະອາດ, ຖູແຂ້ວກ່ອນນອນ ແລະ ຫຼັງກິນອາຫານແລ້ວດ້ວຍນ້ຳສະອາດ, ນຳໃຊ້ຢາຖູແຂ້ວ ແລະ ແປງຖູແຂ້ວສຳລັບເດັກ ແລະ ເຊັດປາກດ້ວຍຜ້າ ທີ່ສະອາດ.

### III. ສື່ການຮຽນ-ການສອນ

1. ແຜ່ນໂປສະເຕີການຖູແຂ້ວ, ບົດເພງ ຖູແຂ້ວ (ເບິ່ງປຶ້ມຄູ່ມືຄູ ) ແລະ ເຄື່ອງເຄາະຈັງຫວະ.
2. ຮູບພາບຈອກ 1 ໜ່ວຍ, ແປງຖູແຂ້ວ 2 ອັນ ແລະ ບັດຕົວເລກ 1, 2.
3. ຄຸນ້ຳ, ຈອກ, ແປງຖູແຂ້ວ, ຢາຖູແຂ້ວ ແລະ ຜ້າ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບອກຕົວເລກ 1-2.
2. ຄູສະເໜີຊື່ເພງ, ໃຫ້ເດັກຮ້ອງເພງຕາມຈັງຫວະ ແລະ ຄູສົນທະນາກ່ຽວກັບເນື້ອໃນ ບົດເພງ.
3. ໃຫ້ເດັກສັງເກດແຜ່ນໂປສະເຕີ, ຄູສົນທະນາ, ໃຫ້ເດັກບອກການບົວລະບັດຮັກສາ ປາກ ແລະ ແຂ້ວ.
4. ໃຫ້ເດັກສັງເກດຮູບພາບ ແລະ ບອກຄ່າຈຳນວນຂອງຮູບພາບ.
5. ໃຫ້ເດັກເຝິກປະຕິບັດການຖູແຂ້ວ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກຮ້ອງເພງຄືນ, ບອກການບົວລະບັດຮັກສາປາກ, ແຂ້ວ ແລະ ຄ່າຈຳນວນຂອງຮູບພາບ.
7. ສຶກສາອົບຮົມເດັກກ່ຽວກັບການບົວລະບັດຮັກສາປາກ ແລະ ແຂ້ວໃຫ້ສະອາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການຮ້ອງເພງ ຖູແຂ້ວ ຕາມຈັງຫວະ ແລະ ຄວາມຖືກຕ້ອງໃນການບອກການບົວລະບັດ ຮັກສາ ປາກ ແລະ ແຂ້ວ.
2. ຄວາມຖືກຕ້ອງໃນການບອກຄ່າຈຳນວນຂອງຮູບພາບ.
3. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບການບົວລະບັດຮັກສາປາກ ແລະ ແຂ້ວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນເປັນຕົວເລກ 2

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຕົວເລກ 2.
2. ເຝິກກ້າມຊີ້ນອົ້ງມື ແລະ ນິ້ວມືໃຫ້ແຂງແຮງ ໂດຍການປັ້ນຕົວເລກ 2.
3. ເຝິກຄວາມອົດທົນໃນການປັ້ນຕົວເລກ 2 ໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການປັ້ນຕົວເລກ 2.

### III. ສື່ການຮຽນ-ການສອນ

1. ດິນ ຫຼື ແປ້ງສຳລັບປັ້ນ, ແບບຕົວເລກ 2.
2. ຜ້າຢາງ ຫຼື ເຈ້ຍຮອງປັ້ນ.
3. ຊາມນໍ້າ, ສະບູ ແລະ ຜ້າເຊັດມື.
4. ຜ້າ ຫຼື ເສື້ອກັນເປື້ອນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງລ້າງມື ແລະ ເຊັດມື.
2. ຄູສົນທະນາກ່ຽວກັບຕົວເລກ 2.
3. ຄູແນະນຳ ແລະ ສາທິດການປັ້ນເປັນຕົວເລກ 2.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອເດັກ.
5. ໃຫ້ເດັກນຳສະເໜີຜົນງານ ການປັ້ນເປັນຕົວເລກ 2.
6. ສຶກສາອົບຮົມເດັກໃຫ້ມີຄວາມສາມັກຄີ, ແບ່ງປັນດິນປັ້ນ, ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ ແລະ ການອະນາໄມມືໃຫ້ສະອາດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຕົວເລກ 2.
2. ຄວາມແຂງແຮງຂອງມືໃນການປັ້ນເປັນຕົວເລກ 2.
3. ຄວາມອົດທົນໃນການປັ້ນເປັນຕົວເລກ 2 ໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນກັນກິນກ້ວຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ແຂ່ງຂັນກັນກິນກ້ວຍ ຮ່ວມກັນກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
2. ເຝິກປະສາດສຳພັນລະຫວ່າງມື ແລະ ສາຍຕາໃນການປອກກ້ວຍ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ແຂ່ງຂັນກັນກິນກ້ວຍ.

### III. ສື່ການຮຽນ-ການສອນ

1. ໂຕະ, ຈານ ແລະ ໝາກກ້ວຍ.
2. ບົດເພງ ຖູແຂ້ວ ແລະ ເຄື່ອງເຄາະຈັງຫວະ.
3. ວິທີຫຼິ້ນ ເບິ່ງປື້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກຮ້ອງເພງ ຖູແຂ້ວ ປະກອບທ່າທາງ.
2. ຄູສະເໜີ ແບບຫຼິ້ນ ແຂ່ງຂັນກັນກິນກ້ວຍ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນ ແຂ່ງຂັນກັນກິນກ້ວຍ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນ ແຂ່ງຂັນກັນກິນກ້ວຍ.
5. ສຶກສາອົບຮົມເດັກ ໃນເວລາກິນກ້ວຍໃຫ້ກິນຊ້າໆ, ຫຍໍ້າໃຫ້ແຫຼກຄ່ອຍໆກືນ, ຫຼິ້ນແລ້ວລ້າງມືໃຫ້ສະອາດ ແລະ ຊ່ວຍກັນເກັບມ້ຽນອຸປະກອນໄວ້ບ່ອນເກົ່າ.
6. ໃຫ້ເດັກຄ້ຳແອວ ຍືດຕົວຂຶ້ນສູງໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ:

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນເວລາຫຼິ້ນແບບຫຼິ້ນ ແຂ່ງຂັນກັນກິນກ້ວຍ.
2. ຄວາມຄ່ອງແຄ້ວໃນການປອກກ້ວຍ, ຫຍໍ້າກ້ວຍ ແລະ ກິນກ້ວຍ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ ເດັກນ້ອຍຖູແຂ້ວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຮູບພາບໃນແຜ່ນເກມ ຢ່າງຖືກຕ້ອງ.
2. ຕໍ່ຮູບພາບເດັກນ້ອຍຖູແຂ້ວ ຢ່າງຖືກຕ້ອງ
3. ເຝິກຄວາມສາມັກຄີໃນການເກັບມ້ຽນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບ ເດັກນ້ອຍຖູແຂ້ວ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບ ເດັກນ້ອຍຖູແຂ້ວ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູບພາບໂສ້ງ, ເສື້ອຊຸດສີແດງ, ຊຸດສີຟ້າ.
3. ບົດເພງ ຖູແຂ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຖູແຂ້ວ.
2. ຄູສົນທະນາກ່ຽວກັບຊື່ເກມ, ຮູບພາບໃນແຜ່ນເກມຕໍ່ຮູບພາບ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບເດັກນ້ອຍຖູແຂ້ວ.
6. ສຶກສາອົບຮົມເດັກເກັບມ້ຽນເກມໃຫ້ຖືກບ່ອນ ແລະ ເປັນລະບຽບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບເດັກນ້ອຍຖູແຂ້ວ.
3. ຄວາມສາມັກຄີໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ ຢ່າງຖືກຕ້ອງ.
2. ມີຄວາມສາມັກຄີໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນແພດນ້ອຍກວດແຂ້ວ.
2. ການຫຼິ້ນໃນມຸມອ່ານ: ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ: ດ-ດັງ, ປ-ແປ້ງ, ເວົ້າຄຳສັບຕາມຮູບພາບ: ບ່າໄຫຼ່, ໜ້າເອິກ, ນົມ, ທ້ອງ, ແອວ ແລະ ກະໂພກ; ອ່ານຕົວເລກ 1-2 ແລະ ນັບຈຳນວນ ຮູບພາບກັບຕົວເລກ: ຈອກ 1 ໜ່ວຍກັບຕົວເລກ 1 ແລະ ແປງສີແຂ້ວ 2 ອັນກັບຕົວເລກ 2.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງມືແພດຈຳລອງ, ຊຸດແພດນ້ອຍ ແລະ ຕຸກກະຕາ.
2. ມຸມອ່ານຮູບພາບຮ່າງກາຍຄົນ: ບ່າໄຫຼ່, ໜ້າເອິກ, ນົມ, ທ້ອງ, ແອວ, ກະໂພກ; ບັດຄຳສັບ ດັງ, ແປ້ງ; ບັດພະຍັນຊະນະຕົວ ດ, ຕົວ ປ; ບັດຕົວເລກ 1-2, ຮູບພາບຈອກ 1 ໜ່ວຍ ແລະ ແປງສີແຂ້ວ 2 ອັນ; ກະດານສຽບ ຫຼື ຕິດ.
3. ບົດເພງຖູແຂ້ວ; ບັດສັນຍະລັກເຂົ້າມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຖູແຂ້ວປະກອບທ່າທາງຕາມຈິນຕະນາການ.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
6. ສຶກສາອົບຮົມເດັກກ່ຽວກັບການແບ່ງປັນເຄື່ອງຫຼິ້ນ ແລະ ການເກັບມ້ຽນອຸປະກອນຮ່ວມກັບໝູ່ເພື່ອນໃນຫ້ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
2. ຄວາມສາມັກຄີໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວ ຕາມຈິນຕະນາການປະກອບເພງ ຖູແຂ້ວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການບົວລະບັດຮັກສາປາກ ແລະ ແຂ້ວ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບເພງ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເພງ ຖູແຂ້ວ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ຖູແຂ້ວ ເບິ່ງປຶ້ມຄູ່ມືຄູ.
3. ການບໍລິຫານແຂນ ແລະ ຂາ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການບົວລະບັດຮັກສາປາກ ແລະ ແຂ້ວ.
2. ໃຫ້ເດັກບໍລິຫານແຂນ ແລະ ຂາ: ທ່າຍົກແຂນແກວ່ງເທິງຫົວ, ທ່າຢຽດຂາອອກເບື້ອງຊ້າຍ ແລະ ເບື້ອງຂວາ.
3. ໃຫ້ເດັກແລ່ນຕາມສຽງເພງ.
4. ຄູສາທິດການສະແດງທ່າທາງປະກອບບົດເພງ ຖູແຂ້ວ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກຢືນຫງ່ຽງລຳຕົວເບື້ອງຊ້າຍ ແລະ ເບື້ອງຂວາ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບບົດເພງ.
8. ສຶກສາອົບຮົມເດັກກ່ຽວກັບ ມາລະຍາດໃນການສະແດງທ່າທາງຕາມຈິນຕະນາການປະກອບບົດເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການບົວລະບັດຮັກສາປາກ ແລະ ແຂ້ວ.
2. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເພງ.
3. ຄວາມປອດໄພ ໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ມື ແລະ ຕີນ ສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຟັງນິທານເລື່ອງ ລ້າງມືໃຫ້ສະອາດ ຢ່າງມ່ວນຊື່ນ ແລະ ເວົ້າເປັນປະໂຫຍກສັ້ນຢ່າງຖືກຕ້ອງ.
2. ບອກການບົວລະບັດຮັກສາມື ແລະ ຕີນຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການຟັງເລົ່ານິທານເລື່ອງລ້າງມືໃຫ້ສະອາດ ແລະ ການເວົ້າເປັນປະໂຫຍກສັ້ນ: ຂ້ອຍລ້າງມືໃສ່ສະບູ, ຂ້ອຍລ້າງຕີນ ແລະ ຂ້ອຍໃສ່ເກີບ.
2. ການບົວລະບັດຮັກສາມື: ຕັດເລັບມືໃຫ້ສັ້ນ ແລະ ລ້າງມືກ່ອນ ແລະ ຫຼັງກິນອາຫານ, ຫຼັງການຫຼິ້ນ, ຫຼັງການຖ່າຍໜັກ-ເບົາໃຫ້ສະອາດ ແລະ ເຊັດມືດ້ວຍຜ້າທີ່ສະອາດ.

- ການບົວລະບັດຮັກສາຕີນ: ຕັດເລັບຕີນໃຫ້ສັ້ນ, ລ້າງຕີນໃຫ້ສະອາດ ແລະ ໃສ່ເກີບທີ່ສະອາດ.

### III. ສື່ການຮຽນ-ການສອນ

1. ແຜ່ນໂປສະເຕີການລ້າງມື, ບົດນິທານເລື່ອງ ລ້າງມືໃຫ້ສະອາດ(ເບິ່ງປຶ້ມຄູ່ມືຄູ) ແລະ ຮູບພາບປະກອບບົດເລື່ອງ.
2. ຕົວເດັກ, ຂາມນ້ຳ, ສະບູ, ຜ້າເຊັດມື, ຮູບພາບເດັກນ້ອຍລ້າງມື, ລ້າງຕີນ ແລະ ໃສ່ເກີບ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບການຮັກສາປາກ ແລະ ແຂ້ວຂອງເດັກ.
2. ຄູສະເໜີຊື່ນິທານ, ໃຫ້ເດັກຟັງນິທານ, ຄູສົນທະນາຖາມ-ຕອບກ່ຽວກັບເນື້ອໃນນິທານ, ເວົ້າເປັນປະໂຫຍກສັ້ນໃນບົດນິທານ ແລະ ໃຫ້ເດັກບອກການບົວລະບັດຮັກສາມື.
3. ໃຫ້ເດັກສັງເກດແຜ່ນໂປສະເຕີການລ້າງມື ແລະ ເຝິກປະຕິບັດລ້າງມືຕາມຂັ້ນຕອນ.
4. ໃຫ້ເດັກເວົ້າຄືນຊື່ນິທານ ແລະ ບອກຕົວລະຄອນໃນເລື່ອງ, ບອກການບົວລະບັດຮັກສາມື, ຕີນ, ລ້າງມືຕາມຂັ້ນຕອນ ແລະ ເວົ້າເປັນປະໂຫຍກສັ້ນໃນບົດນິທານ.
5. ສຶກສາອົບຮົມເດັກກ່ຽວກັບການບົວລະບັດຮັກສາມື, ຕີນໃຫ້ສະອາດ ແລະ ປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການຟັງນິທານ ລ້າງມືໃຫ້ສະອາດ ແລະ ຄວາມຖືກຕ້ອງໃນການເວົ້າເປັນປະໂຫຍກສັ້ນ.
2. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບການບົວລະບັດຮັກສາມື ແລະ ຕີນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນທໍ່ກົມ, ແຜ່ນແປປະກອບເປັນຮູບຝ່າມື

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກສ່ວນປະກອບຂອງຝ່າມື.
2. ເຝິກກ້າມຊີ້ນອັ້ງມື ແລະ ນິ້ວມືໃຫ້ແຂງແຮງໂດຍການປັ້ນເປັນຮູບຝ່າມື.
3. ປັ້ນເປັນທໍ່ກົມ ແລະ ແຜ່ນແປປະກອບເປັນຮູບຝ່າມືໃຫ້ຄ້າຍຄື.

### II. ເນື້ອໃນຕົ້ນຕໍ

ການປັ້ນເປັນຮູບທໍ່ກົມ ແລະ ແຜ່ນແປປະກອບເປັນຮູບຝ່າມື.

### III. ສື່ການຮຽນ-ການສອນ

1. ດິນ ຫຼື ແປ້ງສຳລັບປັ້ນ, ແບບຮູບຝ່າມືທີ່ປັ້ນແລ້ວ.
2. ຜ້າຢາງ ຫຼື ເຈ້ຍຮອງປັ້ນ.
3. ຊາມນໍ້າ, ສະບູ ແລະ ຜ້າເຊັດມື.
4. ຜ້າ ຫຼື ເສື້ອກັນເປື້ອນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຢຶບ, ຢຸບ, ກຳມື.
2. ຄູສົນທະນາກ່ຽວກັບສ່ວນປະກອບຂອງມື.
3. ຄູແນະນຳ ແລະ ສາທິດ ການປັ້ນເປັນຮູບຝ່າມື.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອເດັກ.
5. ໃຫ້ເດັກນຳສະເໜີຜົນງານ ການປັ້ນເປັນຮູບຝ່າມື.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນປະຕິບັດກິດຈະກຳ ແລະ ການເກັບມ້ຽນຜົນງານໄວ້ບ່ອນທີ່ຄູກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກສ່ວນປະກອບຂອງຝ່າມື.
2. ຄວາມແຂງແຮງຂອງມືໃນການປັ້ນເປັນທໍ່ກົມ ແລະ ແຜ່ນແປປະກອບເປັນຮູບຝ່າມືໃຫ້ສຳເລັດ.
3. ຄວາມຄ້າຍຄືຂອງຮູບທີ່ປັ້ນກັບຮູບຕົວຈິງ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນ ຂີ່ຕະລູດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຂີ່ຕະລູດ ຮ່ວມກັນກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
2. ເຝິກກ້າມຊີ້ນຂາ, ແຂນ ແລະ ກົ້ນໃຫ້ມີຄວາມແຂງແຮງ ແລະ ຄ່ອງແຄ້ວ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຂີ່ຕະລູດ.

### III. ສື່ການຮຽນ-ການສອນ

1. ຕະລູດ.
2. ວິທີຫຼິ້ນ ເບິ່ງປື້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກແກ່ວງແຂນທັງສອງເບື້ອງ ໄປທາງໜ້າ ແລະ ທາງຫຼັງສະຫຼັບກັນໄປມາ.
2. ຄູສະເໜີການຫຼິ້ນ ຂີ່ຕະລູດ ແລະ ສາທິດວິທີຫຼິ້ນເຄື່ອງຫຼິ້ນໃນເດີ່ນ.
3. ໃຫ້ເດັກຫຼິ້ນ ຂີ່ຕະລູດ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນກ່ຽວກັບການຫຼິ້ນເຄື່ອງຫຼິ້ນໃນເດີ່ນຂີ່ຕະລູດ.
5. ສຶກສາອົບຮົມເດັກໃນເວລາຂີ່ຕະລູດໃຫ້ຂຶ້ນທາງຫຼັງຕະລູດລົງຄ່ອຍໆ ລະວັງບໍ່ໃຫ້ຕີນເຂົ້າຮ່ອງຕະລູດ, ລໍຖ້າຕາມລຳດັບຂອງຕົນເອງຈຶ່ງຂຶ້ນຂີ່ຕະລູດ.
6. ໃຫ້ເດັກຄ້ຳແອວ ຍືດຕົວຂຶ້ນສູງໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ:

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນເວລາຫຼິ້ນ ຂີ່ຕະລູດ.
2. ຄວາມແຂງແຮງ, ຄວາມຄ່ອງແຄ້ວຂອງແຂນ, ຂາ, ກົ້ນໃນການຫຼິ້ນຂີ່ຕະລູດ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບຂັ້ນຕອນການລ້າງມື

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຮູບພາບໃນແຜ່ນເກມ ຢ່າງຖືກຕ້ອງ.
2. ລຽນລຳດັບຮູບພາບຂັ້ນຕອນການລ້າງມື ຢ່າງຖືກຕ້ອງ.
3. ເຝິກຄວາມອົດທົນໃນການຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບພາບຂັ້ນຕອນການລ້າງມື: ເອົາຝ່າມື ຖູຝ່າມື, ຝ່າມືຖູຫຼັງມື. ນິ້ວມືຖູຫວ່າງນິ້ວມື, ຫຼັງນິ້ວມື ຖູຝ່າມື, ຖູນິ້ວໂປ້ມືຮອບຝ່າມື, ປາຍນິ້ວມື ຖູຂວາງຝ່າມື ແລະ ຮອບຄໍ່ມື.

### III. ສື່ການຮຽນ-ການສອນ

1. ແຜ່ນເກມເກມລຽນລຳດັບຮູບພາບຂັ້ນຕອນການລ້າງມື (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບເດັກນ້ອຍຖູແຂ້ວ.
3. ບົດຄຳຄ່ອງ ຮັກຄວາມສະອາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຮັກຄວາມສະອາດ.
2. ຄູສົນທະນາກ່ຽວກັບຊື່ເກມ, ຮູບພາບໃນແຜ່ນເກມລຽນລຳດັບຮູບພາບ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບໃນແຜ່ນເກມ ແລະ ການຫຼິ້ນເກມລຽນລຳດັບຮູບພາບຂັ້ນຕອນການລ້າງມື.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນໃນການຫຼິ້ນເກມ ແລະ ການລໍຖ້າຕາມລຳດັບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບຂັ້ນຕອນການລ້າງມື.
3. ຄວາມອົດທົນໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ມີຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເກມການສຶກສາ: ຫຼິ້ນເກມລຽນລຳດັບຮູບພາບຂັ້ນຕອນການລ້າງມື, ຫຼິ້ນເກມຕໍ່ຮູບພາບເດັກນ້ອຍຖູແຂ້ວ.
2. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນນາຍຄູພາເດັກລ້າງມື, ຕັດເລັບມື ແລະ ສະແດງສົມມຸດເປັນຕົວລະຄອນໃນ ບົດນິທານເລື່ອງ ລ້າງມືໃຫ້ສະອາດ.

### III. ສື່ການຮຽນ-ການສອນ

1. ມຸມເກມການສຶກສາ: ເກມລຽນລຳດັບຮູບພາບຂັ້ນຕອນການລ້າງມື: ເອົາຝ່າມືຖູຝ່າມື, ຝ່າມືຖູຫຼັງມື, ນິ້ວຖູຫວ່າງນິ້ວ, ຫຼັງນິ້ວມືຖູຝ່າມື, ຖູນິ້ວໂປ້ມື ຮອບຝ່າມື, ປາຍນິ້ວມື ຖູຂວາງຝ່າມື ແລະ ຖູຮອບຄໍ່ມື; ເກມຕໍ່ຮູບພາບເດັກນ້ອຍຖູແຂ້ວ; ກະດານສຽບ ຫຼື ຕິດ.
2. ມຸມບົດບາດສົມມຸດ: ເຄື່ອງນຸ່ງຄູຈຳລອງ, ຊາມນ້ອຍ, ສະບູຈຳລອງ, ຜ້າເຊັດມື ແລະ ມີດຕັດເລັບຈຳລອງ.
3. ບັດສັນຍະລັກເຂົ້າມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ, ຕອບກ່ຽວກັບການບົວລະບັດຮັກສາມື ແລະ ຕີນຂອງເດັກ.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ.
6. ສຶກສາອົບຮົມເດັກກ່ຽວກັບຄວາມອົດທົນຫຼິ້ນຮ່ວມໝູ່ ແລະ ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນຫ້ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ.
2. ຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

## ຈຸດປະສົງສຳລັບອາທິດທີ 3
## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການບົວລະບັດຮັກສາຕີນ ແລະ ມື ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ: ຮັກຄວາມສະອາດ, ກ ໄກເຖິງ ຕ ຕາ ຢ່າງມ່ວນຊື່ນ.
3. ບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ ຢ່າງຖືກຕ້ອງ.
4. ປະຕິບັດຄຳສັ່ງຕາມຄູແນະນຳຢ່າງຖືກຕ້ອງ.
5. ບອກການນອນພັກຜ່ອນ ແລະ ການຂັບຖ່າຍຢ່າງຖືກຕ້ອງ.
6. ສະແດງທ່າທາງຕາມສຽງສັນຍານ ຢ່າງຖືກຕ້ອງ.
7. ບອກການປ້ອງກັນຕົນເອງຈາກພະຍາດໄຂ້ຍຸງ ແລະ ຖອກທ້ອງ ຢ່າງຖືກຕ້ອງ.
8. ສະແດງທ່າທາງຕາມຈິນຕະນາການປະກອບເພງ ຢ່າງມ່ວນຊື່ນ.
9. ເຂົ້າຮ່ວມກິດຈະກຳຢ່າງປອດໄພ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ເລົ່າຄຳຄ່ອງ: ອາຫານຂອງຫຼານ, ພັກຜ່ອນ ແລະ ເວົ້າປະໂຫຍກສັ້ນ: ຂ້ອຍກິນອາຫານ, ຂ້ອຍດື່ມນ້ຳສະອາດ, ຂ້ອຍນອນພັກຜ່ອນຕອນທ່ຽງ ແລະ ຂ້ອຍເຂົ້ານອນແຕ່ຫົວຄ່ຳ.
2. ບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.
3. ບອກການພັກຜ່ອນ ແລະ ບອກການຂັບຖ່າຍທີ່ຖືກຕ້ອງ.
4. ປຽບທຽບຈຳນວນເທົ່າກັນ: 1 ຕໍ່ 1, ບອກຕ່ຳກວ່າ, ສູງກວ່າ ແລະ ເທົ່າກັນ.
5. ອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນຕົວອັກສອນ ຖ-ຜ.
6. ຮ້ອງເພງ ປ້ອງກັນພະຍາດ ຕາມຈັງຫວະ ແລະ ເລົ່າຄຳຄ່ອງ ຖ ຖົງ ເຖິງ ຜ ຜູ.
7. ບອກການປ້ອງກັນຕົນເອງຈາກພະຍາດໄຂ້ຍຸງ, ຖອກທ້ອງ, ອັກເສບປອດ ແລະ ໝາກແດງ.
8. ເວົ້າຄຳສັບຕາມຮູບພາບ: ຜ້າ, ມຸ້ງ ແລະ ເວົ້າເປັນປະໂຫຍກສັ້ນ: ນອນໃນມຸ້ງ.
9. ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ຜ(ຜ້າ) ແລະ ມ(ມຸ້ງ).

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຮູບຮ່າງຂອງໝາກກ້ຽງ, ເຝິກຄວາມອົດທົນ ໃນການທາສີຮູບໝາກກ້ຽງ.
2. ເຝິກນິ້ວມື ແລະ ຂໍ່ມືໃຫ້ມີຄວາມແຂງແຮງ ໂດຍການທາສີຮູບໝາກກ້ຽງໃຫ້ຈົບງາມ.
3. ການຂີດເສັ້ນກົ່ງເທິງຊ້າຍ, ຂວາຕາມຮອຍຈ້ຳ; ການປັ້ນເປັນໜ່ວຍມົນນ້ອຍ ແລະ ໜ່ວຍມົນໃຫຍ່ວາງສະຫຼັບກັນໃຫ້ສຳເລັດ; ບອກຮູບໜ່ວຍມົນນ້ອຍ ແລະ ໃຫຍ່.
4. ເຝິກກ້າມຊີ້ນນິ້ວມື, ອີ້ງມືໃຫ້ມີຄວາມແຂງແຮງ ໂດຍການປັ້ນຕົວເລກ 1, 2, ໜ່ວຍມົນນ້ອຍໃຫຍ່; ບອກຕົວເລກ 1 ແລະ 2.

5. ເຝິກຄວາມສາມັກຄີໃນການປັ້ນຕົວເລກ 1 ແລະ ເລກ 2.
6. ບອກການຂີດເສັ້ນກົ່ງເຫິງຊ້າຍ ແລະ ຂວາຕາມຮອຍຈ້ຳ.
7. ເຝິກປະສາດສຳພັນລະຫວ່າງມື ກັບ ຕາໂດຍການຂີດເສັ້ນກົ່ງເຫິງຊ້າຍ, ຂວາຕາມຮອຍຈ້ຳ ແລະ ການທາສີຮູບຜ້າພັນຄໍໃຫ້ສຳເລັດ.
8. ບອກປະໂຫຍດຂອງຜ້າພັນຄໍ; ທາສີຮູບຜ້າພັນຄໍໃຫ້ສະອາດຈົບງາມ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:
1. ຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
2. ເຝິກການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ; ເຝິກການສັງເກດຈຳແນກສຽງ.
3. ເຝິກຄວາມຄ່ອງແຄ້ວໃນການຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ.
4. ຫຼິ້ນແບບຫຼິ້ນ ເຊື່ອງຜ້າ, ແຂ່ງຂັນແກ້ຄຳທວາຍຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
5. ເຝິກການມີສະຕິລະວັງຕົວ ແລະ ຄ່ອງແຄ້ວໃນເວລາຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
6. ເຝິກການມີສະຕິລະວັງຕົວ ແລະ ຄ່ອງແຄ້ວໃນການຫຼິ້ນແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ.
7. ຫຼິ້ນແບບຫຼິ້ນ ຣ່າຍນ້ຳໃສ່ແກ້ວ, ຫຼິ້ນນ້ຳ, ຫຼິ້ນຊາຍຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
8. ເຝິກປະສາດສຳພັນລະຫວ່າງມື ແລະ ສາຍຕາໃນການຫຼິ້ນແບບຫຼິ້ນ ຣ່າຍນ້ຳໃສ່ແກ້ວ.
9. ເຝິກປະສາດສຳພັນລະຫວ່າງມື ແລະ ສາຍຕາໃນການຫຼິ້ນ ຫຼິ້ນນ້ຳ, ຫຼິ້ນຊາຍ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:
1. ສຶກສາລາຍລະອຽດຂອງຮູບພາບ ອາຫານ ແລະ ເຄື່ອງດື່ມ ຢ່າງຖືກຕ້ອງ.
2. ຕໍ່ຮູບພາບເດັກນ້ອຍນອນໃນມຸ້ງ ຢ່າງຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຮູບພາບເຂົ້າ, ຜັກ, ນ້ຳດື່ມ, ໝາກກ້ວຍ, ປາ, ນົມ ຢ່າງຖືກຕ້ອງ.
4. ຈັບຄູ່ທີ່ຄືກັນຮູບພາບການປ້ອງກັນພະຍາດໃນຍາມໜາວ ຢ່າງຖືກຕ້ອງ.
5. ບອກຊື່ເກມ, ຮູບພາບທີ່ມີຢູ່ໃນເກມ ຢ່າງຖືກຕ້ອງ.
6. ເຝິກຄວາມອົດທົນ, ຄວາມສາມັກຄີ ແລະ ການເກັບມ້ຽນເກມໃນການຫຼິ້ນເກມ ຢ່າງຖືກຕ້ອງ.
7. ຈັບຄູ່ຮູບໜ່ວຍມົນ 1-3.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:
1. ຫຼິ້ນຕາມມຸມສິລະປະສ້າງສັນ, ມຸມເຄື່ອງຫຼິ້ນສຳຜັດ, ມຸມອ່ານຢ່າງມ່ວນຊື່ນ.
2. ມີຄວາມອົດທົນ, ມີຄວາມສາມັກຄີ ໃນເວລາຫຼິ້ນຮ່ວມກັບເພື່ອນ.
3. ຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ ຢ່າງຖືກຕ້ອງ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບຄຳຄ່ອງ ຮັກຄວາມສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການບົວລະບັດຮັກສາຕີນ ແລະ ມື ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ຮັກຄວາມສະອາດ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດຄຳຄ່ອງ ຮັກຄວາມສະອາດ ເບິ່ງປຶ້ມຄູ່ມືຄູ.
3. ການບໍລິຫານມື ແລະ ແຂວ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການບົວລະບັດຮັກສາຕີນ ແລະ ມື.
2. ໃຫ້ເດັກບໍລິຫານມື ແລະ ແຂວ: ທ່າຫງາຍມືຂຶ້ນ, ລົງ ແລະ ທ່າໝູນແຂວ.
3. ໃຫ້ເດັກຈັບບ່າກັນແລ່ນເປັນແຖວວົງມົນໂດຍບໍ່ແຕກແຖວ.
4. ຄູສາທິດການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ຮັກຄວາມສະອາດ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນອນຍົກແຂນຂຶ້ນສັ່ນ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
8. ສຶກສາອົບຮົມເດັກກ່ຽວກັບມາລະຍາດໃນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນ ການບອກການບົວລະບັດຮັກສາຕີນ ແລະ ມື.
2. ຄວາມມ່ວນຊື່ນໃນ ການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
3. ຄວາມປອດໄພ ການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ອາຫານຂອງຫຼານ ປະກອບທ່າທາງຕາມຈິນຕະນາການ ແລະ ເວົ້າເປັນປະໂຫຍກສັ້ນຢ່າງຖືກຕ້ອງ.
2. ບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການເລົ່າຄຳຄ່ອງ ອາຫານຂອງຫຼານ ແລະ ການເວົ້າເປັນປະໂຫຍກສັ້ນໃນບົດຄຳຄ່ອງ: ຂ້ອຍກິນອາຫານ ແລະ ຂ້ອຍນ້ຳດື່ມສະອາດ,
2. ອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ: ຜັກ, ໝາກໄມ້, ເຂົ້າ, ໄຂ່, ຊີ້ນ, ປາ, ນ້ຳໝາກໄມ້, ນົມ ແລະ ນ້ຳດື່ມສະອາດ,

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ອາຫານຂອງຫຼານ (ເບິ່ງປື້ມຄູ່ມືຄູ).
2. ແຜ່ນໂປສະເຕີອາຫານ, ເຄື່ອງດື່ມ ຫຼື ວັດຖຸຈິງ: ຜັກ, ໝາກໄມ້, ເຂົ້າ, ໄຂ່, ຊີ້ນ, ປາ, ນ້ຳໝາກໄມ້, ນົມ ແລະ ນ້ຳດື່ມສະອາດ; ຮູບພາບ ເດັກນ້ອຍກິນອາຫານ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບອາຫານ ແລະ ເຄື່ອງດື່ມທີ່ເດັກເຄີຍກິນ.
2. ຄູສະເໜີຊື່ຄຳຄ່ອງ, ໃຫ້ເດັກເລົ່າຄຳຄ່ອງ ແລະ ເວົ້າເປັນປະໂຫຍກສັ້ນ.
3. ໃຫ້ເດັກສັງເກດແຜ່ນໂປສະເຕີອາຫານ, ເຄື່ອງດື່ມ ຫຼື ວັດຖຸຈິງ, ຄູສົນທະນາ, ໃຫ້ເດັກບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.
4. ໃຫ້ເດັກເລົ່າຄຳຄ່ອງຄືນ, ເວົ້າເປັນປະໂຫຍກສັ້ນ, ບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.
5. ສຶກສາອົບຮົມເດັກກ່ຽວກັບການກິນອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການເລົ່າຄຳຄ່ອງ ອາຫານຂອງຫຼານ ແລະ ຄວາມຖືກຕ້ອງໃນການເວົ້າເປັນປະໂຫຍກສັ້ນ.
2. ຄວາມຖືກຕ້ອງໃນການບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບໝາກກ້ຽງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຮູບຮ່າງຂອງໝາກກ້ຽງ.
2. ເຝິກນິ້ວມື ແລະ ຂໍ່ມືໃຫ້ມີຄວາມແຂງແຮງ ໂດຍການທາສີຮູບພາບໝາກກ້ຽງໃຫ້ຈົບງາມ.
3. ເຝິກຄວາມອົດທົນ ໃນການທາສີຮູບພາບໝາກກ້ຽງໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການທາສີຮູບໝາກກ້ຽງ.

### III. ສື່ການຮຽນ-ການສອນ

1. ສີໄມ້ ຫຼື ສີທຽນ.
2. ເຈ້ຍແບບຮູບໝາກກ້ຽງທີ່ທາສີແລ້ວ ແລະ ເຈ້ຍຮູບໝາກກ້ຽງ.
3. ບົດຄຳຄ່ອງ ອາຫານຂອງຫຼານ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ອາຫານຂອງຫຼານ ປະກອບທ່າທາງ.
2. ຄູສົນທະນາກ່ຽວກັບ ຮູບຮ່າງຂອງໝາກກ້ຽງ.
3. ຄູແນະນຳ ແລະ ສາທິດການທາສີຮູບພາບໝາກກ້ຽງ.
4. ໃຫ້ເດັກປະຕິບັດຕົວຈິງ, ຄູຕິດຕາມຊ່ວຍເດັກ.
5. ໃຫ້ເດັກນຳສະເໜີຜົນງານການທາສີຮູບພາບໝາກກ້ຽງ.
6. ສຶກສາອົບຮົມເດັກ ໃຫ້ມີອົດທົນປະຕິບັດກິດຈະກຳໃຫ້ສຳເລັດ, ບໍ່ຂີດຂຽນໃສ່ໂຕະ, ຕັ່ງ ແລະ ຊ່ວຍກັນເກັບມ້ຽນຜົນງານໄວ້ບ່ອນທີ່ຄູກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຮູບຮ່າງຂອງໝາກກ້ຽງ.
2. ຄວາມຈົບງາມຂອງການທາສີຮູບພາບໝາກກ້ຽງ, ຄວາມແຂງແຮງຂອງມື ແລະ ຂໍ່ມື.
3. ຄວາມອົດທົນໃນການທາສີຮູບໝາກກ້ຽງໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແບ້ກິນໝາກເຂືອ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
2. ເຝິກການສັງເກດຈຳແນກສຽງ.
3. ເຝິກຄວາມຄ່ອງແຄ້ວ, ວ່ອງໄວ ແລະ ການມີສະຕິໃນການຫຼິບຫຼີກ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ.

### III. ສື່ການຮຽນ-ການສອນ

1. ຜ້າມັດຕາ 1 ຜືນ.
2. ວິທີຫຼິ້ນ ເບິ່ງປື້ມຄູ່ມືຄູ.
3. ບົດຄຳຄ່ອງ ອາຫານຂອງຫຼານ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ອາຫານຂອງຫຼານ ປະກອບທ່າທາງ.
2. ຄູສະເໜີແບບຫຼິ້ນ ແບ້ກິນໝາກເຂືອ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ.
5. ສຶກສາອົບຮົມເດັກໃຫ້ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ມີສະຕິໃນການຫຼິ້ນ, ຫຼິ້ນແລ້ວເກັບອຸປະກອນຊ່ວຍກັນ.
6. ໃຫ້ເດັກຍ່າງຕາມຫຼັງກັນຊ້າໆເປັນຮູບວົງມົນ, ຫຼັງຈາກນັ້ນປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ:

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນເວລາຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ.
2. ການຟັງ ແລະ ການຈຳແນກສຽງໃນເວລາຫຼິ້ນ.
3. ຄວາມຄ່ອງແຄ້ວ, ວ່ອງໄວໃນການລົບຫຼີກ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມສຶກສາລາຍລະອຽດຂອງຮູບພາບອາຫານ ແລະ ເຄື່ອງດື່ມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຮູບພາບໃນແຜ່ນເກມ ຢ່າງຖືກຕ້ອງ.
2. ສຶກສາລາຍລະອຽດຂອງຮູບພາບອາຫານ ແລະ ເຄື່ອງດື່ມ ຢ່າງຖືກຕ້ອງ.
3. ຝຶກການເກັບມ້ຽນແຜ່ນເກມ.

### II. ເນື້ອໃນຕົ້ນຕໍ

ການສຶກສາລາຍລະອຽດຂອງຮູບພາບ ອາຫານ ແລະ ເຄື່ອງດື່ມ: ໝາກກ້ຽງ, ປາ, ຜັກ, ເຂົ້າ, ນົມ ແລະ ເຂົ້າໜົມ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມສຶກສາລາຍລະອຽດຮູບພາບອາຫານ ແລະ ເຄື່ອງດື່ມ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບພາບຂັ້ນຕອນການລ້າງມື.
3. ບົດຄຳຄ່ອງ ອາຫານຂອງຫຼານ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ອາຫານຂອງຫຼານ.
2. ຄູສົນທະນາກ່ຽວກັບຊື່ຮູບພາບທີ່ຢູ່ໃນເກມສຶກສາລາຍລະອຽດຂອງຮູບພາບ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມການສຶກສາລາຍລະອຽດຂອງຮູບພາບອາຫານ ແລະ ເຄື່ອງດື່ມ.
6. ສຶກສາອົບຮົມເດັກເກັບມ້ຽນເກມໃຫ້ຖືກບ່ອນ ແລະ ເປັນລະບຽບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການສຶກສາລາຍລະອຽດຂອງຮູບພາບ ອາຫານ ແລະ ເຄື່ອງດື່ມ.
3. ການເກັບມ້ຽນແຜ່ນເກມ.

# ກິດຈະກໍາການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສໍາຜັດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສໍາຜັດ ຢ່າງມ່ວນຊື່ນ.
2. ມີຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

## II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມ ສິລະປະສ້າງສັນ: ທາສີຮູບພາບໝາກກ້ຽງ ແລະ ຝ່າມື.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສໍາຜັດ: ຕໍ່ບ໋ອກສີ່ແຈ, ວົງມົນ, ສາມແຈ ເປັນຮູບຄົນ.

## III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ປຶ້ມບົດເຝິກຫັດ ຫຼື ເຈ້ຍຮູບພາບໝາກກ້ຽງ, ຝ່າມື, ສໍສີໄມ້ ຫຼື ສໍສີທຽນ, ເຈ້ຍແບບຮູບໝາກກ້ຽງ ແລະ ຮູບຝ່າມືທີ່ທາສີແລ້ວ.
2. ມຸມເຄື່ອງຫຼິ້ນສໍາຜັດ: ບ໋ອກສີ່ແຈ, ວົງມົນ ແລະ ສາມແຈ.
3. ບົດຄໍາຄ່ອງ ອາຫານຂອງຫຼານ ແລະ ບັດສັນຍະລັກເຂົ້າມຸມ.

## IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກເລົ່າຄໍາຄ່ອງ ອາຫານຂອງຫຼານ ປະກອບທ່າທາງຕາມຈິນຕະນາການ.
2. ຄູແນະນໍາວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງ ຫຼິ້ນສໍາຜັດ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນໍາ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສໍາຜັດ.
6. ສຶກສາອົບຮົມເດັກກ່ຽວກັບ ການແບ່ງປັນເຄື່ອງຫຼິ້ນ ແລະ ຄວາມອົດທົນໃນການຫຼິ້ນຮ່ວມ ໝູ່ຢູ່ໃນຫ້ອງຮຽນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສໍາຜັດ.
2. ຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ ຢ່າງຖືກຕ້ອງ.
2. ປະຕິບັດຄຳສັງຕາມຄູແນະນຳຢ່າງຖືກຕ້ອງ.
3. ເຂົ້າຮ່ວມກິດຈະກຳ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມຄູແນະນຳ: ນອນ ແລະ ຕື່ນນອນ.

### III. ສື່ການຮຽນ-ການສອນ

ການບໍລິຫານລຳຄໍ ແລະ ແຂນ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.
2. ໃຫ້ເດັກບໍລິຫານລຳຄໍ ແລະ ແຂນ: ທ່າຫງ່ຽງລຳຄໍເບື້ອງຊ້າຍ ແລະ ເບື້ອງຂວາ ແລະ ທ່າຍົກແຂນ ແກວ່ງເທິງຫົວ.
3. ໃຫ້ເດັກເຕັ້ນໄປໜ້າ ແລະ ຫຼັງຕາມສຽງເຄາະ.
4. ຄູສາທິດການປະຕິບັດຄຳສັ່ງຕາມຄູແນະນຳ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນັ່ງລົງເອົາມືແຕະຫົວ ແລະ ແຕະບ່າ.
7. ໃຫ້ເດັກປະຕິບັດຄືນການເຄື່ອນໄຫວຄຳສັ່ງຕາມທີ່ຄູແນະນຳ.
8. ສຶກສາອົບຮົມເດັກກ່ຽວກັບຄວາມປອດໄພໃນການປະຕິບັດຕາມຄຳສັ່ງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນ ການບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.
2. ຄວາມຖືກຕ້ອງໃນການປະຕິບັດຄຳສັງຕາມຄູແນະນຳ.
3. ຄວາມມ່ວນຊື່ນ ແລະ ຄວາມປອດໄພໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ພັກຜ່ອນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ພັກຜ່ອນ ປະກອບທ່າທາງຕາມຈິນຕະນາການ ແລະ ເວົ້າເປັນປະໂຫຍກສັ້ນ ຢ່າງຖືກຕ້ອງ.
2. ບອກການພັກຜ່ອນທີ່ຖືກຕ້ອງ ຢ່າງຖືກຕ້ອງ.
3. ປຽບທຽບຈຳນວນເທົ່າກັນ: 1 ຕໍ່ 1ຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການເລົ່າຄຳຄ່ອງ ພັກຜ່ອນ ແລະ ການເວົ້າເປັນປະໂຫຍກສັ້ນ: ຂ້ອຍນອນພັກຜ່ອນຕອນທ່ຽງ, ຂ້ອຍເຂົ້ານອນແຕ່ຫົວຄ່ຳ.
2. ການພັກຜ່ອນທີ່ຖືກຕ້ອງ: ນອນພັກຜ່ອນຕອນທ່ຽງ ແລະ ເຂົ້ານອນແຕ່ຫົວຄ່ຳ.
3. ການປຽບທຽບຕົວເດັກຈຳນວນເທົ່າກັນ: 1 ຕໍ່ 1.

### III. ສື່ການຮຽນ - ການສອນ

1. ບົດຄຳຄ່ອງ ພັກຜ່ອນ (ເບິ່ງປື້ມຄູ່ມືຄູ).
2. ຮູບພາບ ເດັກນ້ອຍນອນ ຫຼື ຕົວເດັກ: ເດັກນ້ອຍຍິງ 1 ຄົນ ແລະ ເດັກນ້ອຍຊາຍ 1 ຄົນ.

### IV. ກິດຈະກຳການຮຽນ - ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບການກິນອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.
2. ຄູສະເໜີຊື່ຄຳຄ່ອງ, ໃຫ້ເດັກເລົ່າຄຳຄ່ອງ ພັກຜ່ອນ, ຄູສົນທະນາຖາມ-ຕອບກ່ຽວກັບເນື້ອໃນຄຳຄ່ອງ ແລະ ເວົ້າເປັນປະໂຫຍກສັ້ນໃນບົດຄຳຄ່ອງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາ ແລະ ໃຫ້ເດັກບອກການພັກຜ່ອນທີ່ຖືກຕ້ອງ.
4. ໃຫ້ເດັກສັງເກດຮູບພາບ ຫຼື ຕົວຈິງ ແລະ ປຽບທຽບຈຳນວນເທົ່າກັນດ້ວຍການຈັບຄູ່ 1 ຕໍ່ 1.
5. ໃຫ້ເດັກເລົ່າຄືນຄຳຄ່ອງຄືນ, ເວົ້າເປັນປະໂຫຍກສັ້ນ ແລະ ປຽບທຽບຈຳນວນເທົ່າກັນ.
6. ສຶກສາອົບຮົມເດັກກ່ຽວກັບການພັກຜ່ອນທີ່ຖືກຕ້ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການເລົ່າຄຳຄ່ອງ ພັກຜ່ອນ ປະກອບທ່າທາງຕາມຈິນຕະນາການ ແລະ ຄວາມຖືກຕ້ອງໃນເວົ້າເປັນປະໂຫຍກສັ້ນ.
2. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບການພັກຜ່ອນທີ່ຖືກຕ້ອງ.
3. ຄວາມຖືກຕ້ອງໃນການປຽບທຽບຈຳນວນເທົ່າກັນ 1 ຕໍ່ 1.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນເປັນຕົວເລກ 1 ແລະ ເລກ 2

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຕົວເລກ 1 ແລະ 2.
2. ເຝິກກ້າມຊີ້ນນີ້ວມື, ອົ້ງມືໃຫ້ມີຄວາມແຂງແຮງ ໂດຍການປັ້ນຕົວເລກ 1 ແລະ 2.
3. ເຝິກຄວາມສາມັກຄີໃນການປັ້ນຕົວເລກ 1 ແລະ ເລກ 2.

### II. ເນື້ອໃນຕົ້ນຕໍ

ການປັ້ນເປັນຕົວເລກ 1 ແລະ ເລກ 2.

### III. ສື່ການຮຽນ-ການສອນ

1. ດິນ ຫຼື ແປ້ງສຳລັບປັ້ນ, ແບບປັ້ນຕົວເລກ 1 ແລະ ເລກ 2.
2. ຜ້າຢາງ ຫຼື ເຈ້ຍຮອງປັ້ນ.
3. ຊາມນ້ຳ, ສະບູ ແລະ ຜ້າເຊັດມື.
4. ບົດຄຳຄ່ອງ ພັກຜ່ອນ.
5. ຜ້າ ຫຼື ເສື້ອກັນເປື້ອນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ພັກຜ່ອນ ປະກອບທ່າທາງ.
2. ຄູສົນທະນາກ່ຽວກັບຕົວເລກ 1 ແລະ 2.
3. ຄູແນະນຳ ແລະ ສາທິດການປັ້ນເປັນຕົວເລກ 1 ແລະ 2.
4. ໃຫ້ເດັກປະຕິບັດຕົວຈິງ, ຄູຕິດຕາມຊ່ວຍເຫຼືອເດັກ.
5. ໃຫ້ເດັກນຳສະເໜີຜົນງານ ການປັ້ນຕົວເລກ 1 ແລະ 2.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນປະຕິບັດກິດຈະກຳ, ແບ່ງປັນດິນປັ້ນ, ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ ແລະ ການອະນາໄມມືໃຫ້ສະອາດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຕົວເລກ 1 ແລະ ເລກ 2.
2. ຄວາມແຂງແຮງຂອງມື ໃນການປັ້ນຕົວເລກ.
3. ຄວາມສາມັກຄີໃນການປັ້ນຕົວເລກ 1 ແລະ ເລກ 2 ໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເຊື່ອງຜ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ເຊື່ອງຜ້າ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
2. ເຝິກການມີສະຕິລະວັງຕົວ ແລະ ຄວາມຄ່ອງແຄ້ວວ່ອງໄວໃນການຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ເຊື່ອງຜ້າ.

### III. ສື່ການຮຽນ-ການສອນ

1. ຕຸກກະຕາຜ້າ ຫຼື ຜ້າ 1 ຜືນ.
2. ບົດຄຳຄ່ອງ  ພັກຜ່ອນ.
3. ວິທີຫຼິ້ນ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກເລົ່າຄຳຄ່ອງ ພັກຜ່ອນປະກອບທ່າທາງ.
2. ຄູສະເໜີແບບຫຼິ້ນ ເຊື່ອງຜ້າ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນ ເຊື່ອງຜ້າ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
5. ໃຫ້ສຶກສາອົບຮົມເດັກໃຫ້ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ມີຄວາມວ່ອງໄວຄ່ອງແຄ້ວໃນການຫຼິ້ນ, ບໍ່ຕົບຫຼັງກັນແຮງ ແລະ ຫຼິ້ນແລ້ວເກັບມ້ຽນອຸປະກອນ.
6. ໃຫ້ເດັກນັ່ງຫຼັບຕາສະມາທິ, ຫຼັງຈາກນັ້ນປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນເວລາຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
2. ການມີສະຕິ ລະວັງຕົວ ແລະ ຄວາມຄ່ອງແຄ້ວ, ວ່ອງໄວໃນການຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບເຂົ້າ, ຜັກ, ນ້ຳດື່ມ, ໝາກກ້ວຍ, ປາ, ນົມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຈຳນວນຮູບພາບໃນແຜ່ນເກມ ຢ່າງຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບເຂົ້າ, ຜັກ, ນ້ຳດື່ມ, ໝາກກ້ວຍ, ປາ, ນົມ ຢ່າງຖືກຕ້ອງ.
3. ເຝິກຄວາມອົດທົນໃນການຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບເຂົ້າ, ຜັກ, ນ້ຳດື່ມ, ໝາກກ້ວຍ, ປາ, ນົມ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບເຂົ້າ, ຜັກ, ນ້ຳດື່ມ, ໝາກກ້ວຍ, ປາ, ນົມ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມສຶກສາລາຍລະອຽດຂອງຮູບພາບອາຫານ ແລະ ເຄື່ອງດື່ມ.
3. ບົດຄຳຄ່ອງ ຜັກຜ່ອນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຜັກຜ່ອນ.
2. ຄູສົນທະນາກ່ຽວກັບຊື່ເກມ, ຈຳນວນຮູບພາບໃນແຜ່ນເກມ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຈຳນວນຮູບພາບ ແລະ ການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນໃນການຫຼິ້ນເກມ ແລະ ການລໍຖ້າຕາມລຳດັບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຈຳນວນຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບເຂົ້າ, ຜັກ, ນ້ຳດື່ມ, ໝາກກ້ວຍ, ປາ, ນົມ.
3. ຄວາມອົດທົນໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເກມການສຶກສາ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ ຢ່າງຖືກຕ້ອງ.
2. ມີຄວາມສາມັກຄີໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

## II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ສັງເກດ, ເວົ້າຊື່ອາຫານ, ເຄື່ອງດື່ມທີ່ມີປະໂຫຍດຕາມຮູບພາບ ຜັກສົດ, ໝາກໄມ້, ນົມ, ໄຂ່ ຊີ້ນ, ປາ, ນ້ຳດື່ມ ແລະ ນ້ຳໝາກໄມ້.
2. ການຫຼິ້ນໃນມຸມເກມການສຶກສາ: ເກມຈັບຄູ່ທີ່ຄືກັບຮູບພາບເຂົ້າ, ຜັກ, ນ້ຳດື່ມ, ໝາກກ້ວຍ, ປາ, ນົມ; ຫຼິ້ນເກມສຶກສາລາຍ ລະອຽດຮູບພາບອາຫານ ແລະ ເຄື່ອງດື່ມ.

## III. ສື່ການຮຽນ-ການສອນ

1. ມຸມອ່ານ: ຮູບພາບຜັກສົດ, ໝາກໄມ້, ນົມ, ໄຂ່, ຊີ້ນ, ປາ, ນ້ຳດື່ມ ແລະ ນ້ຳໝາກໄມ້.
2. ມຸມເກມການສຶກສາ: ເກມຈັບຄູ່ທີ່ຄືກັບຮູບພາບເຂົ້າ, ຜັກ, ນ້ຳດື່ມ, ໝາກກ້ວຍ, ປາ, ນົມ; ເກມສຶກສາລາຍລະອຽດຮູບພາບ ອາຫານ ແລະ ເຄື່ອງດື່ມ; ກະດານສຽບ ຫຼື ຕິດ.
3. ບົດຄຳຄ່ອງ ພັກຜ່ອນ; ບັດສັນຍະລັກເຂົ້າມຸມ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ພັກຜ່ອນ ປະກອບທ່າທາງຕາມຈິນຕະນາການ.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
6. ສຶກສາອົບຮົມເດັກກ່ຽວກັບແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ ແລະ ຄວາມສາມັກຄີກັບໝູ່ເພື່ອນຢູ່ໃນຫ້ອງຮຽນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
2. ຄວາມສາມັກຄີໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານເຄາະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການນອນພັກຜ່ອນ ຢ່າງຖືກຕ້ອງ..
2. ສະແດງທ່າທາງຕາມສຽງສັນຍານ ຢ່າງຖືກຕ້ອງ.
3. ເຂົ້າຮ່ວມກິດຈະກຳ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານ: ເຄາະ 1 ບາດ ເຮັດທ່າທາງຕັກນ້ຳໃສ່ຊາມ, ເຄາະ 2 ບາດ ເຮັດທ່າທາງລ້າງມື  ແລະ ເຄາະ 3 ບາດ ເຮັດທ່າທາງເຊັດມື.

### III. ສື່ການຮຽນ-ການສອນ

1. ກະແຊັກ.
2. ການບໍລິຫານລຳຕົວ ແລະ ຕີນ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການນອນພັກຜ່ອນ.
2. ໃຫ້ເດັກບໍລິຫານລຳຕົວ ແລະ ຕີນ: ທ່າຫງ່ຽງລຳຕົວເບື້ອງຊ້າຍ ແລະ ເບື້ອງຂວາ, ຢືນຂາດຽວກອດເຂົ່າເບື້ອງຊ້າຍ ແລະ ເບື້ອງຂວາ ຜັດປ່ຽນກັນ.
3. ໃຫ້ເດັກຍ່າງເປັນແຖວວົງມົນໂດຍບໍ່ຈັບບ່າກັນ.
4. ຄູສາທິດການສະແດງທ່າທາງປະຕິບັດຕາມສຽງສັນຍານ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກຢືນບິດຕົວເບື້ອງຊ້າຍ ແລະ ເບື້ອງຂວາ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານ.
8. ສຶກສາອົບຮົມເດັກກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງຕາມສຽງສັນຍານ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການນອນພັກຜ່ອນ.
2. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານ.
3. ຄວາມມ່ວນຊື່ນ ແລະ ຄວາມປອດໄພໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ຂັບຖ່າຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການຂັບຖ່າຍທີ່ຖືກຕ້ອງ ຢ່າງຖືກຕ້ອງ.
2. ເລົ່າຄຳຄ່ອງ ຖ ຖົງ ເຖິງ ຜ ພູ ປະກອບທ່າທາງຕາມຈິນຕະນາການ.
3. ອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນຕົວອັກສອນ ຖ-ຜ ຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການຂັບຖ່າຍທີ່ຖືກຕ້ອງ: ຂັບຖ່າຍຖືກບ່ອນທີ່ກຳນົດ (ວິດ ຫຼື ສ້ວມຖ່າຍ), ຂັບຖ່າຍເປັນເວລາ.
2. ການເລົ່າຄຳຄ່ອງ ຖ ຖົງ ເຖິງ ຜ ພູ.
3. ການອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນຕົວອັກສອນ ຖ-ຜ.

### III. ສື່ການຮຽນ-ການສອນ

ຫ້ອງນ້ຳໃນໂຮງຮຽນ, ບົດຄຳຄ່ອງ ຖ ຖົງ ເຖິງ ຜ ພູ(ເບິ່ງປຶ້ມຄູ່ມືຄູ) ແລະ ແຜ່ນໂປສະເຕີຕົວອັກສອນລາວ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບການຂັບຖ່າຍຂອງເດັກ.
2. ໃຫ້ເດັກໄປສັງເກດຫ້ອງນ້ຳ, ຄູສົນທະນາ ແລະ ໃຫ້ເດັກບອກການຂັບຖ່າຍທີ່ຖືກຕ້ອງ.
3. ໃຫ້ເດັກເລົ່າຄຳຄ່ອງ ຖ ຖົງ ເຖິງ ຜ ພູ ແລະ ຄູສົນທະນາຖາມ-ຕອບກ່ຽວກັບເນື້ອໃນຄຳຄ່ອງ.
4. ໃຫ້ເດັກສັງເກດແຜ່ນໂປສະເຕີຕົວອັກສອນລາວ ແລະ ອ່ານອອກສຽງພະຍັນຊະນະປະກອບຮູບ ພາບຕາມລຳດັບໃນແຜ່ນຕົວອັກສອນ ຖ-ຜ.
5. ໃຫ້ເດັກເລົ່າຄຳຄ່ອງຄືນ, ບອກການຂັບຖ່າຍ ແລະ ອ່ານອອກສຽງພະຍັນຊະນະປະກອບຮູບພາບ ຖ-ຜ.
6. ສຶກສາອົບຮົມເດັກກ່ຽວກັບການຂັບຖ່າຍ ແລະ ການອະນາໄມຮ່າງກາຍໃຫ້ສະອາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັບຖ່າຍທີ່ຖືກຕ້ອງ.
2. ການເລົ່າຄຳຄ່ອງ ຖ ຖົງ ເຖິງ ຜ ພູ ປະກອບທ່າທາງຕາມຈິນຕະນາການ.
3. ຄວາມຖືກຕ້ອງໃນການອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນຕົວອັກສອນ ຖ-ຜ.

# ກິດຈະກໍາສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນກົ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການຂີດເສັ້ນກົ່ງເທິງຊ້າຍ ແລະ ຂວາຕາມຮອຍຈ້ຳ.
2. ຂີດເສັ້ນກົ່ງເທິງຊ້າຍ, ຂວາຕາມຮອຍຈ້ຳ ຢ່າງຖືກຕ້ອງ.
3. ຄວາມອົດທົນໃນການຂີດເສັ້ນກົ່ງເທິງຊ້າຍ, ຂວາຕາມຮອຍຈ້ຳໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການຂີດເສັ້ນກົ່ງເທິງຊ້າຍ, ຂວາຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ ຫຼື ສໍສີ.
2. ແບບຂີດເສັ້ນກົ່ງເທິງຊ້າຍ, ຂວາທີ່ມີຮອຍຈ້ຳ.
3. ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 1 ຫຼື ເຈ້ຍແບບເສັ້ນກົ່ງເທິງຊ້າຍ, ຂວາຕາມຮອຍຈ້ຳ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງດຶງນິ້ວມື ແລະ ດີດນິ້ວມືເທື່ອລະນິ້ວ.
2. ຄູສົນທະນາກ່ຽວກັບການຂີດເສັ້ນກົ່ງຕາມຮອຍຈ້ຳ, ຕາມທິດຂອງລູກສອນ.
3. ຄູແນະນຳ ແລະ ສາທິດການຂີດເສັ້ນກົ່ງເທິງຊ້າຍ, ຂວາຕາມຮອຍຈ້ຳ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອເດັກ.
5. ໃຫ້ເດັກນຳສະເໜີຜົນງານການຂີດເສັ້ນກົ່ງເທິງຊ້າຍ, ຂວາຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນປະຕິບັດກິດຈະກຳ ແລະ ຊ່ວຍເຫຼືອກັນເກັບມ້ຽນຜົນງານໄວ້ບ່ອນທີ່ຄູກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກທິດທາງການຂີດເສັ້ນກົ່ງເທິງຊ້າຍ, ຂວາ.
2. ຄວາມຖືກຕ້ອງຂອງການຂີດເສັ້ນກົ່ງເທິງຊ້າຍ, ຂວາຕາມຮອຍຈ້ຳ.
3. ຄວາມອົດທົນໃນການຂີດເສັ້ນກົ່ງເທິງຊ້າຍ, ຂວາຕາມຮອຍຈ້ຳໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ.
2. ເຝິກການຄົ້ນຄິດ, ມີສະຕິລະວັງຕົວ ແລະ ວ່ອງໄວໃນການຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ແຂ່ງຂັນ ແກ້ຄຳທວາຍ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ຖ ຖົງ ເຖິງ ຜ ຜູ.
2. ວິທີຫຼິ້ນ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຖ ຖົງ ເຖິງ ຜ ຜູ ປະກອບທ່າທາງ.
2. ຄູສະເໜີ ແບບຫຼິ້ນ ແຂ່ງຂັນກັບແກ້ຄຳທວາຍ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນ ແຂ່ງຂັນກັບແກ້ຄຳທວາຍ.
5. ສຶກສາອົບຮົມເດັກໃຫ້ຕັ້ງໃຈຟັງຄຳທວາຍ, ມີຄວາມວ່ອງໄວໃນການແກ້ຄຳທວາຍ.
6. ໃຫ້ເດັກເຮັດທ່າທາງນົກບິນຊ້າໆ ແລ້ວປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນເວລາຫຼິ້ນແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ.
2. ການຄົ້ນຄິດ, ການມີສະຕິລະວັງຕົວ ແລະ ຄວາມວ່ອງໄວ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບໜ່ວຍມົນ 1-3

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຈຳນວນຮູບພາບໃນແຜ່ນເກມ ຢ່າງຖືກຕ້ອງ.
2. ຈັບຄູ່ຮູບໜ່ວຍມົນ 1-3 ຢ່າງຖືກຕ້ອງ.
3. ເຝິກຄວາມສາມັກຄີໃນການຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ຮູບໜ່ວຍມົນ 1-3.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບໜ່ວຍມົນ 1-3 (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບເຂົ້າ, ຜັກ, ນ້ຳດື່ມ, ໝາກກ້ວຍ, ປາ, ນົມ.
3. ບົດຄຳຄ່ອງ ຖ ຖົງ ເຖິງ ພ ພູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຖ ຖົງ ເຖິງ ພ ພ.
2. ຄູສົນທະນາກ່ຽວກັບຊື່ເກມ, ຈຳນວນຮູບພາບໃນແຜ່ນເກມ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຈຳນວນຮູບພາບ ແລະ ການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີຄວາມສາມັກຄີ ແລະ ການແບ່ງປັນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຈຳນວນຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບໜ່ວຍມົນ 1-3.
3. ຄວາມສາມັກຄີໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ມີຄວາມສາມັກຄີໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມສິລະປະສ້າງສັນ: ຂີດເສັ້ນກົ່ງຊ້າຍ ຫາ ຂວາ ແລະ ປັ້ນດິນເປັນຕົວເລກ 1-2.
2. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າ ຊື້, ຂາຍຜັກ ແລະ ໝາກໄມ້.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ປຶ້ມບົດເຝິກຫັດ ຫຼື ເຈ້ຍແບບຂີດເສັ້ນກົ່ງຊ້າຍຫາຂວາ, ສໍດຳ, ດິນສຳລັບປັ້ນ, ຜ້າຢາງຮອງ, ເສື້ອກັນເປື້ອນ ແລະ ແບບປັ້ນເລກ 1-2.
2. ມຸມບົດບາດສົມມຸດ: ຜັກ ແລະ ໝາກໄມ້ຈິງ ຫຼື ຈຳລອງ, ກະຕ່ານ້ອຍ, ຊິງຊັ່ງຂອງຈິງ ຫຼື ຈຳລອງ, ເຈ້ຍບັດເງິນ.
3. ບົດຄຳຄ່ອງ ຖ ຖົງ ເຖິງ ພ ພູ ແລະ ບັດສັນຍະລັກເຂົ້າມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຖ ຖົງ ເຖິງ ພ ພ ປະກອບທ່າທາງຕາມຈິນຕະນາການ.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ.
6. ສຶກສາອົບຮົມເດັກກ່ຽວກັບມາລະຍາດໃນເວລາຫຼິ້ນ ແລະ ຄວາມສາມັກຄີກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ.
2. ຄວາມສາມັກຄີໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບຄຳຄ່ອງ ກ ໄກເຖິງ ຕ ຕາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການຂັບຖ່າຍໃຫ້ຖືກຕ້ອງ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ກ ໄກ ເຖິງ ຕ ຕາ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດຄຳຄ່ອງ ກ ໄກ ເຖິງ ຕ ຕາ ເບິ່ງປຶ້ມຄູ່ມືຄູ.
3. ການບໍລິຫານຂາ ແລະ ແຂນ ເບິ່ງປຶ້ມຄູ່ມືຄູ.
4. ເຊືອກ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການຂັບຖ່າຍໃຫ້ຖືກຕ້ອງ.
2. ໃຫ້ເດັກບໍລິຫານຂາ ແລະ ແຂນ: ທ່າຢືນຂາດຽວເບື້ອງຊ້າຍ ແລະ ເບື້ອງຂວາ, ວາແຂນອອກ ແລະ ທ່າສະຫຼັບແຂນ.
3. ໃຫ້ເດັກເຕັ້ນຂ້າມເຊືອກ.
4. ຄູສາທິດການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ກ ໄກ ເຖິງ ຕ ຕາ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກບອນວາແຂນອອກ ແລະ ພັບແຂນເຂົ້າ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
8. ສຶກສາອົບຮົມເດັກກ່ຽວກັບ ມາລະຍາດໃນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກກ່ຽວກັບການຂັບຖ່າຍ.
2. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
3. ຄວາມປອດໄພໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້:  ປ້ອງກັນໄຂ້ຍຸງ ແລະ ຖອກທ້ອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ປ້ອງກັນພະຍາດ ຕາມຈັງຫວະ.
2. ບອກການປ້ອງກັນຕົນເອງຈາກພະຍາດໄຂ້ຍຸງ ແລະ ຖອກທ້ອງຢ່າງຖືກຕ້ອງ.
3. ບອກຕ່ຳກວ່າ, ສູງກວ່າ ແລະ ເທົ່າກັນຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ປ້ອງກັນພະຍາດ.
2. ການປ້ອງກັນຕົນເອງຈາກພະຍາດໄຂ້ຍຸງ: ລະວັງບໍ່ໃຫ້ຍຸງກັດ, ນອນໃນມຸ້ງ, ບໍ່ຢູ່ບ່ອນມືດ.
- ການປ້ອງກັນຕົນເອງຈາກພະຍາດຖອກທ້ອງ: ກິນອາຫານສຸກ, ສະອາດ, ບໍ່ມີແມງວັນຕອມ.
3. ຕ່ຳກວ່າ, ສູງກວ່າ ແລະ ສູງເທົ່າກັນ.

### III. ສື່ການຮຽນ-ການສອນ

1. ຕົວເດັກ ຫຼື ຮູບພາບເດັກນ້ອຍທີ່ມີຄວາມຕ່ຳ, ສູງ, ເທົ່າກັນ, ຮູບພາບເດັກນ້ອຍນອນໃນມຸ້ງ, ຮູບພາບອາຫານທີ່ບໍ່ສະອາດມີແມງວັນຕອມ.
2. ບົດເພງ ປ້ອງກັນພະຍາດ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບພະຍາດທີ່ເດັກເຄີຍເປັນ.
2. ໃຫ້ເດັກຮ້ອງເພງ ປ້ອງກັນພະຍາດ ແລະ ຄູສົນທະນາຖາມ-ຕອບກ່ຽວກັບເນື້ອໃນເພງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກ່ຽວກັບການປ້ອງກັນຕົນເອງຈາກພະຍາດໄຂ້ຍຸງ, ຖອກທ້ອງ ແລະ ໃຫ້ເດັກບອກການປ້ອງກັນພະຍາດ.
4. ໃຫ້ເດັກສັງເກດຮູບພາບ ຫຼື ຕົວເດັກ ແລະ ບອກລຳດັບ: ຕ່ຳກວ່າ, ສູງກວ່າ ແລະ ສູງເທົ່າກັນ.
5. ໃຫ້ເດັກຮ້ອງເພງຄືນ, ບອກລຳດັບຕ່ຳກວ່າ, ສູງກວ່າ ແລະ ສູງເທົ່າກັນ (ປະຕິບັດຕົວຈິງ).
6. ສຶກສາອົບຮົມເດັກກ່ຽວກັບການປ້ອງກັນຕົນເອງຈາກພະຍາດໄຂ້ຍຸງ ແລະ ພະຍາດຖອກທ້ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການຮ້ອງເພງ ປ້ອງກັນພະຍາດ ຕາມຈັງຫວະ.
2. ຄວາມຖືກຕ້ອງໃນການບອກການປ້ອງກັນຕົນເອງຈາກພະຍາດໄຂ້ຍຸງ ແລະ ຖອກທ້ອງ.
3. ຄວາມຖືກຕ້ອງໃນການບອກຕ່ຳກວ່າ, ສູງກວ່າ ແລະ ສູງເທົ່າກັນ.

# ກິດຈະກໍາສິລະປະສ້າງສັນ

## ຫົວຂໍ້: ປັ້ນໝ່ວຍມົນນ້ອຍ, ໃຫຍ່ວາງສະຫຼັບກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກ:

1. ບອກຮູບໝ່ວຍມົນນ້ອຍ ແລະ ໝ່ວຍມົນໃຫຍ່.
2. ເຝິກກ້າມຊີ້ນນິ້ວມື, ອົ້ງມືໃຫ້ມີຄວາມແຂງແຮງ ໂດຍການປັ້ນເປັນໝ່ວຍມົນນ້ອຍ ແລະ ໃຫຍ່.
3. ເຝິກຄວາມອົດທົນການປັ້ນເປັນໝ່ວຍມົນນ້ອຍ ແລະ ໝ່ວຍມົນໃຫຍ່ວາງສະຫຼັບກັນໃຫ້ສໍາເລັດ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນໝ່ວຍມົນນ້ອຍ ແລະ ໃຫຍ່ວາງສະຫຼັບກັນ.

### III. ສື່ການຮຽນ-ການສອນ

1. ດິນ ຫຼື ແປ້ງສໍາລັບປັ້ນ, ແບບໝ່ວຍມົນນ້ອຍ ແລະ ໝ່ວຍມົນໃຫຍ່ທີ່ປັ້ນແລ້ວ.
2. ຜ້າຢາງ ຫຼື ເຈ້ຍຮອງປັ້ນ.
3. ຊາມນໍ້າ, ສະບູ ແລະ ຜ້າເຊັດມື.
4. ບົດເພງ ຂ້ອຍຮັກຄວາມສະອາດ.
5. ຜ້າ ຫຼື ເສື້ອກັນເປື້ອນ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂ້ອຍຮັກຄວາມສະອາດ ປະກອບທ່າທາງ.
2. ຄູສົນທະນາກ່ຽວກັບໝ່ວຍມົນນ້ອຍ ແລະ ໝ່ວຍມົນໃຫຍ່.
3. ຄູແນະນໍາ ແລະ ສາທິດການປັ້ນເປັນຮູບໝ່ວຍມົນນ້ອຍ, ໃຫຍ່ວາງສະຫຼັບກັນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອເດັກ.
5. ໃຫ້ເດັກນໍາສະເໜີຜົນງານການປັ້ນໝ່ວຍມົນນ້ອຍ ແລະ ໝ່ວຍມົນໃຫຍ່.
6. ສຶກສາອົບຮົມເດັກ ໃຫ້ອົດທົນປະຕິບັດກິດຈະກໍາໃຫ້ສໍາເລັດ, ແບ່ງປັນດິນປັ້ນ, ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ ແລະ ການອະນາໄມມືໃຫ້ສະອາດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຮູບໝ່ວຍມົນນ້ອຍ ແລະ ໝ່ວຍມົນໃຫຍ່.
2. ຄວາມແຂງແຮງຂອງມືໃນການປັ້ນ.
3. ຄວາມອົດທົນການປັ້ນເປັນຮູບໝ່ວຍມົນນ້ອຍ ແລະ ໝ່ວຍມົນໃຫຍ່ວາງສະຫຼັບກັນໃຫ້ສໍາເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ຣ່າຍນໍ້າໃສ່ແກ້ວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນຣ່າຍນໍ້າໃສ່ແກ້ວ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
3. ເຝິກປະສາດສຳຜັດລະຫວ່າງມື ແລະ ສາຍຕາໃນການຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ຣ່າຍນໍ້າໃສ່ແກ້ວ.

### III. ສື່ການຮຽນ-ການສອນ

1. ບົດເພງ ປ້ອງກັນພະຍາດ.
2. ຄຸນໍ້າ, ແກ້ວ, ຈອກຕັກນໍ້າຢ່າງລະ 2 ໜ່ວຍ.
3. ຜ້າກັນເປື້ອນ.
4. ວິທີຫຼິ້ນ ເບິ່ງປື້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ປ້ອງກັນພະຍາດ ປະກອບທ່າທາງ.
2. ຄູສະເໜີ ແບບຫຼິ້ນ ຣ່າຍນໍ້າໃສ່ແກ້ວ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນຣ່າຍນໍ້າໃສ່ແກ້ວ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ຣ່າຍນໍ້າໃສ່ແກ້ວ.
5. ສຶກສາອົບຮົມເດັກໃຫ້ລະວັງບໍ່ໃຫ້ເຄື່ອງປຽກ, ລະວັງບໍ່ໃຫ້ລົ້ມ, ຫຼິ້ນຮ່ວມກັບດ້ວຍຄວາມສາມັກຄີ, ຫຼິ້ນແລ້ວລ້າງມື, ລ້າງຕີນໃຫ້ສະອາດ ແລະ ເກັບມ້ຽນອຸປະກອນ.
6. ໃຫ້ເດັກເຮັດທ່າທາງນົກບິນຊ້າໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນເວລາຫຼິ້ນແບບຫຼິ້ນ ຣ່າຍນໍ້າໃສ່ແກ້ວ .
2. ຄວາມວ່ອງໄວ ແລະ ຄວາມຄ່ອງແຄ້ວໃນໃຊ້ມືຣ່າຍນໍ້າໃສ່ແກ້ວ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບການປ້ອງກັນພະຍາດໃນຍາມໜາວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຮູບພາບທີ່ຢູ່ໃນເກມ ຢ່າງຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບການປ້ອງກັນພະຍາດໃນຍາມໜາວ ຢ່າງຖືກຕ້ອງ.
3. ຝຶກການເກັບມ້ຽນແຜ່ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບການປ້ອງກັນພະຍາດໃນຍາມໜາວ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບການປ້ອງກັນພະຍາດໃນຍາມໜາວ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູບໜ່ວຍມື້ 1-3.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການປ້ອງກັນພະຍາດໄຂ້ຍຸງ.
2. ຄູສົນທະນາກ່ຽວກັບຊື່ເກມ, ຮູບພາບທີ່ຢູ່ໃນແຜ່ນເກມ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນໃນການຫຼິ້ນເກມ ແລະ ການລໍຖ້າຕາມລຳດັບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບການປ້ອງກັນພະຍາດໃນຍາມໜາວ.
3. ການເກັບມ້ຽນແຜ່ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ ຢ່າງມ່ວນຊື່ນ.
2. ມີຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ສຳຜັດໄມ້ບັ້ງອກ ແລະ ລຽນລຳດັບໄມ້ບັ້ງອກ ແຕ່ຕ່ຳ ຫາສູງ.
2. ການຫຼິ້ນໃນມຸມອ່ານ: ສັງເກດ ແລະ ອ່ານອອກສຽງພະຍັນຊະນະປະກອບຮູບພາບໃນແຜ່ນຕົວອັກສອນ ຖ-ຜ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ໄມ້ບັ້ງອກສັ້ນ ແລະ ຍາວ.
2. ມຸມອ່ານ: ແຜ່ນຕົວອັກສອນລາວ ຫຼື ບັດພະຍັນຊະນະປະກອບຮູບພາບ ຖ-ຜ, ກະດານສຽບ ຫຼື ຕິດ.
3. ບົດເພງ ປ້ອງກັນພະຍາດ; ບັດສັນຍະລັກເຂົ້າມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ປ້ອງກັນພະຍາດ ປະກອບທ່າທາງຕາມຈິນຕະນາການ.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ.
6. ສຶກສາອົບຮົມເດັກກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ເພື່ອນ ແລະ ຄວາມສາມັກຄີກັບໝູ່ເພື່ອນໃນຫ້ອງຮຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ.
2. ຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບເພງ ປ້ອງກັນພະຍາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການປ້ອງກັນຕົນເອງຈາກພະຍາດໄຂ້ຍຸງ ແລະ ຖອກທ້ອງ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບເພງ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເພງ ປ້ອງກັນພະຍາດ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ປ້ອງກັນພະຍາດ ເບິ່ງປື້ມຄູ່ມືຄູ.
3. ການບໍລິຫານມື ແລະ ຕີນ ເບິ່ງປື້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການປ້ອງກັນຕົນເອງຈາກພະຍາດໄຂ້ຍຸງ ແລະ ຖອກທ້ອງ.
2. ໃຫ້ເດັກບໍລິຫານມື ແລະ ຕີນ: ທ່າໝູນມື, ທ່າເຢ່ງເຢ້ຂຶ້ນ ແລະ ລົງ.
3. ໃຫ້ເດັກຍ່າງກ້າວໄປທາງໜ້າ ແລະ ຖອຍຫຼັງ.
4. ຄູສາທິດການສະແດງທ່າທາງຕາມຈິນຕະນາການປະກອບເພງ ປ້ອງກັນພະຍາດ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນັ່ງສະມາທິ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເພງ.
8. ສຶກສາອົບຮົມເດັກກ່ຽວກັບມາລະຍາດໃນການສະແດງທ່າທາງຕາມຈິນຕະນາການປະກອບເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງການບອກກ່ຽວກັບການປ້ອງກັນຕົນເອງຈາກພະຍາດໄຂ້ຍຸງ ແລະ ຖອກທ້ອງ.
2. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເພງ.
3. ຄວາມປອດໄພໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳ ວົງມົນ

## ຫົວຂໍ້: ປ້ອງກັນອັກເສບປອດ ແລະ ໝາກແດງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການປ້ອງກັນຕົນເອງຈາກພະຍາດອັກເສບປອດ ແລະ ໝາກແດງຢ່າງຖືກຕ້ອງ.
2. ເວົ້າຄຳສັບຕາມຮູບພາບ, ເວົ້າເປັນປະໂຫຍກສັ້ນ, ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການປ້ອງກັນຕົນເອງຈາກພະຍາດອັກເສບປອດ: ດື່ມນ້ຳອຸ່ນ, ນຸ່ງເຄື່ອງໜາ, ໃສ່ຜ້າພັນຄໍ, ຖົງຕີນ, ເກີບ; ການປ້ອງກັນຕົນເອງຈາກພະຍາດໝາກແດງ: ສັກຢາປ້ອງກັນໃຫ້ຄົບຕາມແພດສັ່ງ, ກິນອາຫານໃຫ້ຄົບ ໝວດໝູ່ ແລະ ຮັກສາຮ່າງກາຍ ໃຫ້ສະອາດ.
2. ການເວົ້າຄຳສັບຕາມຮູບພາບ: ຜ້າ ແລະ ມຸ້ງ; ການເວົ້າເປັນປະໂຫຍກສັ້ນ: ຂ້ອຍນອນໃນມຸ້ງ.
3. ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ຜ (ຜ້າ) ແລະ ມ (ມຸ້ງ).

### III. ສື່ການຮຽນ-ການສອນ

ຮູບພາບ: ເດັກນ້ອຍເປັນຕຸ່ມໝາກແດງ, ຜ້າ, ມຸ້ງ, ບັດພະຍັນຊະນະ ຜ, ມ, ບັດຄຳສັບ: ຜ້າ, ມຸ້ງ ແລະ ບົດເພງ ປ້ອງກັນພະຍາດ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ປ້ອງກັນພະຍາດ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກ່ຽວກັບການປ້ອງກັນຕົນເອງຈາກພະຍາດອັກເສບປອດ, ໝາກແດງ ແລະ ໃຫ້ເດັກບອກການປ້ອງກັນພະຍາດ.
3. ໃຫ້ເດັກສັງເກດຮູບພາບ, ເວົ້າຄຳສັບຕາມຮູບພາບ ແລະ ເວົ້າເປັນປະໂຫຍກສັ້ນ.
4. ໃຫ້ເດັກສັງເກດບັດຄຳສັບ, ບັດພະຍັນຊະນະ ແລະ ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ ທີ່ມີ ຕົວ ຜ, ມ.
5. ໃຫ້ເດັກເວົ້າຄືນການປ້ອງກັນຕົນເອງຈາກພະຍາດ, ຈັບຮູບພາບໃຫ້ຖືກກັບຄຳສັບ, ເວົ້າເປັນປະໂຫຍກສັ້ນ ແລະ ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ.
6. ສຶກສາອົບຮົມເດັກກ່ຽວກັບການປ້ອງກັນຕົນເອງຈາກພະຍາດອັກເສບປອດ ແລະ ໝາກແດງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບການປ້ອງກັນຕົນເອງຈາກພະຍາດອັກເສບປອດ ແລະ ໝາກແດງ.
2. ຄວາມຖືກຕ້ອງການເວົ້າຄຳສັບຕາມຮູບພາບ, ການເວົ້າເປັນປະໂຫຍກສັ້ນ ແລະ ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ.

# ກິດຈະກຳ ສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບຜ້າພັນຄໍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກປະໂຫຍດຂອງຜ້າພັນຄໍ.
2. ເຝິກປະສາດສຳພັນລະຫວ່າງມືກັບສາຍຕາ ໂດຍການທາສີຮູບພາບຜ້າພັນຄໍ.
3. ທາສີຮູບພາບຜ້າພັນຄໍໃຫ້ສະອາດຈົບງາມ.

### II. ເນື້ອໃນຕົ້ນຕໍ

ການທາສີຮູບຜ້າພັນຄໍ.

### III. ສື່ການຮຽນ-ການສອນ

1. ສີໄມ້ ຫຼື ສີທຽນ.
2. ແບບຮູບຜ້າພັນຄໍທີ່ທາສີແລ້ວ ແລະ ເຈ້ຍຮູບຜ້າພັນຄໍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງແກວ່ງມື ແລະ ໂບກມື.
2. ຄູສົນທະນາກ່ຽວກັບປະໂຫຍດຂອງຜ້າພັນຄໍ.
3. ຄູແນະນຳ ແລະ ສາທິດ ການທາສີຮູບພາບຜ້າພັນຄໍ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມ ຊ່ວຍເຫຼືອເດັກ.
5. ໃຫ້ເດັກນຳສະເໜີຜົນງານການທາສີຮູບພາບຜ້າພັນຄໍ.
6. ສຶກສາອົບຮົມເດັກໃຫ້ມີຄວາມຕັ້ງໃຈປະຕິບັດກິດຈະກຳ, ທາສີຮູບພາບໃຫ້ຈົບງາມ ແລະ ການເກັບມ້ຽນຜົນງານໃຫ້ຖືກບ່ອນທີ່ຄູກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກປະໂຫຍດຂອງຜ້າພັນຄໍ.
2. ຄວາມຄ່ອງແຄ້ວ, ວ່ອງໄວໃນການທາສີຮູບຜ້າພັນຄໍ.
3. ຄວາມສະອາດຈົບງາມຂອງການທາສີຮູບຜ້າພັນຄໍ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ  ຫຼິ້ນນ້ຳ, ຫຼິ້ນຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນນ້ຳ, ຫຼິ້ນຊາຍ ປັ້ນດິນຊາຍໃຫ້ເປັນຮູບຕ່າງໆ ຮ່ວມກັບໝູ່ເພື່ອນ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ເຝິກກ້າມຊີ້ນອົ້ງມື ແລະ ນິ້ວມືໃຫ້ມີຄວາມແຂງແຮງ.
3. ເຝິກຄວາມຄິດສ້າງສັນ ແລະ ຈິນຕະນາການໃນການປັ້ນດິນຊາຍ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນນ້ຳ, ຫຼິ້ນຊາຍ  ປັ້ນດິນຊາຍ ໃຫ້ເປັນຮູບຕ່າງໆ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳ, ຊວ້ານນ້ອຍ, ເຂິງຮ່ອນຊາຍ, ຊາມໃສ່ນ້ຳ, ກະໂປະ, ແບບພິມຊາຍ.
2. ວິທີຫຼິ້ນ ເບິ່ງປື້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ໝູນຫົວເຂົ່າ.
2. ຄູສະເໜີ ແບບຫຼິ້ນ ຫຼິ້ນນ້ຳ, ຫຼິ້ນຊາຍ  ປັ້ນດິນຊາຍ ໃຫ້ເປັນຮູບຕ່າງໆ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນ ປັ້ນດິນຊາຍ ໃຫ້ເປັນຮູບຕ່າງໆ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນກ່ຽວກັບການຫຼິ້ນ  ປັ້ນດິນຊາຍ ໃຫ້ເປັນຮູບຕ່າງໆ.
5. ສຶກສາອົບຮົມເດັກ ລະວັງບໍ່ໃຫ້ເຄື່ອງປຽກ, ບໍ່ຫວ່ານຊາຍໃສ່ກັນ,ຫຼິ້ນຮ່ວມກັນ ດ້ວຍຄວາມສາມັກຄີຫຼິ້ນແລ້ວລ້າງມື, ລ້າງຕີນ ແລະ ເກັບມ້ຽນອຸປະກອນ.
6. ໃຫ້ເດັກຢືນຄ້ຳແອວເບັດຕົນຕົວໄປຂ້າງຊ້າຍ, ຂ້າງຂວາ, ຫຼັງຈາກນັ້ນປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນເວລາຫຼິ້ນແບບຫຼິ້ນ ຫຼິ້ນນ້ຳ, ຫຼິ້ນຊາຍ ປັ້ນດິນຊາຍໃຫ້ເປັນຮູບຕ່າງໆ.
2. ຄວາມແຂງແຮງຂອງມືໃນການຫຼິ້ນປັ້ນດິນຊາຍ.
3. ຄວາມຄິດສ້າງສັນ ແລະ ຈິນຕະນາການໃນການປັ້ນດິນຊາຍ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບເດັກນ້ອຍນອນໃນມຸ້ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຮູບພາບທີ່ຢູ່ໃນເກມ ຢ່າງຖືກຕ້ອງ.
2. ຕໍ່ຮູບພາບເດັກນ້ອຍນອນໃນມຸ້ງ ຢ່າງຖືກຕ້ອງ.
3. ເຝິກຄວາມອົດທົນໃນການຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບເດັກນ້ອຍນອນໃນມຸ້ງ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບເດັກນ້ອຍນອນໃນມຸ້ງ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບການປ້ອງກັນພະຍາດໃນຍາມໜາວ.
3. ບົດເພງ ປ້ອງກັນພະຍາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ປ້ອງກັນພະຍາດ.
2. ຄູສົນທະນາກ່ຽວກັບຊື່ເກມ, ຮູບພາບທີ່ຢູ່ໃນເກມ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມ.
6. ສຶກສາອົບຮົມເດັກເກັບມ້ຽນເກມໃຫ້ຖືກບ່ອນ ແລະ ເປັນລະບຽບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາາມຖືກຕ້ອງໃນການບອກຊື່ເກມ, ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບເດັກນ້ອຍນອນໃນມຸ້ງ.
3. ຄວາມອົດທົນໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ ຢ່າງຖືກຕ້ອງ.
2. ມີຄວາມສາມັກຄີໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເກມການສຶກສາ: ຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບການປ້ອງກັນພະຍາດໃນຍາມໜາວ: ເດັກນ້ອຍນຸ່ງເຄື່ອງກັນໜາວ, ເອົາຜ້າພັນຄໍ ແລະ ດື່ມນ້ຳອຸ່ນ; ຫຼິ້ນເກມຕໍ່ຮູບພາບເດັກນ້ອຍນອນໃນມຸ້ງ.
2. ການຫຼິ້ນໃນມຸມອ່ານ: ສັງເກດຮູບພາບ ແລະ ເວົ້າຄຳສັບ: ຜ້າ, ມຸ້ງ ແລະ ເວົ້າອອກສຽງພະຍັນຊະນະຕົ້ນຕາມ ຄຳສັບທີ່ມີຕົວ ຜ-ຜ້າ, ມ-ມຸ້ງ.

### III. ສື່ການຮຽນ-ການສອນ

1. ມຸມເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັບການປ້ອງກັນພະຍາດໃນຍາມໜາວ: ເດັກນ້ອຍນຸ່ງເຄື່ອງກັນໜາວ, ເດັກຜ້າພັນຄໍ ແລະ ດື່ມນ້ຳອຸ່ນ ແລະ ເກມຕໍ່ຮູບພາບເດັກນ້ອຍນອນໃນມຸ້ງ.
2. ມຸມອ່ານ: ຮູບພາບ ຜ້າ, ມຸ້ງ; ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ຜ-ຜ້າ, ມ-ມຸ້ງ; ກະດານສຽບ ຫຼື ຕິດ.
3. ບົດເພງ ປ້ອງກັນພະຍາດ; ບັດສັນຍະລັກເຂົ້າມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ປ້ອງກັນພະຍາດ ປະກອບທ່າທາງຕາມຈິນຕະນາການ.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ, ຄູຕິດຕາມ ແລະ ຊ່ວຍເຫຼືອ
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
6. ສຶກສາອົບຮົມເດັກກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນ ແລະ ຄວາມສາມັກຄີກັບໝູ່ເພື່ອນໃນຫ້ອງຮຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
2. ຄວາມສາມັກຄີໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ຈຸດປະສົງສຳລັບອາທິດທີ 4

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປ້ອງກັນຕົນເອງຈາກພະຍາດອັກເສບປອດ ແລະ ໝາກແດງ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ: ອາຫານຂອງຫຼານ, ພັກຜ່ອນ ຢ່າງມ່ວນຊື່ນ.
3. ບອກການອະນາໄມຮ່າງກາຍຕົນເອງ, ການແຕ່ງຕົວ, ການມ້ຽນເຄື່ອງໃຊ້ ຢ່າງຖືກຕ້ອງ.
4. ສະແດງທ່າທາງຕາມສຽງສັນຍານ ຢ່າງຖືກຕ້ອງ.
5. ສະແດງທ່າທາງຕາມຈິນຕະນາການປະກອບເພງ ຂ້ອຍຮັກຄວາມສະອາດ ຢ່າງມ່ວນຊື່ນ.
6. ບອກການປະຕິບັດຕົນໃນເວລາກິນອາຫານ ແລະ ດື່ມເຄື່ອງດື່ມ ຢ່າງຖືກຕ້ອງ.
7. ສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຈິນຕະນາການ ຢ່າງມ່ວນຊື່ນ.
8. ເຂົ້າຮ່ວມກິດຈະກຳຢ່າງປອດໄພ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ຮ້ອງເພງ ຂ້ອຍຮັກຄວາມສະອາດ ຕາມຈັງຫວະ ແລະ ເວົ້າຄຳສັບຕາມຮູບ ພາບ: ອາບນ້ຳ, ຖູແຂ້ວ ແລະ ເຊັດຕົນຕົວ.
2. ບອກການອະນາໄມຮ່າງກາຍຕົນເອງ ແລະ ບອກການແຕ່ງຕົວດ້ວຍຕົນອງ.
3. ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ: ຈ(ຈອກ), ອ(ອາຫານ). ແລະ ອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນ ຕົວອັກສອນ: ກ-ຮ.
4. ຟັງນິທານເລື່ອງ ນາງນ້ອຍນຸ່ງເຄື່ອງ ແລະ ຮ້ອງເພງ ລ້າງມື ຕາມຈັງຫວະ.
5. ບອກສີແດງ, ສີຟ້າ ແລະ ວາງສີຕາມແບບ.
6. ບອກການປະຕິບັດໃນການກິນອາຫານ, ດື່ມເຄື່ອງດື່ມ ແລະ ໃນເວລາຂັບຖ່າຍ.
7. ເວົ້າຄຳສັບຕາມຮູບພາບ: ໂສ້ງ, ເສື້ອ, ຖົງປື້ມ, ເກີບ, ຈອກ, ແປງຖູແຂ້ວ, ຢາຖູແຂ້ວ ແລະ ສໍດຳ.
8. ນັບປາກເປົ່າບໍ່ໃຫ້ຂ້າມ 1-10, ບອກຂະໜາດນ້ອຍ, ໃຫຍ່ ແລະ ວາງຮູບເລຂາຄະນິດຕາມຂະໜາດ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຮູບໜ່ວຍມົນ, ທໍ່ກົມ, ສີແດງ ແລະ ສີຟ້າ.
2. ເຝິກຄວາມແຂງແຮງກ້າມຊີ້ນມື ໂດຍການປັ້ນໜ່ວຍມົນ ແລະ ທໍ່ກົມວາງສະຫຼັບກັນ.
3. ເຝິກຄວາມອົດທົນໃນການປັ້ນໜ່ວຍມົນ, ຮູບທໍ່ກົມວາງສະຫຼັບກັນ ແລະ ຮູບຈອກໃຫ້ສຳເລັດ.
4. ເຝິກປະສາດສຳພັນລະຫວ່າງມືກັບສາຍຕາ ໂດຍການຮ້ອຍທໍ່ດູດສີແດງ ແລະ ສີຟ້າ ສະຫຼັບກັນ.
5. ເຝິກຄວາມຄິດສ້າງສັນ ມັກຄວາມຈົບງາມ.
6. ບອກຮູບຮ່າງຂອງຈອກ ແລະ ການຂີດເສັ້ນວົງມົນຕາມຮອຍຈ້ຳ.

7. ເຝິກກ້າມຊີ້ນອ້ງມື, ນິ້ວມືໃຫ້ມີຄວາມແຂງແຮງ ໂດຍການປັ້ນເປັນຮູບຈອກ.
8. ເຝິກກ້າມຊີ້ນມື ແລະ ຂໍ່ມືໃຫ້ມີຄວາມແຂງແຮງ ໂດຍການຂີດເສັ້ນວົງມົນຕາມຮອຍຈ້ຳ.
9. ເຝິກຄວາມສາມັກຄີໃນການເກັບມ້ຽນຜົນງານ.

## ກິດຈະກໍາການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ຫຼິ້ນແບບຫຼິ້ນ ແຂ່ງຂັນແກ້ຄໍາທວາຍ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະປອດໄພ.
2. ເຝິກການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ; ເຝິກການສັງເກດຈໍາແນກສຽງ.
3. ເຝິກການມີສະຕິລະວັງຕົວ ແລະ ຄ່ອງແຄ້ວໃນການຫຼິ້ນແບບຫຼິ້ນ ແຂ່ງຂັນແກ້ຄໍາທວາຍ.
4. ຫຼິ້ນແບບຫຼິ້ນ ແຂ່ງຂັນກັບນຸ່ງເຄື່ອງ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
5. ເຝິກປະສາດສໍາພັນລະຫວ່າງມື ແລະ ສາຍຕາໃນການ ຫຼິ້ນແບບຫຼິ້ນ ແຂ່ງຂັນກັບນຸ່ງເຄື່ອງ.
6. ຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
7. ເຝິກຄວາມຄ່ອງແຄ້ວໃນການຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ.
8. ຫຼິ້ນແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
9. ເຝິກປະສາດສໍາພັນລະຫວ່າງມື ແລະ ສາຍຕາໃນການຫຼິ້ນແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ.
10. ເຝິກຄວາມຄ່ອງແຄ້ວ, ວ່ອງໄວໃນການເກັບເຄື່ອງຫຼິ້ນໃສ່ກະຕ່າ.
11. ຫຼິ້ນ ເຄື່ອງຫຼິ້ນໃນເດີ່ນ ຂີ່ມ້າໝູນ ຮ່ວມກັບກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
12. ເຝິກການຊົງຕົວ ແລະ ຄ່ອງແຄ້ວໃນການຂີ່ມ້າໝູນ.

## ກິດຈະກໍາເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ຕໍ່ຮູບພາບ ເດັກນ້ອຍອາບນ້ຳ ຢ່າງຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍທາແປ້ງ, ເປຍຜົມ, ນຸ່ງສິ້ນ ຢ່າງຖືກຕ້ອງ.
3. ຈັດໝວດໝູ່ຮູບພາບການປະຕິບັດຕົນໃນການກິນອາຫານ ແລະ ດື່ມນ້ຳ ຢ່າງຖືກຕ້ອງ.
4. ຈັບຄູ່ທີ່ຄືກັນຮູບພາບເກີບ, ໂສ້ງຂາຍາວ, ໂສ້ງຂາສັ້ນ, ໝວດ, ຖົງພາຍ, ເສື້ອ ຢ່າງຖືກຕ້ອງ.
5. ຈັບຄູ່ຕົວເລກກັບຕົວເລກ 1-3 ຢ່າງຖືກຕ້ອງ.
6. ບອກຊື່ເກມ, ຮູບພາບທີ່ມີຢູ່ໃນເກມ ຢ່າງຖືກຕ້ອງ.
7. ເຝິກຄວາມອົດທົນ, ຄວາມສາມັກຄີໃນການຫຼິ້ນເກມ ແລະ ການເກັບມ້ຽນແຜນເກມ.

## ກິດຈະກໍາການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ, ມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມບົດບາດສົມມຸດ ຢ່າງມ່ວນຊື່ນ ແລະ ເກັບມ້ຽນເຄື່ອງຫຼິ້ນເປັນລະບຽບ.
2. ຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ ຢ່າງຖືກຕ້ອງ.
5. ມີຄວາມອົດທົນ ແລະ ຄວາມມັກຄີໃນເວລາຫຼິ້ນຮ່ວມໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວ ຕາມຈິນຕະນາການປະກອບຄຳຄ່ອງ ອາຫານຂອງຫຼານ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການປ້ອງກັນຕົນເອງຈາກພະຍາດອັກເສບປອດ ແລະ ໝາກແດງ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

## II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ອາຫານຂອງຫຼານ.

## III. ສື່ການຮຽນ-ການສອນ

1. ກະແຊັກ.
2. ບົດຄຳຄ່ອງ ອາຫານຂອງຫຼານ ເບິ່ງປຶ້ມຄູ່ມືຄູ.
3. ການບໍລິຫານມື ແລະ ຂາ ເບິ່ງປຶ້ມຄູ່ມືຄູ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການປ້ອງກັນຕົນເອງຈາກພະຍາດອັກເສບປອດ ແລະ ໝາກແດງ.
2. ໃຫ້ເດັກບໍລິຫານມື ແລະ ຂາ: ທ່າຫງາຍມືຂຶ້ນ ແລະ ລົງ, ຢຽດຂາອອກໄປທາງເບື້ອງຊ້າຍ ແລະ ເບື້ອງຂວາ.
3. ໃຫ້ເດັກຍ່າງເຕະຂາໄປທາງໜ້າ.
4. ຄູສາທິດການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ອາຫານຂອງຫຼານ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກຍືນວາແຂນຂຶ້ນ ແລະ ລົງ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
8. ສຶກສາອົບຮົມເດັກກ່ຽວກັບມາລະຍາດໃນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກກ່ຽວກັບການປ້ອງກັນຕົນເອງຈາກພະຍາດອັກເສບປອດ ແລະ ໝາກແດງ.
2. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
3. ຄວາມປອດໄພໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້:  ອະນາໄມຕົນເອງ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ຂ້ອຍຮັກຄວາມສະອາດ ຕາມຈັງຫວະ ແລະ ເວົ້າເປັນປະໂຫຍກສັ້ນຢ່າງຖືກຕ້ອງ.
2. ບອກການອະນາໄມຮ່າງກາຍຕົນເອງຢ່າງຖືກຕ້ອງ.
3. ອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນຕົວອັກສອນ: ຟ-ຮ ຢ່າງຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ຂ້ອຍຮັກຄວາມສະອາດ ຕາມຈັງຫວະ ແລະ ເວົ້າເປັນປະໂຫຍກສັ້ນ: ຂ້ອຍອາບນ້ຳ, ຂ້ອຍສະຜົມ, ຂ້ອຍລ້າງໜ້າ, ຂ້ອຍຖູແຂ້ວ, ຂ້ອຍເຊັດຕົນຕົວ.
2. ການອະນາໄມຮ່າງກາຍ: ອາບນ້ຳ, ສະຜົມ,  ລ້າງໜ້າ, ຖູແຂ້ວ ແລະ ເຊັດຕົນຕົວ.
3. ການອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນຕົວອັກສອນ: ຟ-ຮ.

## III. ສື່ການຮຽນ-ການສອນ

ບົດເພງ ຂ້ອຍຮັກຄວາມສະອາດ(ເບິ່ງປຶ້ມຄູ່ມືຄູ) ແລະ  ແຜ່ນໂປສະເຕີຕົວອັກສອນລາວ ຟ-ຮ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບການປ້ອງກັນພະຍາດຕ່າງໆ.
2. ຄູສະເໜີຊື່ເພງ, ໃຫ້ເດັກຮ້ອງ ແລະ ເວົ້າເປັນປະໂຫຍກສັ້ນ.
3. ໃຫ້ເດັກສັງເກດຮູບພາບ ແລະ ບອກການອະນາໄມຮ່າງກາຍຕົນເອງ.
4. ໃຫ້ເດັກສັງເກດແຜ່ນໂປສະເຕີຕົວອັກສອນ ແລະ ອ່ານອອກສຽງປະກອບຮູບພາບຕາມລຳດັບ: ຟ-ຮ.
5. ໃຫ້ເດັກຮ້ອງເພງຄືນ ແລະ ບອກການອະນາໄມຮ່າງກາຍ.
6. ສຶກສາອົບຮົມເດັກກ່ຽວກັບການອະນາໄມຮ່າງກາຍໃຫ້ສະອາດດ້ວຍຕົນເອງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການຮ້ອງເພງ ຂ້ອຍຮັກຄວາມສະອາດຕາມຈັງຫວະ ແລະ ຄວາມຖືກຕ້ອງໃນການເວົ້າເປັນປະໂຫຍກສັ້ນ.
2. ຄວາມຖືກຕ້ອງໃນການບອກການອະນາໄມຮ່າງກາຍຕົນເອງ.
3. ຄວາມຖືກຕ້ອງໃນການອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນຕົວອັກສອນ: ຟ-ຮ.

# ກິດຈະກຳ ສິລະປະສ້າງສັນ

## ຫົວຂໍ້:  ປັ້ນເປັນຮູບໜ່ວຍມົນ ແລະ ຮູບທໍ່ກົມວາງສະຫຼັບກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຮູບໜ່ວຍມົນ ແລະ ທໍ່ກົມ.
2. ເຝິກຄວາມແຂງແຮງກ້າມຊີ້ນມື ໂດຍການປັ້ນໜ່ວຍມົນ ແລະ ທໍ່ກົມວາງສະຫຼັບກັນ.
3. ເຝິກຄວາມອົດທົນໃນການປັ້ນໜ່ວຍມົນ ແລະ ຮູບທໍ່ກົມວາງສະຫຼັບກັນໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນໜ່ວຍມົນ ແລະ ທໍ່ກົມວາງສະຫຼັບກັນ.

### III. ສື່ການຮຽນ-ການສອນ

1. ດິນ ຫຼື ແປ້ງສຳລັບປັ້ນ, ແບບປັ້ນເປັນຮູບໜ່ວຍມົນ ແລະ ຮູບທໍ່ກົມວາງສະຫຼັບກັນ.
2. ຜ້າຢາງ ຫຼື ເຈ້ຍຮອງປັ້ນ.
3. ຊາມນ້ຳ, ສະບູ ແລະ ຜ້າເຊັດມື.
4. ຜ້າ ຫຼື ເສື້ອກັນເປື້ອນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງສັ່ນມື ແລະ ກວັກມື.
2. ຄູສົນທະນາກ່ຽວກັບຮູບຮ່າງຂອງໜ່ວຍມົນ ແລະ ທໍ່ກົມ.
3. ຄູແນະນຳ ແລະ ສາທິດການປັ້ນດິນເປັນໜ່ວຍມົນ ແລະ ທໍ່ກົມວາງສະຫຼັບກັນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອເດັກ.
5. ໃຫ້ເດັກນຳສະເໜີຜົນງານການປັ້ນດິນເປັນໜ່ວຍມົນ ແລະ ທໍ່ກົມວາງສະຫຼັບກັນ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນໃນການປະຕິບັດກິດຈະກຳ, ແບ່ງປັ້ນດິນປັ້ນໃຫ້ກັນ ແລະ ການອະນາໄມມືໃຫ້ສະອາດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກໜ່ວຍມົນ ແລະ ທໍ່ກົມ.
2. ຄວາມແຂງແຮງຂອງມືໃນການປັ້ນໜ່ວຍມົນ ແລະ ທໍ່ກົມ.
3. ຄວາມອົດທົນໃນການປັ້ນໜ່ວຍມົນ ແລະ ທໍ່ກົມວາງ ສະຫຼັບກັນໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ.
2. ເຝິກການຄົ້ນຄິດ ແລະ ຄວາມວ່ອງໄວໃນການແກ້ຄຳທວາຍ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ.

### III. ສື່ການຮຽນ-ການສອນ

1. ບົດເພງ ຂ້ອຍຮັກຄວາມສະອາດ.
2. ບັດເລກ 1, 2; ບັດຄຳທວາຍ: ຜົມ, ຕາ ແລະ ແຂ້ວ.
3. ວິທີຫຼິ້ນ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂ້ອຍຮັກຄວາມສະອາດ ປະກອບທ່າທາງ.
2. ຄູສະເໜີ ແບບຫຼິ້ນ ແຂ່ງຂັນກັນແກ້ຄຳທວາຍ ແລະ ສາທິດວິທີຫຼິ້ນແບບຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນ ກ່ຽວກັບການຫຼິ້ນແບບຫຼິ້ນ ແຂ່ງຂັນກັນແກ້ຄຳທວາຍ.
5. ສຶກສາອົບຮົມເດັກໃຫ້ຕັ້ງໃຈຟັງຄຳທວາຍ, ມີຄວາມວ່ອງໄວໃນການແກ້ຄຳທວາຍ, ບໍ່ຍາດກັນຕອບ ແລະ ຊ່ວຍກັນຄົ້ນຄິດ.
6. ໃຫ້ເດັກຄ້ຳແອວນັ່ງລົງ, ລຸກຂຶ້ນຊ້າໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນເວລາຫຼິ້ນແບບຫຼິ້ນ ແຂ່ງຂັນແກ້ຄຳທວາຍ.
2. ຄວາມວ່ອງໄວໃນການແກ້ຄຳທວາຍ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ ເດັກນ້ອຍອາບນ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຮູບພາບທີ່ຢູ່ໃນເກມ ຢ່າງຖືກຕ້ອງ.
2. ຕໍ່ຮູບພາບເກມຕາມຂັ້ນຕອນໃຫ້ເປັນຮູບ ເດັກນ້ອຍອາບນ້ຳຢ່າງຖືກຕ້ອງ.
3. ເຝິກຄວາມສາມັກຄີໃນການຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບເດັກນ້ອຍອາບນ້ຳ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບ ເດັກນ້ອຍອາບນ້ຳ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບເດັກນ້ອຍນອນໃນມຸ້ງ.
3. ບົດເພງ ຂ້ອຍຮັກຄວາມສະອາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂ້ອຍຮັກຄວາມສະອາດ.
2. ຄູສົນທະນາກ່ຽວກັບຊື່ເກມ, ຮູບພາບທີ່ຢູ່ໃນເກມຕໍ່ຮູບພາບ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບເດັກນ້ອຍອາບນ້ຳ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນໃນການຫຼິ້ນເກມ ແລະ ການລໍຖ້າຕາມລຳດັບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບ ເດັກນ້ອຍອາບນ້ຳ.
3. ຄວາມສາມັກຄີໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
2. ເກັບມ້ຽນເຄື່ອງຫຼິ້ນເຂົ້າໄວ້ຕາມມຸມເປັນລະບຽບ.

## II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນເອື້ອຍ, ອ້າຍນຸ່ງເຄື່ອງໃຫ້ນ້ອງເປັນນັກຮ້ອງຈັບໄມໂຄຼໂຟນ ຮ້ອງເພງ.
2. ການຫຼິ້ນໃນມຸມສິລະປະສ້າງສັນ: ປັ້ນເປັນໜ່ວຍມົນ, ທໍ່ກົມວາງສະຫຼັບກັນ ແລະ ທາສີຮູບພາບຜ້າພັນຄໍ.

## III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງນຸ່ງ, ຕຸກກະຕາ.
2. ມຸມສິລະປະສ້າງສັນ: ດິນວິທະຍາສາດ, ແປ້ງຫຼືດິນສຳລັບປັ້ນ, ຜ້າຢາງ, ຮູບຜ້າພັນຄໍ, ສໍສີເສື້ອກັນເປື້ອນ.
3. ບົດເພງ ຂ້ອຍຮັກຄວາມສະອາດ; ບັດສັນຍະລັກເຂົ້າມຸມ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂ້ອຍຮັກຄວາມສະອາດປະກອບທ່າທາງຕາມຈິນຕະນາການ.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກປະຕິບັດຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
6. ສຶກສາອົບຮົມເດັກກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນ ແລະ ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2. ການເກັບມ້ຽນເຄື່ອງຫຼິ້ນເຂົ້າໄວ້ຕາມມຸມພາຍຫຼັງທີ່ຫຼິ້ນແລ້ວເປັນລະບຽບ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວ ຕາມສຽງສັນຍານ ສັ່ນກະແຊັກ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການອະນາໄມຮ່າງກາຍຕົນເອງ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມສຽງສັນຍານ ຢ່າງຖືກຕ້ອງ.
3. ເຂົ້າຮ່ວມກິດຈະກຳ ຢ່າງມ່ວນຊື່ນ ແລະ ປອດໄພ.

## II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານ: ສັ່ນກະແຊັກ 1 ບາດ ເຮັດທ່າທາງນຸ່ງເສື້ອ, ສັ່ນກະແຊັກ 2 ບາດ ເຮັດທ່າທາງນຸ່ງສິ້ນ, ສັ່ນກະແຊັກ 3 ບາດ ເຮັດທ່າທາງໃສ່ເກີບ.

## III. ສື່ການຮຽນ-ການສອນ

1. ກະແຊັກ.
2. ການບໍລິຫານແຂນ ແລະ ທ້ອງ, ຫຼັງເບິ່ງປຶ້ມຄູ່ມືຄູ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການອະນາໄມຮ່າງກາຍຕົນເອງ.
2. ໃຫ້ເດັກບໍລິຫານແຂນ, ທ້ອງ ແລະ ຫຼັງ: ທ່າສະຫຼັບແຂນ, ທ່າທ້ອງ, ຫຼັງ.
3. ໃຫ້ເດັກແລ່ນຊິກແຊັກ.
4. ຄູສາທິດການສະແດງທ່າທາງຕາມສຽງສັນຍານ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນັ່ງເບັດແອວເບື້ອງຊ້າຍ ແລະ ເບື້ອງຂວາ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານ.
8. ສຶກສາອົບຮົມເດັກກ່ຽວກັບຄວາມປອດໄພໃນການສະແດງທ່າທາງຕາມສຽງສັນຍານ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການອະນາໄມຮ່າງກາຍຕົນເອງ.
2. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານ.
3. ຄວາມມ່ວນຊື່ນ ແລະ ຄວາມປອດໄພໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ແຕ່ງຕົວ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຟັງນິທານເລື່ອງ ນາງນ້ອຍນຸ່ງເຄື່ອງ ຢ່າງມ່ວນຊື່ນ ແລະ ບອກການແຕ່ງຕົວດ້ວຍຕົນເອງຢ່າງຖືກຕ້ອງ.
2. ບອກສີແດງ, ສີຟ້າ ແລະ ວາງສີຕາມແບບຢ່າງຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຟັງນິທານເລື່ອງ ນາງນ້ອຍນຸ່ງເຄື່ອງ; ການແຕ່ງຕົວ: ນຸ່ງເສື້ອ ສອດແຂນເຂົ້າເທື່ອລະແຂນ, ໃສ່ກະດຸມເສື້ອ ແລະ ປີ້ນຄໍເສື້ອອອກນອກ; ການນຸ່ງສິ້ນ ແລະ ກະໂປງ: ຈັບຫົວສິ້ນ ຫຼື ກະໂປງ, ສອດຂາເຂົ້າ, ໃສ່ອໍເກາະ ແລະ ຮິດຊິບກະໂປງ; ການນຸ່ງໂສ້ງ: ສອດຂາເຂົ້າເທື່ອລະຂາດຶງຂຶ້ນ, ໃສ່ອໍເກາະ ແລະ ຄ່ອຍຮິດຊິບຂຶ້ນ; ການໃສ່ເກີບ: ສອດຕີນເຂົ້າ ເກີບເທື່ອລະເບື້ອງ; ຫວີຜົມ: ຫວີແຕ່ເທິງລົງລຸ່ມ, ຫຼັງຈາກຫວີແລ້ວ ອາດຈະເປຍຜົມ ຫຼື ມັດຜົມໄວ້; ການທາແປ້ງ: ເທແປ້ງໃສ່ອົ້ງ ມື,ໃຊ້ມືອີກເບື້ອງໜຶ່ງແຕະແປ້ງທາໃສ່ໃບໜ້າ, ລຳຄໍ, ຕົນຕົວ, ລະວັງບໍ່ໃຫ້ແປ້ງເຂົ້າຕາ; ສີ: ສີແດງ, ສີຟ້າ ແລະ ວາງສີຕາມແບບ: ວາງຮູບໂສ້ງສີແດງ, ເສື້ອສີຟ້າສະຫຼັບກັນ 3 ຄູ່.

## III. ສື່ການຮຽນ-ການສອນ

1. ບົດນິທານເລື່ອງ ນາງນ້ອຍນຸ່ງເຄື່ອງ(ເບິ່ງປຶ້ມຄູ່ມືຄູ), ຕົວເດັກ, ເຄື່ອງນຸ່ງຂອງເດັກ ແລະ ແປ້ງ.
2. ຮູບພາບ: ເສື້ອສີແດງ 3 ແຜ່ນ, ໂສ້ງສີຟ້າ3 ແຜ່ນ ແລະ ແຜ່ນແບບການວາງເສື້ອສີແດງ, ໂສ້ງສີຟ້າ  ວາງສະຫຼັບກັນ 3 ຄູ່.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບການອະນາໄມຮ່າງກາຍ.
2. ຄູສະເໜີຊື່ນິທານ, ໃຫ້ເດັກຟັງນິທານ, ຄູສົນທະນາກ່ຽວກັບເນື້ອໃນຂອງນິທານ ແລະ ໃຫ້ເດັກບອກການແຕ່ງຕົວດ້ວຍຕົນເອງ.
3. ໃຫ້ເດັກຝຶກປະຕິບັດການແຕ່ງຕົວ,  ຄູຕິດຕາມຊ່ວຍເຫຼືອ ແລະ ບອກສີ.
4. ໃຫ້ເດັກສັງເກດແຜ່ນແບບການວາງສີ ແລະ ວາງຕາມແບບ: ຮູບພາບເສື້ອສີແດງ, ໂສ້ງສີຟ້າສະຫຼັບກັນ.
5. ໃຫ້ເດັກເວົ້າຄືນຊື່ນິທານ, ຕົວລະຄອນໃນເລື່ອງ, ບອກການແຕ່ງຕົວດ້ວຍການຫວີຜົມ ຫຼື ທາແປ້ງ, ສີ ແລະ ວາງສີຕາມແບບ.
6. ສຶກສາອົບຮົມເດັກກ່ຽວກັບການຊ່ວຍເຫຼືອຕົນເອງໃນການແຕ່ງຕົວ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການຟັງນິທານ ນາງນ້ອຍນຸ່ງເຄື່ອງ  ແລະ ຄວາມຖືກຕ້ອງໃນການຕອບຄຳຖາມ ກ່ຽວກັບການແຕ່ງຕົວດ້ວຍຕົນເອງ.
2. ຄວາມຖືກຕ້ອງໃນການບອກສີແດງ, ສີຟ້າ ແລະ ການວາງສີຕາມແບບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຮ້ອຍທໍ່ດູດສີແດງ ແລະ ສີຟ້າ ສະຫຼັບກັນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກສີແດງ ແລະ ສີຟ້າ.
2. ເຝິກປະສາດສຳພັນລະຫວ່າງມືກັບສາຍຕາ ໂດຍການຮ້ອຍທໍ່ດູດສີແດງ ແລະ ສີຟ້າ ສະຫຼັບກັນ.
3. ເຝິກຄວາມຄິດສ້າງສັນ, ຄວາມຈົບງາມໃນການຮ້ອຍ.

## II. ເນື້ອໃນຕົ້ນຕໍ

ການຮ້ອຍທໍ່ດູດສີແດງ ແລະ ສີຟ້າສະຫຼັບກັນ.

## III. ສື່ການຮຽນ-ການສອນ

1. ທໍ່ດູດສີແດງ ແລະ ສີຟ້າ, ແບບຮ້ອຍທໍ່ດູດສີແດງ ແລະ ສີຟ້າສະຫຼັບກັນ.
2. ເຊືອກຟາງ ຫຼື ເສັ້ນແລນ.
3. ບົດເພງ ຂ້ອຍຮັກຄວາມສະອາດ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂ້ອຍຮັກຄວາມສະອາດ ປະກອບທ່າທາງ.
2. ຄູສົນທະນາ ແລະ ບອກກ່ຽວກັບສີແດງ ແລະ ສີຟ້າ.
3. ຄູແນະນຳ, ສາທິດ ການຮ້ອຍທໍ່ດູດສີແດງ ແລະ ສີຟ້າສະຫຼັບກັນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອເດັກ.
5. ໃຫ້ເດັກນຳສະເໜີຜົນງານ ການຮ້ອຍທໍ່ດູດສີແດງ ແລະ ສີຟ້າສະຫຼັບກັນ.
6. ສຶກສາອົບຮົມເດັກໃຫ້ມີຄວາມຕັ້ງໃຈປະຕິບັດກິດຈະກຳ, ແບ່ງປັນທໍ່ດູດໃຫ້ກັນ ແລະ ມ້ຽນຜົນງານໃຫ້ຖືກບ່ອນທີ່ຄູກຳນົດ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກສີແດງ ແລະ ສີຟ້າ.
2. ຄວາມຄ່ອງແຄ້ວ, ວ່ອງໄວລະຫວ່າງມືກັບສາຍຕາໃນການຮ້ອຍທໍ່ດູດສະຫຼັບກັນ.
3. ຄວາມຄິດສ້າງສັນ, ຄວາມຈົບງາມຂອງການຮ້ອຍທໍ່ດູດສີແດງ ແລະ ສີຟ້າສະຫຼັບກັນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນກັນນຸ່ງເຄື່ອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ແຂ່ງຂັນກັນນຸ່ງເຄື່ອງ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ.
3. ເຝິກປະສາດສຳພັນລະຫວ່າງມື ແລະ ສາຍຕາໃນການ ຫຼິ້ນແບບຫຼິ້ນ ແຂ່ງຂັນກັນນຸ່ງເຄື່ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ແຂ່ງຂັນກັນນຸ່ງເຄື່ອງ.

### III. ສື່ການຮຽນ-ການສອນ

1. ເສື້ອ, ໂສ້ງ, ສິ້ນ ແລະ ກະໂປງ.
2. ວິທີຫຼິ້ນ ເບິ່ງປື້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື, ຢ່ຳເທົ້າຢູ່ກັບທີ່.
2. ຄູສະເໜີ ແບບຫຼິ້ນ ແຂ່ງຂັນກັນນຸ່ງເຄື່ອງ ແລະ ສາທິດວິທີຫຼິ້ນແບບຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນ ແຂ່ງຂັນກັນນຸ່ງເຄື່ອງ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນ ແຂ່ງຂັນກັນນຸ່ງເຄື່ອງ.
5. ສຶກສາອົບຮົມເດັກໃຫ້ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຕັ້ງໃຈນຸ່ງເຄື່ອງໃຫ້ຖືກຕ້ອງ ແລະ ເກັບເຄື່ອງມ້ຽນຊ່ວຍກັນ.
6. ໃຫ້ເດັກແລ່ນຊ້າໆຕາມຫຼັງກັນ, ຫຼັງຈາກນັ້ນປ່ອຍເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນເວລາຫຼິ້ນແບບຫຼິ້ນ ແຂ່ງຂັນກັນນຸ່ງເຄື່ອງ.
2. ຄວາມວ່ອງໄວໃນເວລາຫຼິ້ນແບບຫຼິ້ນນຸ່ງເຄື່ອງ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບເດັກນ້ອຍທາແປ້ງ, ເປຍຜົມ, ນຸ່ງສິ້ນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຮູບພາບທີ່ຢູ່ໃນເກມ ຢ່າງຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບເດັກນ້ອຍທາແປ້ງ, ເປຍຜົມ, ນຸ່ງສິ້ນ ຢ່າງຖືກຕ້ອງ.
3. ເຝິກການເກັບມ້ຽນແຜ່ນເກມ.

## II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບເດັກນ້ອຍທາແປ້ງ, ເປຍຜົມ, ນຸ່ງສິ້ນ.

## III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບເດັກນ້ອຍທາແປ້ງ, ເປຍຜົມ ແລະ ນຸ່ງສິ້ນ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍອາບນ້ຳ.
3. ບົດເພງ ຮ່າງກາຍຂອງຂ້ອຍ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຮ່າງກາຍຂອງຂ້ອຍ.
2. ຄູສົນທະນາກ່ຽວກັບຊື່ເກມ, ຮູບພາບທີ່ຢູ່ໃນເກມ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີຄວາມສາມັກຄີໃນການຫຼິ້ນເກມ ແລະ ການແບ່ງປັນ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບເດັກນ້ອຍທາແປ້ງ, ເປຍຜົມ, ນຸ່ງສິ້ນ.
3. ການເກັບມ້ຽນແຜ່ນເກມ.

# ກິດຈະກໍາການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ມີຄວາມສາມັກຄີຮ່ວມກັບໝູ່ເພື່ອນໃນເວລາຫຼິ້ນຕາມມຸມ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສໍາຜັດ: ວາງບັ໊ອກກ້ອນສາກສີແດງ ແລະ ສີ່ແຈ ສີຟ້າສະຫຼັບກັນ 3 ຄູ່, ນຸ່ງເສື້ອໃສ່ກະດຸມ ແລະ ມັດສາຍເກີບໃຫ້ຕຸກກະຕາ.
2. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນເອື້ອຍ, ອ້າຍປ້ອນເຂົ້າ, ອາບນໍ້າໃຫ້ນ້ອງ ແລະ ເປັນຕົວລະຄອນໃນບົດນິທານເລື່ອງ ນາງ ນ້ອຍນຸ່ງເຄື່ອງ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສໍາຜັດ: ບັ໊ອກກ້ອນສາກສີແດງ ແລະ ສີຟ້າ, ເສື້ອນ້ອຍທີ່ມີກະດຸມ, ເກີບນ້ອຍທີ່ມີສາຍມັດ ແລະ ຕຸກກະຕາ.
2. ມຸມບົດບາດສົມມຸດ: ຕຸກກະຕາ, ຊາມນ້ອຍ, ຜ້າເຊັດໜ້າ, ຖ້ວຍນ້ອຍ, ບ່ວງນ້ອຍ ແລະ ຈອກ.
3. ບົດເພງ ລ້າງມື; ບັດສັນຍະລັກເຂົ້າມຸມ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ລ້າງມືປະກອບທ່າທາງຕາມຈິນຕະນາການ.
2. ຄູແນະນໍາວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມບົດບາດສົມມຸດ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນໍາ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມບົດບາດສົມມຸດ.
6. ສຶກສາອົບຮົມເດັກກ່ຽວກັບມາລະຍາດໃນການຫຼິ້ນຮ່ວມກັບໝູ່ ແລະ ຄວາມສາມັກຄີກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການຫຼິ້ນຕາມມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມບົດບາດສົມມຸດ.
2. ຄວາມສາມັກຄີໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວ ຕາມຈິນຕະນາການປະກອບເພງ ຂ້ອຍຮັກຄວາມສະອາດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການແຕ່ງຕົວດ້ວຍຕົນເອງ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບເພງ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

## II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເພງ ຂ້ອຍຮັກຄວາມສະອາດ.

## III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ຂ້ອຍຮັກຄວາມສະອາດ ເບິ່ງປຶ້ມຄູ່ມືຄູ.
3. ການບໍລິຫານແຂນ ແລະ ຕີນ ເບິ່ງປຶ້ມຄູ່ມືຄູ.
4. ເຊືອກ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການແຕ່ງຕົວ.
2. ໃຫ້ເດັກບໍລິຫານແຂນ ແລະ ຕີນ: ໝູນແຂນ ແລະ ໝູນຄໍ່ຕີນ.
3. ໃຫ້ເດັກເຕັ້ນຂ້າມເຊືອກ.
4. ຄູສາທິດການສະແດງທ່າທາງຕາມຈິນຕະນາການປະກອບເພງ ຂ້ອຍຮັກຄວາມ ສະອາດ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນອນເອົາຂາໄຂວ່ກັນ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເພງ.
8. ສຶກສາອົບຮົມເດັກກ່ຽວກັບມາລະຍາດໃນການສະແດງທ່າທາງຕາມຈິນຕະນາການ ປະກອບເພງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການແຕ່ງຕົວດ້ວຍຕົນເອງ.
2. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເພງ.
3. ຄວາມປອດໄພ ໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ການປະຕິບັດຕົນໃນການກິນ ແລະ ດື່ມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ລ້າງມື ຕາມຈັງຫວະ; ບອກການປະຕິບັດຕົນໃນການກິນອາຫານ, ດື່ມເຄື່ອງດື່ມ ຢ່າງຖືກຕ້ອງ.
2. ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ລ້າງມື ຕາມຈັງຫວະ ແລະ ການປະຕິບັດຕົນໃນການກິນອາຫານ: 1. ຮ້ອງເພງ ລ້າງມື ຕາມຈັງຫວະ; ການປະຕິບັດຕົນເວລາກິນອາຫານ: ກ່ອນກິນອາຫານ ຕ້ອງລ້າງມືເຊັດດ້ວຍຜ້າສະອາດ, ຈັບບ່ວງດ້ວຍການໃຊ້ນິ້ວໂປ້, ນິ້ວຊີ້, ນິ້ວກາງຈັບກ້ານ ບ່ວງຕັກອາຫານເທື່ອລະໜ້ອຍໃສ່ປາກ, ຫຍໍ້າອາຫານໃຫ້ແຫຼກກ່ອນກືນ, ກິນອາຫານໃຫ້ໝົດ, ກິນອາຫານໃຫ້ຖືກເວລາ; ການດື່ມ: ເລືອກເຄື່ອງດື່ມສະອາດ, ນຳໃຊ້ຈອກຂອງຕົນເອງ, ເວລາດື່ມນໍ້າໃຫ້ຄ່ອຍໆດື່ມ.
2. ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ຈ(ຈອກ) ແລະ ອ(ອາຫານ).

### III. ສື່ການຮຽນ-ການສອນ

1. ຮູບພາບ: ເດັກນ້ອຍກິນອາຫານ, ດື່ມນໍ້າ, ຈອກ.
2. ບັດພະຍັນຊະນະ ຈ, ອ; ບັດຄຳສັບ: ຈອກ, ອາຫານ; ບົດເພງລ້າງມື (ເບິ່ງປຶ້ມຄູ່ມືຄູ); ຈອກ, ບ່ວງ, ຖ້ວຍ, ອາຫານ ແລະ ນໍ້າດື່ມ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບການກິນອາຫານ.
2. ຄູສະເໜີຊື່ເພງ, ໃຫ້ເດັກຮ້ອງ ແລະ ຄູສົນທະນາຖາມ-ຕອບກ່ຽວກັບເນື້ອໃນບົດເພງ.
3. ໃຫ້ເດັກສັງເກດວັດຖຸຕົວຈິງ, ຄູສົນທະນາຖາມ-ຕອບກ່ຽວກັບການກິນອາຫານ, ດື່ມເຄື່ອງດື່ມ ແລະ ໃຫ້ເດັກບອກການປະຕິບັດຕົນໃນການກິນ, ດື່ມ.
4. ໃຫ້ເດັກສັງເກດບັດຄຳສັບ, ບັດພະຍັນຊະນະ ແລະ ເວົ້າອອກສຽງພະຍັນຊະນະຕົ້ນຕາມ ຄຳສັບທີ່ມີຕົວ ຈ, ອ.
5. ໃຫ້ເດັກຮ້ອງເພງຄືນ, ບອກການປະຕິບັດຕົນ ແລະ ເວົ້າອອກສຽງພະຍັນຊະນະຕາມຄຳສັບ.
6. ສຶກສາອົບຮົມເດັກກ່ຽວກັບມາລະຍາດໃນການກິນອາຫານ ແລະ ດື່ມເຄື່ອງດື່ມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການຮ້ອງເພງລ້າງມື ຕາມຈັງຫວະ ແລະ ຄວາມຖືກຕ້ອງໃນການບອກປະຕິບັດຕົນໃນການ ກິນອາຫານ ແລະ ດື່ມເຄື່ອງດື່ມ.
2. ຄວາມຖືກຕ້ອງໃນການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນເປັນຮູບຈອກ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຮູບຮ່າງຂອງຈອກ.
2. ເຝິກກ້າມຊີ້ນອົ້ງມື, ນິ້ວມືໃຫ້ມີຄວາມແຂງແຮງ ໂດຍການປັ້ນເປັນຮູບຈອກ.
3. ເຝິກຄວາມອົດທົນໃນການປັ້ນເປັນຮູບຈອກໃຫ້ສຳເລັດ.

## II. ເນື້ອໃນຕົ້ນຕໍ

ການປັ້ນເປັນຮູບຈອກ.

## III. ສື່ການຮຽນ-ການສອນ

1. ດິນ ຫຼື ແປ້ງສຳລັບປັ້ນ, ແບບປັ້ນຮູບຈອກ.
2. ຜ້າຢາງ ຫຼື ເຈ້ຍຮອງປັ້ນ.
3. ຊາມນ້ຳ, ສະບູ ແລະ ຜ້າເຊັດມື.
4. ບົດເພງ ລ້າງມື.
5. ຜ້າ ຫຼື ເສື້ອກັນເປື້ອນ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ລ້າງມື ປະກອບທ່າທາງ.
2. ຄູສົນທະນາກ່ຽວກັບຮູບຮ່າງຂອງຈອກ.
3. ຄູແນະນຳ ແລະ ສາທິດການປັ້ນດິນເປັນຈອກ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມແນະນຳເດັກ.
5. ໃຫ້ເດັກນຳສະເໜີຜົນງານ ການປັ້ນດິນເປັນຈອກ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນປະຕິບັດກິດຈະກຳ, ແບ່ງປັນດິນປັ້ນໃຫ້ກັນ, ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ ແລະ ການອະນາໄມມືໃຫ້ສະອາດ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຮູບຮ່າງຂອງຈອກ.
2. ຄວາມແຂງແຮງຂອງກ້າມຊີ້ນອົ້ງມື ແລະ ນິ້ວມືໃນການປັ້ນ.
3. ຄວາມອົດທົນໃນການປັ້ນຮູບຈອກໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແບ້ກິນໝາກເຂືອ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
2. ເຝິກການສັງເກດ ແລະ ຈຳແນກສຽງ.
3. ເຝິກຄວາມຄ່ອງແຄ້ວ, ວ່ອງໄວໃນການຫຼົບຫຼີກເພື່ອບໍ່ໃຫ້ໝູ່ຈັບໄດ້.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ.

## III. ສື່ການຮຽນ-ການສອນ

1. ຜ້າມັດຕາ 1 ຜືນ.
2. ບົດເພງ ລ້າງມື.
3. ວິທີຫຼິ້ນເບິ່ງປຶ້ມຄູ່ມືຄູ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ລ້າງມື ປະກອບທ່າທາງ.
2. ຄູສະເໜີແບບຫຼິ້ນ ແບ້ກິນໝາກເຂືອ ແລະ ສາທິດວິທີຫຼິ້ນແບບຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ.
5. ສຶກສາອົບຮົມເດັກໃຫ້ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ມີຄວາມວ່ອງໄວໃນການຫຼິ້ນ, ຫຼິ້ນແລ້ວເກັບອຸປະກອນຊ່ວຍກັນ.
6. ໃຫ້ເດັກຍ່າງຕາມຫຼັງກັນຊ້າໆເປັນຮູບວົງມົນ, ຫຼັງຈາກນັ້ນປ່ອຍໃຫ້ເດັກຫຼິ້ນຕາມໃຈ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນການຫຼິ້ນແບບຫຼິ້ນ ແບ້ກິນໝາກເຂືອ.
2. ການສັງເກດ ແລະ ຈຳແນກສຽງໄດ້ຊັດເຈນ.
3. ຄວາມຄ່ອງແຄ້ວ, ວ່ອງໄວໃນການຫຼົບຫຼີກເພື່ອບໍ່ໃຫ້ໝູ່ຈັບໄດ້.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັດໝວດໝູ່ຮູບພາບການປະຕິບັດຕົນໃນການກິນອາຫານ ແລະ ດື່ມນ້ຳ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ, ຮູບພາບທີ່ຢູ່ໃນເກມ ຢ່າງຖືກຕ້ອງ.
2. ຈັດໝວດໝູ່ຮູບພາບການປະຕິບັດຕົນໃນການກິນອາຫານ ແລະ ດື່ມນ້ຳ ຢ່າງຖືກຕ້ອງ.
3. ເຝິກຄວາມສາມັກຄີໃນການຫຼິ້ນເກມ.

## II. ເນື້ອໃນຕົ້ນຕໍ

ການຈັດໝວດໝູ່ຮູບພາບການປະຕິບັດຕົນໃນການກິນອາຫານ ແລະ ດື່ມນ້ຳ: ເດັກນ້ອຍຍິງ ແລະ ຊາຍຈັບບ່ວງ, ກິນອາຫານ, ຈັບຈອກ ແລະ ດື່ມນ້ຳ.

## III. ສື່ການຮຽນ-ການສອນ

1. ແຜ່ນເກມຈັດໝວດໝູ່ຮູບພາບການປະຕິບັດຕົນໃນການກິນອາຫານ ແລະ ດື່ມນ້ຳ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບເດັກນ້ອຍທາແປ້ງ, ເປຍຜົມ, ນຸ່ງສິ້ນ.
3. ບົດເພງ ລ້າງມື.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ລ້າງມື.
2. ຄູສົນທະນາກ່ຽວກັບຊື່ເກມ, ຮູບພາບທີ່ຢູ່ໃນເກມຈັດໝວດໝູ່ຮູບພາບ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັດໝວດໝູ່ຮູບພາບ.
6. ສຶກສາອົບຮົມເດັກເກັບມ້ຽນເກມໃຫ້ຖືກບ່ອນ ແລະ ເປັນລະບຽບ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັດໝວດໝູ່ຮູບພາບການປະຕິບັດຕົນໃນການກິນອາຫານ ແລະ ດື່ມນ້ຳ.
3. ຄວາມສາມັກຄີໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມເກມການສຶກສາແລະ ມຸມອ່ານ ຢ່າງຖືກຕ້ອງ.
2. ມີຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເກມການສຶກສາ: ຈັດໝວດໝູ່ຮູບພາບການປະຕິບັດຕົນໃນການກິນ ແລະ ດື່ມ: ເດັກນ້ອຍຍິງ ແລະ ຊາຍກິນອາຫານ ແລະ ດື່ມນ້ຳ; ຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບຊຸ ເດັກນ້ອຍແຕ່ງຕົວ: ທາແປ້ງ, ເປຍຜົມ ແລະ ນຸ່ງສິ້ນ.
2. ການຫຼິ້ນໃນມຸມອ່ານ: ການສັງເກດຮູບພາບຫຼື ແຜ່ນຕົວອັກສອນ ແລະອ່ານອອກສຽງພະຍັນຊະນະ ຟ-ຮ ແລະ ເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ ຈ (ຈອກ), ອ (ອາຫານ).

### III. ສື່ການຮຽນ-ການສອນ

1. ມຸມເກມການສຶກສາ: ເກມຈັດໝວດໝູ່ຮູບພາບການປະຕິບັດຕົນໃນການກິນອາຫານ ແລະ ດື່ມນ້ຳ: ເດັກນ້ອຍຍິງ ແລະ ຊາຍກິນອາຫານ, ຈັບຈອກ ແລະ ດື່ມນ້ຳ, ເກມຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍແຕ່ງຕົວ: ທາແປ້ງ, ເປຍຜົມ ແລະ ນຸ່ງສິ້ນ.
2. ມຸມອ່ານ: ບັດພະຍັນຊະນະປະກອບຮູບພາບ ຫຼື ແຜ່ນຕົວອັກສອນ ຟ-ຮ, ບັດຕົວພະຍັນຊະນະ ຈ, ອ; ບັດຄຳສັບຈອກ, ອາຫານ; ກະດານສຽບ ຫຼື ຕິດ.
3. ບົດເພງ ລ້າງມື; ບັດສັນຍະລັກເຂົ້າມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ລ້າງມືປະກອບທ່າທາງຕາມຈິນຕະນາການ.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ .
6. ສຶກສາອົບຮົມເດັກກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນ ແລະ ຄວາມສາມັກຄີກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
2. ຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວ ເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການປະຕິບັດຕົນໃນເວລາກິນອາຫານ ແລະ ດື່ມເຄື່ອງດື່ມ ຢ່າງມ່ວນຊື່ນ.
2. ສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ: ພັບເສື້ອ, ຫ້ອຍຖົງປື້ມ ແລະ ມ້ຽນເກີບ.

### III. ສື່ການຮຽນ-ການສອນ

ການບໍລິຫານຂາ ແລະ ທ້ອງ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການປະຕິບັດຕົນໃນເວລາກິນອາຫານ ແລະ ດື່ມເຄື່ອງດື່ມ.
2. ໃຫ້ເດັກບໍລິຫານຂາ, ທ້ອງ ແລະ ຫຼັງ: ຢືນກອດເຂົ່າຂາດຽວຊ້າຍ-ຂວາ, ທ່າທ້ອງ ແລະ ຫຼັງ.
3. ໃຫ້ເດັກຍ່າງຕາມທາງແຄບ 20 ຊັງຕີແມັດ, ຍາວ 3 ແມັດ.
4. ຄູສາທິດການສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກຢືນກົ້ມແກວ່ງແຂນ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ.
8. ສຶກສາອົບຮົມເດັກກ່ຽວກັບຄວາມປອດໄພໃນການສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການປະຕິບັດຕົນໃນເວລາກິນອາຫານ ແລະ ດື່ມເຄື່ອງດື່ມ.
2. ຄວາມມ່ວນຊື່ນໃນການສະແດງທ່າທາງເປັນຜູ້ນຳພາ ແລະ ຜູ້ປະຕິບັດຕາມ ຕາມຈິນຕະນາການ.
3. ຄວາມປອດໄພ ໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ເກັບມ້ຽນເຄື່ອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການເກັບມ້ຽນເຄື່ອງໃຊ້ຂອງຕົນເອງ ແລະ ເວົ້າຄຳສັບຕາມຮູບພາບຢ່າງຖືກຕ້ອງ.
2. ນັບປາກເປົ່າບໍ່ໃຫ້ຂ້າມ 1-10, ບອກຂະໜາດນ້ອຍ-ໃຫຍ່ ແລະ ວາງຮູບເລຂາຄະນິດຕາມຕາມຂະໜາດຢ່າງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການເກັບມ້ຽນເຄື່ອງໃຊ້ຂອງຕົນເອງ: ໝວກ, ໂສ້ງ, ເສື້ອ, ຖົງປຶ້ມ ຫຼື ກະເປົ໋າ, ຈອກ, ແປງຖູແຂ້ວ, ຢາຖູແຂ້ວ, ປຶ້ມ, ສໍດຳ, ເກີບ ໄວ້ບ່ອນທີ່ກຳນົດໃຫ້ເປັນລະບຽບ.
2. ການເວົ້າຄຳສັບຕາມຮູບພາບ: ໂສ້ງ, ເສື້ອ, ຖົງປຶ້ມ, ເກີບ, ຈອກ, ແປງຖູແຂ້ວ, ຢາຖູແຂ້ວ, ສໍດຳ.
3. ການນັບປາກເປົ່າບໍ່ໃຫ້ຂ້າມ: 1-10, ຂະໜາດ: ນ້ອຍ, ໃຫຍ່ ແລະ ວາງຮູບເລຂາຄະນິດຕາມຕາມຂະໜາດ: ວາງຮູບວົງມົນນ້ອຍ, ໃຫຍ່ສະຫຼັບກັນ 3 ຄູ່ ສີແດງ.

### III. ສື່ການຮຽນ-ການສອນ

1. ຮູບພາບ ຫຼື ເຄື່ອງໃຊ້ຕົວຈິງ: ໂສ້ງ, ເສື້ອ, ຖົງປຶ້ມ, ເກີບ,ຈອກ, ແປງຖູແຂ້ວ, ຢາຖູແຂ້ວ, ກະເປົ໋າ, ປຶ້ມ, ສໍດຳ.
2. ຮູບເລຂາຄະນິດ: ວົງມົນນ້ອຍ 3 ອັນ, ວົງມົນໃຫຍ່ 3 ອັນ ແລະ ແຜ່ນແບບວາງຮູບເລຂາຄະນິດ: ວົງມົນນ້ອຍ ແລະ ໃຫຍ່ວາງສະຫຼັບກັນ 3 ຄູ່.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກັບເດັກກ່ຽວກັບເຄື່ອງໃຊ້ຂອງເດັກ.
2. ໃຫ້ເດັກສັງເກດຮູບພາບ ຫຼື ເຄື່ອງໃຊ້ຕົວຈິງ, ຄູສົນທະນາຖາມ-ຕອບກ່ຽວກັບການເກັບມ້ຽນເຄື່ອງ ໃຊ້, ເວົ້າຄຳສັບຕາມຮູບພາບ ແລະ ເດັກນັບປາກເປົ່າ 1-10 ບໍ່ໃຫ້ຂ້າມ.
3. ໃຫ້ເດັກສັງເກດແຜ່ນແບບການວາງຮູບ, ວາງຮູບວົງມົນນ້ອຍ, ໃຫຍ່ສະຫຼັບກັນ 3 ຄູ່ ແລະ ບອກຂະໜາດນ້ອຍ, ໃຫຍ່.
4. ໃຫ້ເດັກເວົ້າຄືນການເກັບມ້ຽນເຄື່ອງໃຊ້, ນັບປາກເປົ່າ, ຈັບຮູບພາບໃຫ້ຖືກກັບຄຳສັບ ແລະ ບອກຮູບເລຂາຄະນິດ.
5. ສຶກສາອົບຮົມເດັກກ່ຽວກັບການເກັບມ້ຽນເຄື່ອງໃຊ້ຂອງຕົນເອງໃຫ້ຖືກບ່ອນທີ່ກຳນົດໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບການເກັບມ້ຽນເຄື່ອງໃຊ້ຂອງຕົນເອງ ແລະ ການເວົ້າຄຳສັບຕາມຮູບພາບ.
2. ຄວາມຖືກຕ້ອງໃນ ການນັບປາກເປົ່າ 1-10, ການບອກຂະໜາດນ້ອຍ, ໃຫຍ່ ແລະ ການວາງຮູບເລຂາຄະນິດຕາມຂະໜາດ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນວົງມົນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກທິດທາງການຂີດເສັ້ນວົງມົນຕາມຮອຍຈ້ຳ.
2. ເຝິກກ້າມຊີ້ນມື ແລະ ຄໍ່ມືໃຫ້ມີຄວາມແຂງແຮງ ໂດຍການຂີດເສັ້ນວົງມົນຕາມຮອຍຈ້ຳ.
3. ເຝິກຄວາມສາມັກຄີໃນການເກັບມ້ຽນຜົນງານ.

## II. ເນື້ອໃນຕົ້ນຕໍ

ການຂີດເສັ້ນວົງມົນຕາມຮອຍຈ້ຳ.

## III. ສື່ການຮຽນ-ການສອນ

1. ສໍດຳ ຫຼື ສໍສີ.
2. ເຈ້ຍແບບຂີດເສັ້ນວົງມົນຕາມຮອຍຈ້ຳທີ່ຂີດແລ້ວ.
3. ປຶ້ມບົດເຝິກຫັດພາລາວເຫຼັ້ມ 1 ຫຼື ເຈ້ຍແບບເສັ້ນວົງມົນຕາມຮອຍຈ້ຳ.
4. ບົດຄຳຄ່ອງ ຖ ຖົງ ເຖິງ ຜ ພູ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຖ ຖົງ ເຖິງ ຜ ພູ ປະກອບທ່າທາງ.
2. ຄູສົນທະນາກ່ຽວກັບການຂີດເສັ້ນວົງມົນຕາມຕາມຮອຍຈ້ຳ.
3. ຄູແນະນຳ ແລະ ສາທິດການຂີດເສັ້ນວົງມົນຕາມຮອຍຈ້ຳ.
4. ໃຫ້ເດັກປະຕິບັດຕົວຈິງ, ຄູຕິດຕາມ ແລະ ຊ່ວຍແນະນຳເດັກ.
5. ໃຫ້ເດັກນຳສະເໜີຜົນງານການຂີດເສັ້ນວົງມົນຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນປະຕິບັດກິດຈະກຳ ແລະ ຊ່ວຍເຫຼືອກັນເກັບມ້ຽນຜົນງານໄວ້ບ່ອນທີ່ຄູກຳນົດ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກທິດທາງການຂີດເສັ້ນວົງມົນຕາມຮອຍຈ້ຳ.
2. ຄວາມແຂງແຮງຂອງການໃຊ້ກ້າມຊີ້ນມື ແລະ ຄໍ່ມືໃນການຂີດເສັ້ນວົງມົນ ຕາມຮອຍຈ້ຳ.
3. ຄວາມສາມັກຄີໃນການເກັບມ້ຽນຜົນງານ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ ຮ່ວມກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
2. ເຝິກປະສາດສຳພັນລະຫວ່າງມື, ສາຍຕາໃຫ້ຄ່ອງແຄ້ວ ແລະ ວ່ອງໄວ.
3. ເຝິກຄວາມແຂງແຮງຂອງກ້າມຊີ້ນຂາໃນເວລາແລ່ນ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນ ແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ.

## III. ສື່ການຮຽນ-ການສອນ

1. ເຄື່ອງຫຼິ້ນຕ່າງໆ.
2. ວິທີຫຼິ້ນ ເບິ່ງປຶ້ມຄູ່ມືຄູ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຕົບມື ແລະ ນັບປາກເປົ່າ 1-10.
2. ຄູສະເໜີແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນ  ເກັບເຄື່ອງຫຼິ້ນໃສ່ກະຕ່າ.
5. ສຶກສາອົບຮົມເດັກໃຫ້ວ່ອງໄວໃນການເກັບເຄື່ອງຫຼິ້ນ, ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຫຼິ້ນແລ້ວຊ່ວຍກັນເກັບມ້ຽນເຄື່ອງຫຼິ້ນ ແລະ ອະນາໄມຕົນມືໃຫ້ສະອາດ.
6. ໃຫ້ເດັກຄ້ຳແອວເຢ່ງເຢ້ຂຶ້ນ, ລົງ, ຫຼັງຈາກນັ້ນປ່ອຍໃຫ້ເດັກຫຼິ້ນຕາມໃຈ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນເວລາຫຼິ້ນແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ.
2. ຄວາມ ຄ່ອງແຄ້ວ, ວ່ອງໄວໃນການຫຼິ້ນ.
3. ຄວາມແຂງແຮງຂອງກ້າມຊີ້ນຂາໃນເວລາແລ່ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບເກີບ, ໂສ້ງຂາຍາວ, ໂສ້ງຂາສັ້ນ, ໝວກ, ຖົງພາຍ, ເສື້ອ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ຮູບພາບທີ່ຢູ່ໃນເກມ ຢ່າງຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບເກີບ,ໂສ້ງຂາຍາວ, ໂສ້ງຂາສັ້ນ, ໝວກ, ຖົງພາຍ, ເສື້ອ ຢ່າງຖືກຕ້ອງ.
3. ເຝິກຄວາມອົດທົນໃນການຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບເກີບ, ໂສ້ງຂາຍາວ, ໂສ້ງຂາສັ້ນ, ໝວກ, ຖົງພາຍ, ເສື້ອ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄູກັນຮູບພາບເກີບ, ໂສ້ງຂາຍາວ, ໂສ້ງຂາສັ້ນ, ໝວກ, ຖົງພາຍ, ເສື້ອ (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັດໝວດໝູ່ຮູບພາບການປະຕິບັດຕົນໃນການກິນອາຫານ ແລະ ດື່ມນໍ້າ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບເຄື່ອງໃຊ້ຂອງເດັກ.
2. ຄູສົນທະນາກ່ຽວກັບຊື່ເກມ, ຮູບພາບທີ່ຢູ່ໃນເກມ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມເກມ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນໃນການຫຼິ້ນເກມ ແລະ ການລໍຖ້າຕາມລຳດັບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບເກີບ, ໂສ້ງຂາຍາວ, ໂສ້ງຂາສັ້ນ, ໝວກ, ຖົງພາຍ, ເສື້ອ.
3. ຄວາມອົດທົນໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
2. ມີຄວາມສາມັກຄີຮ່ວມກັບໝູ່ເພື່ອນໃນເວລາຫຼິ້ນຕາມມຸມ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອນຫຼິ້ນສຳຜັດ: ສຳຜັດເຄື່ອງດົນຕີ, ກອງ, ກະແຊັກ ແລະ ຈັບໄມ້ຮ້ອງເພງ.
2. ການຫຼິ້ນໃນມຸມສິລະປະສ້າງສັນ: ຮ້ອຍທໍ່ດູດສີແດງ, ສີຟ້າສະຫຼັບກັນ ແລະ ຂີດເສັ້ນວົງມົນ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ເຄື່ອງດົນຕີ ກອງ, ກະແຊັກ ແລະ ໄມໂຄຼໂຟນ.
2. ມຸມສິລະປະສ້າງສັນ: ເຊືອກ, ທໍ່ດູດສີແດງ, ສີຟ້າ, ປຶ້ມບົດເຝິກຫັດ ຫຼື ເຈ້ຍແບບຂີດເສັ້ນວົງມົນ, ສໍດຳ ແລະ ສໍສີ.
3. ບັດສັນຍະລັກເຂົ້າມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນັບປາກເປົ່າຕາມລຳດັບແຕ່ 1-10.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
6. ສຶກສາອົບຮົມເດັກກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ ແລະ ຄວາມສາມັກຄີກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
2. ຄວາມສາມັກຄີໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວ ຕາມຈິນຕະນາການ ປະກອບຄຳຄ່ອງ ພັກຜ່ອນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການເກັບມ້ຽນເຄື່ອງໃຊ້ຂອງຕົນເອງ ຢ່າງຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ຢ່າງມ່ວນຊື່ນ.
3. ເຂົ້າຮ່ວມກິດຈະກຳ ຢ່າງປອດໄພ.

## II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງພັກຜ່ອນ.

## III. ສື່ການຮຽນ-ການສອນ

1. ກອງ.
2. ບົດຄຳຄ່ອງ ພັກຜ່ອນ ເບິ່ງປຶ້ມຄູ່ມືຄູ.
3. ການບໍລິຫານແຂນ ແລະ ຕີນ ເບິ່ງປຶ້ມຄູ່ມືຄູ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບການເກັບມ້ຽນເຄື່ອງ.
2. ໃຫ້ເດັກບໍລິຫານແຂນ ແລະ ຕີນ: ສະຫຼັບແຂນ ແລະ ຢ່ຳຕີນຂຶ້ນ-ລົງ.
3. ໃຫ້ເດັກແລ່ນຕາມສຽງເພງ.
4. ຄູສາທິດການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ ພັກຜ່ອນ.
5. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນັ່ງຫງ່ຽງລຳຄໍຊ້າຍ-ຂວາ ແລະ ກົ້ມຫົວລົງໜ້າ-ຫຼັງ.
7. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
8. ສຶກສາອົບຮົມເດັກກ່ຽວກັບມາລະຍາດໃນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການເກັບມ້ຽນເຄື່ອງ.
2. ຄວາມມວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.
3. ຄວາມປອດໄພ ໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳວົງມົນ

## ຫົວຂໍ້: ການປະຕິບັດຕົນໃນເວລາຂັບຖ່າຍ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການປະຕິບັດຕົນໃນເວລາຂັບຖ່າຍຢ່າງຖືກຕ້ອງ.
2. ອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນຕົວອັກສອນ ກ-ຮ ຢ່າງຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

1. ການປະຕິບັດຕົນໃນເວລາຂັບຖ່າຍ: ເວລາຖ່າຍແລ້ວຕ້ອງເຊັດ ຫຼື ລ້າງກົ້ນໃຫ້ສະອາດ, ລ້າງຫົວວິດ, ລ້າງມືໃສ່ສະບູໃຫ້ສະອາດ ແລະ ເຊັດມືດ້ວຍຜ້າສະອາດ.
2. ການອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນຕົວອັກສອນ: ກ-ຮ.

## III. ສື່ການຮຽນ-ການສອນ

1. ຫ້ອງນ້ຳໃນໂຮງຮຽນ.
2. ຮູບພາບ: ເດັກນ້ອຍໃຊ້ຫ້ອງນ້ຳ ແລະ ແຜ່ນໂປສະເຕີຕົວອັກສອນລາວ ກ-ຮ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາຖາມ-ຕອບກ່ຽວກັບການໃຊ້ຫ້ອງນ້ຳ.
2. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາຖາມ-ຕອບກ່ຽວກັບການຊ່ວຍເຫຼືອຕົນເອງໃນເວລາຂັບຖ່າຍ ແລະ ໃຫ້ເດັກບອກການປະຕິບັດຕົນໃນການຂັບຖ່າຍ.
3. ໃຫ້ເດັກເຝິກປະຕິບັດການໃຊ້ຫ້ອງນ້ຳ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກສັງເກດແຜ່ນໂປສະເຕີຕົວອັກສອນລາວ ແລະ ອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນຕົວອັກສອນ: ກ-ຮ.
5. ໃຫ້ເດັກເວົ້າຄືນການປະຕິບັດຕົນໃນເວລາຂັບຖ່າຍ ແລະ ອ່ານອອກສຽງພະຍັນຊະນະປະກອບຮູບພາບ.
6. ສຶກສາອົບຮົມເດັກກ່ຽວກັບການອະນາໄມຕົນເອງໃນເວລາເຂົ້າຫ້ອງນ້ຳ ແລະ ຫ້ອງຖ່າຍ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບການປະຕິບັດຕົນໃນເວລາຂັບຖ່າຍ.
2. ຄວາມຖືກຕ້ອງໃນການອ່ານອອກສຽງພະຍັນຊະນະປະກອບຮູບພາບຕາມລຳດັບໃນແຜ່ນຕົວອັກສອນ ກ-ຮ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນຫົວພະຍັນຊະນະຕົວ ບ ແລະ ຕົວ ຍ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຄວາມແຕກຕ່າງກັນຂອງຫົວພະຍັນຊະນະ ຕົວ ບ ແລະ ຕົວ ຍ.
2. ເຝິກປະສາດສຳພັນລະຫວ່າງມື ກັບສາຍຕາ ໂດຍການຂີດເສັ້ນຫົວພະຍັນຊະນະຕົວ: ບ ແລະ ຕົວ ຍ ຕາມຮອຍຈ້ຳ.
3. ເຝິກຄວາມອົດທົນໃນການຂີດເສັ້ນຫົວພະຍັນຊະນະ ຕົວ ບ ແລະ ຕົວ ຍ ຕາມຮອຍຈ້ຳ.

## II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຫົວພະຍັນຊະນະຕົວ: ບ ແລະ ຕົວ ຍ ຕາມຮອຍຈ້ຳ.

## III. ສື່ການຮຽນ-ການສອນ

1. ສໍດຳ ຫຼື ສໍສີ
2. ແບບຂີດເສັ້ນຫົວພະຍັນຊະນະຕົວ ບ ແລະ ຕົວ ຍ ທີ່ຂີດເສັ້ນແລ້ວ.
3. ປື້ມບົດເຝິກຫັດພາສາລາວ ເຫຼັ້ມ 1 ຫຼື ເຈ້ຍຮູບພະຍັນຊະນະຕົວ: ບ ແລະ ຕົວ ຍ ທີ່ມີຮອຍຈ້ຳ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກໃຊ້ມືເຮັດທ່າທາງຂີດເສັ້ນເທິງກາງຫາວ.
2. ຄູສົນທະນາກ່ຽວກັບຄວາມແຕກຕ່າງກັນຂອງຫົວພະຍັນຊະນະ ຕົວ ບ ແລະ ຕົວ ຍ.
3. ຄູແນະນຳ ແລະ ສາທິດ ການຂີດເສັ້ນຫົວພະຍັນຊະນະ ຕົວ ບ ແລະ ຕົວ ຍ ຕາມຮອຍຈ້ຳ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມແນະນຳ.
5. ໃຫ້ເດັກນຳສະເໜີຜົນງານ ການຂີດເສັ້ນຫົວພະຍັນຊະນະ ຕົວ ບ ແລະ ຕົວ ຍ ຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກໃຫ້ເດັກມີຄວາມອົດທົນປະຕິບັດກິດຈະກຳ, ຂີດຂຽນໃຫ້ຖືກຕາມຄຳແນະນຳຂອງຄູ ແລະ ເກັບມ້ຽນຜົນງານໃຫ້ຖືກບ່ອນທີ່ຄູກຳນົດ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຄວາມແຕກຕ່າງກັນຂອງຫົວພະຍັນຊະນະຕົວ ບ ແລະ ຕົວ ຍ.
2. ຄວາມອົດທົນໃນການຂີດເສັ້ນຫົວພະຍັນຊະນະຕົວ ບ ແລະ ຕົວ ຍ ຕາມຮອຍຈ້ຳ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນ ຂີ່ມ້າໝູນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນ ເຄື່ອງຫຼິ້ນໃນເດີ່ນ ຂີ່ມ້າໝູນຮ່ວມກັນກັບໝູ່ເພື່ອນຢ່າງມ່ວນຊື່ນ ແລະ ປອດໄພ.
2. ເຝິກການຊົງຕົວ ແລະ ຄ່ອງແຄ້ວໃນການຂີ່ມ້າໝູນ.
3. ເຝິກຄວາມອົດທົນລໍຖ້າຕາມລຳດັບກ່ອນ ແລະ ຫຼັງ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຂີ່ມ້າໝູນ.

## III. ສື່ການຮຽນ-ການສອນ

1. ມ້າໝູນ.
2. ວິທີຫຼິ້ນ ເບິ່ງປື້ມຄູ່ມືຄູ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກໃຊ້ສອງມືຄ້ຳແອວກະໂດດຢູ່ກັບທີ່.
2. ຄູສະເໜີການຫຼິ້ນ ຂີ່ມ້າໝູນ ແລະ ສາທິດວິທີຫຼິ້ນ.
3. ໃຫ້ເດັກຫຼິ້ນ ຂີ່ມ້າໝູນ, ຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຂີ່ມ້າໝູນ.
5. ສຶກສາອົບຮົມເດັກໃນເວລາຂີ່ມ້າໝູນໃຫ້ຈັບຮາວໃຫ້ແໜ້ນ, ບໍ່ງວາກຊ້າຍ, ງວາກຂວາ, ອົດທົນລໍຖ້າຕາມລຳດັບຕົນເອງຈຶ່ງຫຼິ້ນຂີ່ມ້າໝູນ.
6. ໃຫ້ເດັກຄ້ຳແອວ ຍືດຕົວຂຶ້ນສູງໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກຫຼິ້ນຕາມໃຈ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ປອດໄພໃນເວລາຫຼິ້ນເຄື່ອງຫຼິ້ນ ຂີ່ມ້າໝູນ.
2. ການຊົງຕົວ ແລະ ຄວາມຄ່ອງແຄ້ວໃນເວລານັ່ງຂີ່ມ້າໝູນ.
3. ຄວາມອົດທົນລໍຖ້າຕາມລຳດັບຂອງຕົນໃນການຫຼິ້ນຂີ່ມ້າໝູນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຕົວເລກກັບຕົວເລກ 1-3

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຕົວເລກທີ່ຢູ່ໃນເກມ ຢ່າງຖືກຕ້ອງ.
2. ຈັບຄູ່ຕົວເລກກັບຕົວເລກ 1-3 ຢ່າງຖືກຕ້ອງ.
3. ເຝິກການເກັບມ້ຽນແຜ່ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ຕົວເລກກັບຕົວເລກ 1-3.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຕົວເລກກັບຕົວເລກ 1-3 (ເກມສຳລັບຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບເກີບ, ໂສ້ງຂາຍາວ, ໂສ້ງຂາສັ້ນ, ໝວກ, ຖົງພາຍ, ເສື້ອ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບພະຍັນຊະນະລາວ.
2. ຄູສົນທະນາກ່ຽວກັບຊື່ເກມ ແລະ ຕົວເລກໃນແຜ່ນເກມ.
3. ຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຕົວເລກ ແລະ ການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີຄວາມສາມັກຄີໃນການຫຼິ້ນເກມ ແລະ ການແບ່ງປັນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຕົວເລກໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຕົວເລກກັບຕົວເລກ 1-3.
3. ການເກັບມ້ຽນແຜ່ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ ຢ່າງຖືກຕ້ອງ.
2. ມີຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນເກມໃນມຸມອ່ານ: ສັງເກດຮູບພາບ ຫຼື ແຜ່ນຕົວອັກສອນ ແລະ ອ່ານອອກສຽງພະຍັນຊະນະ ກ-ຮ.
2. ການຫຼິ້ນໃນມຸມເກມການສຶກສາ: ຫຼິ້ນເກມຈັບຄູ່ຕົວເລກກັບຕົວເລກ 1-3, ຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບເກີບ, ໂສ້ງຂາຍາວ, ໂສ້ງຂາສັ້ນ, ໝວກ, ຖົງພາຍ, ເສື້ອ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ບັດພະຍັນຊະນະປະກອບຮູບພາບ ຫຼື ແຜ່ນຕົວໂປສະເຕີຕົວອັກສອນລາວ ກ-ຮ, ກະດານສຽບ ຫຼື ຕິດ.
2. ມຸມເກມການສຶກສາ: ເກມຈັບຄູ່ຕົວເລກກັບຕົວເລກ 1-3, ເກມຈັບຄູ່ທີ່ຄືກັນຮູບພາບເກີບ, ໂສ້ງ ຂາຍາວ, ໂສ້ງຂາສັ້ນ, ໝວກ, ຖົງພາຍ, ເສື້ອ; ກະດານສຽບ ຫຼື ຕິດ.
3. ບັດສັນຍະລັກເຂົ້າມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນັບປາກເປົ່າຕາມລຳດັບແຕ່ 1 ເຖິງ 10.
2. ຄູແນະນຳວິທີຫຼິ້ນ, ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
3. ໃຫ້ເດັກເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ .
6. ສຶກສາອົບຮົມເດັກກ່ຽວກັບການແບ່ງປັນເຄື່ອງຫຼິ້ນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
2. ຄວາມອົດທົນໃນເວລາຫຼິ້ນຕາມມຸມຮ່ວມກັບໝູ່ເພື່ອນ.

# ເອກະສານອ້າງອີງ


## ກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ

1. ປື້ມຄູ່ມືການຈັດກິດຈະກໍາການສອນຊັ້ນອະນຸບານ ກະຊວງສຶກສາທິການກົມສາມັນ ເດືອນ ມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
2. ປື້ມວິທີສອນກາຍະສຶກສາ ກຸ່ມວິທີສອນສາຍສ້າງຄູອະນຸບານລະບົບ 2 ປີ ປີທີ 2 ອຸປະຖໍາໂດຍອົງການພັດທະນາສາກົນ ປະເທດສະວີເດັນ (Sida) ພາຍໃຕ້ໂຄງການພັດທະນາການສ້າງຄູ ແລະ ຍົກຖານະຄູ (TTEST) ພິມຄັ້ງທີ 1 ພິມທີ່ Nhan Dan Printing House HCMC ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ ປີ 2009.
3. ປື້ມແຜນຈັດປະສົບການຊັ້ນອະນຸບານ 1 ກະຊວງສຶກສາທິການ ກົມສາມັນ ເດືອນມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
4. ຄູ່ມືຄູພະລະສຶກສາ, ຫັດຖະກໍາ, ສິລະປະກໍາ, ສິລະປະດົນຕີຊັ້ນປະຖົມປີທີ ໜຶ່ງ ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.
5. ໜັງສືຮຽນລາຍວິຊາພື້ນຖານສຸຂະສຶກສາ ແລະ ພະລະສຶກສາຊັ້ນປະຖົມສຶກສາປີທີ 1 ກຸ່ມ ແລະ ການຮຽນຮູ້ສຸຂະສຶກສາ ແລະ ພະລະສຶກສາຕາມຫຼັກສູດແກນກາງການສຶກສາຂັ້ນພື້ນຖານ 2551.

## ກິດຈະກໍາວົງມົນ

6. ຄູ່ມືຄູການຈັດກິດຈະກໍາການຮຽນ-ການສອນຊັ້ນອະນຸບານກົມສາມັນສຶກສາ ກະຊວງສຶກສາທິການ
7. ຫຼັກການສອນເດັກກ່ອນໄວຮຽນລະບົບ 11+3 ກະຊວງສຶກສາທິການ ປີ 2008.

## ກິດຈະກໍາສິລະປະສ້າງສັນ

8. ຄູ່ມືຄູກິດຈະກໍາສ້າງສັນ (ສິລະປະສຶກສາ) ຊັ້ນອະນຸບານ ປີ 1992.
9. ກະຊວງສຶກສາທິການ, ກົມສາມັນສຶກສາຄູ່ມືຄູກິດຈະກໍາການສອນຊັ້ນອະນຸບານ ປີ 2005.
10. ກະຊວງສຶກສາທິການ, ປື້ມຫຼັກການສອນອະນຸບານ ລະບົບ 11+2 ປີ 2008 (ໜ້າ 93).

## ກິດຈະກໍາການຫຼິ້ນກາງແຈ້ງ

11. ຄູ່ມືຄູ ກິດຈະກໍາກາງແຈ້ງ ຊັ້ນອະນຸບານ ກະຊວງສຶກສາ ປີ 1990.
12. ຄູມືຄູ ກິດຈະກໍາການສອນ ຊັ້ນອະນຸບານ ກະຊວງສຶກສາ ປີ 1990 ໜ້າທີ 102,105,106,131.
13. ປື້ມຄູມື ກ່ຽວກັບການພັດທະນາການສຶກສາເດັກອະນຸບານສະມາຄົມເອຊຽນ ອິບາຣາກິ ກອງທຶນເພື່ອການສຶກສາກະຊວງສຶກສາທິການ.
14. ປື້ມແບບຮຽນວິຊາຫຼັກການສອນເດັກກ່ອນໄວຮຽນລະບົບ 11+2 ກົມສ້າງຄູ ກະຊວງສຶກສາທິການ ປີ 2004 (ບົດທີ 11 ກິດຈະກໍາກາງແຈ້ງ).
15. ຄູ່ມືການຈັດກິດຈະກໍາເກມ ແລະ ການຫຼິ້ນກາງແຈ້ງສໍາລັບເດັກລະດັບກ່ອນໄວປະຖົມສຶກສາ ສໍານັກງານ ຄະນະກໍາມະການປະຖົມສຶກສາແຫ່ງຊາດ ກະຊວງສຶກສາທິການ ເອກະສານກອງວິຊາການອັນດັບທີ 74/2530 ISBN 974-8018-34-2.

## ກິດຈະກໍາເກມການສຶກສາ

16. ປື້ມແຜ່ນຈັດປະສົບການ ຊັ້ນອະນຸບານ 1 ເຫຼັ້ມ 1, ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ).
17. ປື້ມວິຊາ: ຫຼັກການສອນ 11 + 3 ສົກຮຽນ 2008 (ກະຊວງສຶກສາທິການ-ກົມສ້າງຄູ).
18. ຄູ່ມືການຈັດກິດຈະກໍາເກມ ແລະ ການຫຼິ້ນກາງແຈ້ງສໍາລັບເດັກລະດັບກ່ອນໄວປະຖົມສຶກສາ ສໍານັກງານ ຄະນະກໍາມະການປະຖົມສຶກສາແຫ່ງຊາດ ກະຊວງສຶກສາທິການ ເອກະສານກອງວິຊາການອັນດັບທີ 74/2530 ISBN 974-8018-34-2.

## ກິດຈະກໍາການຫຼິ້ນຕາມມຸມ

19. ປື້ມ ວິຊາຊອກຮູ້ສະພາບແວດລ້ອມ 11 + 3 ປີ 2008 (ກະຊວງສຶກສາທິການ-ກົມສ້າງຄູ).
20. ປື້ມ ແຜນຈັດປະສົບການຊັ້ນອະນຸບານ 1 ເຫຼັ້ມ 1 ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ)
21. ປື້ມ ການພັດທະນາໂຮງຮຽນຄຸນນະພາບ, ຄູ່ມື ຄູສອນຫ້ອງກຽມປະຖົມ (ກະຊວງສຶກສາ 2010).